

# ນິທານຍີ່ປຸ່ນສຸດມ່ວນ

ແປໂດຍ ອຸທິນ ບຸນຍາວົງ •ສຸມັນທາ ກັນລະຍາ

ຈາກ: *Japanese Children's Favorite Stories*

*edited by Florence Sakade*

ອຸປະຖຳໂດຍ

ມູນນິທິ ໂຕໂຢຕາ

**THE TOYOTA FOUNDATION**

# ນິທານຍີ່ປຸ່ນສຸດມ່ວນ

ແປໂດຍ : ອຸທິນ ບຸນຍາວົງ
ສຸບັນທາ ກັນລະຍາ

ແປຈາກພາສາອັງກິດ : Japanese Children's Favorite Stories, edited by Florence Sakade, illustrated by Yoshisuke Kurosaki.

ຮູບປະກອບ : ສຸບັນທາ ກັນລະຍາ ( ແຕ້ມຈາກຮູບເດີມ )
ຄອມພິວເຕີ : ອຸດົມພອນ ບຸນຍາວົງ

ພິມທີ່ ໂຮງພິມແຫ່ງລັດ
ຈຳນວນ 2.000 ຫົວ
ຕາມ ລອພ 39/ພຕປ 031096

© ບົດແປສະຫງວນລິຂະສິດໂດຍ **ໄຜ່ໜາມການພິມ**
ພິມເທື່ອທີໜຶ່ງ
ເດືອນ ຕຸລາ 1996



# ຄຳນຳ

ເດັກນ້ອຍມັກນິທານ ທັງນິທານລາວ ແລະຕ່າງປະເທດ. ໂຮມຢູ່ໃນປຶ້ມຫົວນີ້ແມ່ນນິທານຍີ່ປຸ່ນ ຊຶ່ງຄັດເລືອກວ່າ ເປັນເລື່ອງມ່ວນຕິດອົກຕິດໃຈ ເດັກນ້ອຍຍີ່ປຸ່ນຫລາຍທີ່ສຸດ, ແລະເມື່ອແປເປັນພາສາອັງກິດ ກໍເປັນທີ່ນິຍົມໄປທົ່ວໂລກ. ບາງເລື່ອງຄືນິທານລາວ, ອັນນີ້ບໍ່ແມ່ນເລື່ອງແປກ ເພາະນິທານບາງເລື່ອງອອກຈາກແຫລ່ງດຽວກັນຄືເລື່ອງກ່ຽວກັບສາສະໜາ ແລະແຕ່ລະສາສະໜາ ກໍສອນໃຫ້ເປັນຄົນດີ ມີປະໂຫຍດຕໍ່ສັງຄົມ. ດັ່ງນີ້ ນິທານເລື່ອງດຽວກັນຈຶ່ງເລົ່າກັນຢູ່ຫລາຍແຫ່ງໃນໂລກ ຫາກມີລາຍລະອຽດແຕກຕ່າງກັນໄປຕາມສະພາບຂອງແຕ່ລະທ້ອງຖິ່ນ.

ສຳນັກພິມຍີ່ປຸ່ນ ກ່າວໄວ້ໃນຄຳນຳວ່າ: ຜູ້ປົກຄອງ ແລະຄູທົ່ວໂລກຕ່າງກໍພະຍາຍາມຫລາຍຂຶ້ນ ທີ່ຈະລ້ຽງລູກຫລານໃຫ້ເຕີບໃຫຍ່ຂຶ້ນມາເປັນພົນລະເມືອງດີຂອງໂລກ ແລະເປັນຜູ້ໃຫຍ່ທີ່ມີຄວາມນຶກຄິດປອດໃສ, ແລະເມື່ອພູມໃຈໃນມໍລະດົກທາງວັດທະນະທຳຂອງຕົນແລ້ວ ກໍຕ້ອງບໍ່ມີແນວຄິດທີ່ຖືວ່າ ຊາດຕົນເໜືອກວ່າຊາດອື່ນ, ບໍ່ສ້າງຄວາມພິພາດບາດໝາງ ຫລືຄວາມລະແວງສົງໃສຕໍ່ກັນ ອັນພາໃຫ້ເກີດຄວາມຫາຍະນະດັ່ງໃນອະດີດ ທີ່ເຄີຍປະສົບມາແລ້ວ. ເພື່ອໃຫ້ເປັນໄປຕາມຄວາມປະສົງດັ່ງກ່າວ ຜູ້ປົກຄອງແລະຄູມີຄວາມຕ້ອງການປຶ້ມ ອັນຈະຊ່ວຍໃຫ້ເດັກນ້ອຍເກີດຄວາມຮູ້ສຶກທີ່ດີຕໍ່ກັນເຫັນອົກເຫັນໃຈກັນ ແລະເຂົ້າໃຈວິຖີຊີວິດ ແລະວັດທະນະທຳ ຂອງ

ເພື່ອນມະນຸດ ທີ່ຢູ່ແຫ່ງອື່ນໆຂອງໂລກ. ປຶ້ມຫົວນີ້ຈະປະກອບສ່ວນຕື່ມເຂົ້າໃຫ້ ຕາມຄວາມຕ້ອງການດັ່ງກ່າວໄດ້ພໍສົມຄວນ.

ຜູ້ແປເຫັນວ່າ ປຶ້ມຫົວນີ້ຈະເປັນປະໂຫຍດຫລາຍທັງໃນການພັດທະນາການອ່ານ ແລະການສ້າງຄວາມມ່ວນຊື່ນ ແກ່ເດັກນ້ອຍ, ດັ່ງນີ້ຈຶ່ງໄດ້ຈັດພິມເປັນຫົວອອກມາ ເພື່ອເປັນສິ່ງປະດັບໄວ້ໃນວົງການໜັງສືເດັກ ຕໍ່ໄປ.

**ອຸທິນ ບຸນຍາວົງ**
ຜູ້ແປ



# ສາລະບານ


| | | ຫນ້າ |
|---|---|---|
| ນົກຮິບໄມ້ຈິ້ມແຂ້ວ | *ອຸທິນ ບຸນຍາວົງ* | 1 |
| ຫມໍ້ກາວິເສດ | *ອຸທິນ ບຸນຍາວົງ* | 6 |
| ທ້າວຫມາກລາຍ | *ອຸທິນ ບຸນຍາວົງ* | 13 |
| ຜີດັງງວງ | *ສຸບັນທາ ກັນລະຍາ* | 19 |
| ຕົ້ນແປກອາກົ້ມ | *ອຸທິນ ບຸນຍາວົງ* | 24 |
| ແມງມຸມຕໍ່າຫູກ | *ອຸທິນ ບຸນຍາວົງ* | 28 |
| ນົກຈອກລີ້ນກຸດ | *ສຸບັນທາ ກັນລະຍາ* | 33 |
| ກະຕ່າຍໃນດວງຈັນ | *ສຸບັນທາ ກັນລະຍາ* | 38 |
| ຊາຍເຕັ້ນຄືລີງ ຍິງເຕັ້ນຄືນົກ | *ສຸບັນທາ ກັນລະຍາ* | 41 |
| ຊາບູໂຣ ໂງ່ຄືຕໍ | *ສຸບັນທາ ກັນລະຍາ* | 46 |
| ທ້າວນ້ອຍຫນຶ່ງນິ້ວ | *ສຸບັນທາ ກັນລະຍາ* | 50 |
| ເຫງັນຫາງພວງ ກັບວິວິເສດ | *ອຸທິນ ບຸນຍາວົງ* | 56 |
| ແມງກະພູນດູກມຸ່ນ | *ອຸທິນ ບຸນຍາວົງ* | 62 |
| ເຟືອງພາໂຊກ | *ອຸທິນ ບຸນຍາວົງ* | 66 |
| ຜູ້ບັນດານຕົ້ນໄມ້ບານດອກ | *ອຸທິນ ບຸນຍາວົງ* | 70 |
| ປູກັບລີງ | *ອຸທິນ ບຸນຍາວົງ* | 76 |
| ຍັກກັບໄກ່ | *ອຸທິນ ບຸນຍາວົງ* | 79 |
| ກະຕ່າຍຂ້າມທະເລ | *ອຸທິນ ບຸນຍາວົງ* | 84 |
| ຮູບປັ້ນກະຕັບຍູ | *ສຸບັນທາ ກັນລະຍາ* | 87 |
| ລີງຫາງກົ້ນ | *ສຸບັນທາ ກັນລະຍາ* | 92 |





# ນັກຮີບໄມ້ຈິ້ມແຂ້ວ



ປາງກ່ອນກີ້ ມີເຈົ້າຍິງອົງໜຶ່ງທີ່ປະພຶດຕົນບໍ່ດີຈັກດີ້, ຄື ກາງຄືນມານາງມັກນອນຈິ້ມແຂ້ວ ຢູ່ເທິງບ່ອນນອນ. ແຕ່ອັນນີ້ກໍບໍ່ຖືວ່າເປັນເລື່ອງຖ່ອຍປານໃດ, ອັນທີ່ແຮ່ງເຕັກໄປກວ່ານັ້ນກໍຄື ຫລັງຈາກທີ່ຈິ້ມແຂ້ວແລ້ວ ແທນທີ່ນາງຈະເອົາໄມ້ຈິ້ມແຂ້ວໄປຖິ້ມ ນາງຊ້ຳສຽບມັນລົງລະຫວ່າງຮອຍພັບຂອງສາດເຟືອງ ທີ່ປູເປັນພື້ນເຮືອນຂອງຊາວຍີ່ປຸ່ນທົ່ວໄປ ແລະເປັນພື້ນຊຶ່ງເຈົ້າຍິງເອງກໍນອນເຊັ່ນດຽວກັນ. ອັນນີ້ເປັນນິດໄສບໍ່ຮຽບຮ້ອຍ ບໍ່ມັກສະອາດແທ້ໆ.

ໃນເມື່ອເຈົ້າຍິງເຮັດແນວນີ້ທຸກໆຄືນ ໄມ້ຈີ້ມແຂ້ວທີ່ໃຊ້ແລ້ວ ຈຶ່ງເຕັມອະຍະຢູ່ຕາມຮອຍພັບຂອງສາດປູພື້ນເຮືອນນັ້ນ.

ຄືນໜຶ່ງ ເຈົ້າຍິງຊວາດຕື່ນຂຶ້ນປຸບປັບທັນໃດ ຍ້ອນມີສຽງດັງຈາກການສູ້ຮົບກັນ. ນາງໄດ້ຍິນສຽງຂອງເຫລົ່ານັກຮົບ ແລະ ສຽງງ້າວກະທົບກັນ. ດ້ວຍຄວາມຢ້ານສັ່ນເຊັນ ນາງລຸກນັ່ງ ແລະ ໄຕ້ຕະກຽງທີ່ຢູ່ຂ້າງໆນັ້ນ ແລ້ວກໍຕື່ນຕາຕື່ ເມື່ອເຫັນແນວໜຶ່ງ ຊຶ່ງນາງເກືອບບໍ່ເຊື່ອສາຍຕາຕົນເອງ.

ຢູ່ກະໂຕແຄມເສື່ອນອນຂອງນາງນັ້ນ ມີນັກຮົບຕົວນ້ອຍໆ ຈຳນວນຫລວງຫລາຍ, ບາງພ່ອງຕໍ່ສູ້ກັນ, ບາງພ່ອງຮ້ອງເພງ ແລະເຕັ້ນລຳ, ທັງໝົດພາກັນສົ່ງສຽງອຶກກະທຶກ.

ເຈົ້າຍິງຄິດວ່າຕົນເອງຝັນໄປ, ດັ່ງນັ້ນນາງຈຶ່ງຢິກຕົນເອງລອງເບິ່ງ. ແຕ່ບໍ່ນ່າ, ນາງບໍ່ຝັນຈັກດີ້, ນາງຍັງຕື່ນມີນຕາໂຫ້ໂລ້ຢູ່. ສ່ວນເຫລົ່ານັກຮົບນ້ອຍກໍຍັງຢູ່ຕາມເດີມ ສົ່ງສຽງແສບຫູຢູ່ຕໍ່ໄປ. ສຽງນັ້ນດັງອຶກກະທຶກຈົນນາງຫລັບບໍ່ລົງ. ແຕ່ເມື່ອເຖິງຄາວທີ່ນາງເລີ່ມເຊືອບຫລັບນາງກໍຕື່ນສະເດີດ ເພາະວ່າບັນຍາກາດມິດງຽບເປັນຊອຍວອຍ. ເຫລົ່ານັກຮົບນ້ອຍກໍໜີໄປຈ້ອຍທັງໝົດ.

ເຈົ້າຍິງຢ້ານຫລາຍ, ແຕ່ນາງຊໍ້າພັດໜ້າອາຍ ຖ້າຈະທູນບອກພະຍາ ຜູ້ເປັນບິດາ, ເພາະເພິ່ນອາດຈະບໍ່ເຊື່ອກໍໄດ້. ແນວໃດກໍຕາມເມື່ອນາງເຂົ້ານອນໃນຄືນຖັດມາ ເຫດການແບບເກົ່າກໍເກີດຂຶ້ນເຊັ່ນດຽວກັນ.

ນັກຮົບຕົວນ້ອຍໆເຮັດສຽງດັງລົບກວນທຸກໆຄືນ ຈົນເຈົ້າຍິງນອນບໍ່ຫລັບລົງໄດ້, ນາງຈຶ່ງຫລ່າເຫລືອງລົງນຳທຸກມື້. ບໍ່ດົນເຈົ້າຍິງກໍເຈັບປ່ວຍ ດ້ວຍອາການນອນບໍ່ຫລັບ.

ຝ່າຍບິດາ ພະຍາຍາມສໍ້ຖາມນາງວ່າເປັນຫຍັງ, ຖາມແລ້ວຖາມອີກ, ໃນທີ່ສຸດ ນາງກໍຈຶ່ງເລົ່າເລື່ອງສູ່ບິດາຟັງ. ທໍາອິດບິດາບໍ່ເຊື່ອ ຕາມທີ່ທິດາເວົ້າ, ແຕ່ໃນທີ່ສຸດ ພະອົງກໍຕັດສິນໃຈ ໄປເບິ່ງດ້ວຍຕາຕົນເອງ. ພະອົງບອກທິດາໃຫ້ມານອນຢູ່ຫ້ອງຂອງພະອົງ, ສ່ວນພະອົງເອງຈະໄປຕິດຕາມເບິ່ງຢູ່ຫ້ອງຂອງເຈົ້າຍິງ.

ແລ້ວພະອົງກໍເຮັດຕາມທີ່ໄດ້ກ່າວໄວ້. ຫາກແຕ່ວ່າ ຕະຫລອດທັງຄືນນັ້ນ ເຖິງແມ່ນວ່າພະອົງຈະບໍ່ຫລັບບໍ່ນອນ ແຕ່ພວກນັກຣິບຕົວນ້ອຍໆ ບໍ່ປາກົດໃຫ້ເຫັນເລີຍ. ແນວໃດກໍຕາມ ເວລາທີ່ຖ້າເບິ່ງຢູ່ນັ້ນ ພະອົງກໍສັງເກດເຫັນໄມ້ຈິ້ມແຂ້ວ ຈໍານວນຫລາຍຢູ່ຕາມພື້ນຫ້ອງ, ເມື່ອແນມເບິ່ງຄັກໆ ໃນທີ່ສຸດ ພະອົງກໍເຂົ້າໃຈແຈ້ງວ່າເກີດຫຍັງຂຶ້ນຢູ່ໃນຫ້ອງນີ້.

ມື້ຕໍ່ມາ ອົງບິດາໄດ້ເອີ້ນທິດາເຂົ້າມາຫາແລ້ວຊີ້ໃຫ້ເບິ່ງໄມ້ຈິ້ມແຂ້ວໄມ້ໜຶ່ງ ຊຶ່ງມີຮອຍຂາດ ຮອຍບິ່ນ. ຮອຍເຫລົ່ານີ້ນ້ອຍຫລາຍຈົນເຈົ້າຍິງເບິ່ງເກືອບບໍ່ເຫັນ. ນາງຖາມອົງບິດາວ່າ ຮອຍເຫລົ່ານີ້ໝາຍຄວາມວ່າແນວໃດ.

ຝ່າຍອົງບິດາອະທິບາຍວ່າ ນັກຣິບຕົວນ້ອຍໆໄດ້ເຂົ້າມາໃນຫ້ອງຂອງເຈົ້າຍິງ ທັງນີ້ເພາະ ເຈົ້າຍິງປະໄມ້ຈິ້ມແຂ້ວໄວ້ທົ່ວຫ້ອງ.

ພວກນັກຣິບບໍ່ມີງ້າວເປັນຂອງຕົນເອງ ຈຶ່ງຢາກໄດ້ງ້າວທີ່ສຸດ. ດັ່ງນັ້ນໄມ້ຈິ້ມແຂ້ວ ຈຶ່ງເປັນງ້າວຊະນິດໜຶ່ງໄດ້ດີທີ່ສຸດສໍາລັບນັກຣິບຕົວນ້ອຍໆ ແລະນັ້ນແຫລະ ຄືເຫດຜົນທີ່ເຫລົ່ານັກຣິບນ້ອຍມາບ່ອນນີ້ທຸກຄືນ.

ເພິ່ນກ່າວຕື່ມວ່າ ຄືນທີ່ຜ່ານມາ ນັກຣິບບໍ່ພາກັນມາ ເພາະພະອົງເອງໄປຢູ່ຫ້ອງນັ້ນ ພ້ອມດ້ວຍງ້າວທີ່ແທ້ຈິງ, ພວກນັກຣິບເລີຍ



ພາກັນຢ້ານ. ຕໍ່ມາພະຍາແນມເບິ່ງຫນ້າເຈົ້າຍິງຢ່າງເຄັ່ງຂຶມ ແລ້ວຖາມຂຶ້ນວ່າ ເປັນຫຍັງຈິ່ງມີໄມ້ຈິ້ມແຂ້ວທີ່ໃຊ້ແລ້ວຈຳນວນຫລວງຫລາຍ ຢູ່ໃນຫ້ອງນີ້.

ເຈົ້າຍິງຮູ້ສຶກໜ້າອາຍຫລາຍທີ່ປະພຶດຕົນບໍ່ດີ ແຕ່ກໍຍອມຮັບວ່າ ນາງເອງໃຊ້ໄມ້ຈິ້ມແຂ້ວເຫລົ່ານີ້ແລ້ວກໍສຽບມັນໄວ້ລະຫວ່າງຮອຍພັບຂອງສາດ ເພາະຂີ້ຄ້ານລຸກເອົາໄປຖິ້ມໃຫ້ຖືກບ່ອນ. ເຈົ້າຍິງຍັງກ່າວວ່າ ນາງເອງເສຍໃຈຫລາຍແທ້ໆ ແລະ ສັນຍາວ່າຈະບໍ່ເປັນຄົນຂີ້ຄ້ານອີກຈັກເທື່ອ.

ແລ້ວຕໍ່ມາ ເຈົ້າຍິງກໍເກັບເອົາໄມ້ຈິ້ມແຂ້ວທັງໝົດຕະຫລອດທັງໄມ້ທີ່ຢູ່ເລິກໆຂອງຮອຍພັບ ແລ້ວເອົາໄປຖິ້ມຈົນໝົດ. ຄືນນັ້ນເຫລົ່ານັກຮົບບໍ່ພາກັນມາເລີຍ ເພາະບໍ່ມີງ້າວດວງນ້ອຍໆ ສຳລັບພວກເຂົາ. ພວກເຂົາບໍ່ພາກັນມາອີກຈັກເທື່ອ.

ໃນບໍ່ດົນ ເຈົ້າຍິງກໍກັບຄືນມີສຸຂະພາບແຂງແຮງ ເພາະບໍ່ມີເຫລົ່ານັກຮົບຕົວນ້ອຍໆ ມາເຮັດໃຫ້ນາງຫລັບບໍ່ລົງອີກ. ນາງກາຍເປັນຄົນລະອຽດ, ຮອບຄອບຕໍ່ທຸກສິ່ງທຸກຢ່າງ ແລະເຮັດໃຫ້ອົງບິດາພໍ່ອົກພໍ່ໃຈຫລາຍ, ນາງປັດກວາດຮອດສວນທຸກໆມື້. ນາງບໍ່ລືມເລື່ອງນັກຮົບຕົວນ້ອຍໆຈັກເທື່ອ ແລະຖ້າວ່າ ຍາມໃດນາງຕ້ອງໃຊ້ໄມ້ຈິ້ມແຂ້ວອີກແລ້ວ ເຈົ້າຈິ່ງເຊື່ອໂລດວ່າ ນາງຈະເອົາໃຈໃສ່ຢ່າງດີທີ່ສຸດ ໂດຍເອົາໄປຖິ້ມລົງບ່ອນທີ່ຖືກທີ່ຄວນ.

*ແປໂດຍ : ອຸທິນ ບຸນຍາວົງ*

# ໝໍ້ກາວິເສດ



ຄັ້ງໜຶ່ງ ມີຕູບາອົງໜຶ່ງ ມັກສັນນ້ຳຊາຫລາຍ. ຍາທ່ານອົງນີ້ເຮັດນ້ຳຊາເອົາເອງສະເໝີ ແລະ ເອົາໃຈໃສ່ເຄື່ອງຊົງຊາຢ່າງລະອຽດລະອໍ. ວັນໜຶ່ງຍາທ່ານເຂົ້າໄປຮ້ານເຄື່ອງເກົ່າ ເລີຍໄປພໍ້ໝໍ້ກາເຫລັກໜ່ວຍງາມ ສຳລັບຕົ້ມນ້ຳເພື່ອຊົງຊາ. ໝໍ້ນີ້ເກົ່າແກ່ຫລາຍ ທັງເປັນຂີ້ໝ້ຽງ, ແຕ່ຍາທ່ານກໍຍັງຫລິງເຫັນຄວາມງາມທີ່ຖືກໂອບດ້ວຍຂີ້ໝ້ຽງນັ້ນຢູ່. ດັ່ງນີ້ເພິ່ນຈຶ່ງຊື້

ໄວ້ ແລະຫິ້ວກັບເມືອວັດ. ເພິ່ນພະຍາຍາມຮຸກຖູໝໍ້ກາຈົນຂີ້ໝ້ຽງອອກໝົດ ແລ້ວກໍເອີ້ນລູກສິດວັດສາມຄົນມາເບິ່ງ.

" ເບິ່ງແມະ! ຂ້ອຍຊື້ໝໍ້ກາໜ່ວຍງາມອີ່ຫລີ " ຍາທ່ານວ່າ " ບາດນີ້ຊິຕົ້ມນ້ຳຊາຫອມໆ ໃຫ້ທຸກຄົນກິນ. "

ຍາທ່ານເອົາໝໍ້ກາຢອງໃສ່ເຕົາ ທີ່ດັງດ້ວຍໄຟຖ່ານ, ແລ້ວທັງໝົດກໍພາກັນນັ່ງອ້ອມ ຄອງຖ້າໃຫ້ນ້ຳຟົດ. ໝໍ້ກາເລີ່ມຮ້ອນຂຶ້ນຮ້ອນຂຶ້ນ ແລະທັນໃດ ກໍເກີດສິ່ງແປກປະຫລາດຂຶ້ນ ນັ້ນກໍຄືໝໍ້ກາກາຍເປັນໂຕເຫງັນ, ປາກົດມີຫົວອອກມາ ພ້ອມດ້ວຍຫາງເປັນພວງ ແລະ ສີ່ຂານ້ອຍໆ.

" ອຸ໊ຍ! ຮ້ອນ! " ໝໍ້ກາວ່າ " ໄຟດາດຂ້ອຍ ໄຟດາດຂ້ອຍ! " ພ້ອມກັບຄຳເວົ້າດັ່ງກ່າວ ໝໍ້ກາເຕັ້ນຢັອດອອກຈາກເຕົາ ແລ້ວກໍແລ່ນວິ່ນໄປວຽນມາຢູ່ພາຍໃນຫ້ອງ ດ້ວຍສີ່ຂານ້ອຍໆ. ມັນແມ່ນຂາເຫງັນຫາງພວງ.

ຄູບາເຖົ້າຕື່ນຕົກໃຈ ແຕ່ເພິ່ນກໍບໍ່ຢາກເສຍໝໍ້ກາ ຈຶ່ງບອກລູກສິດວ່າ " ໄວ! ໄວ! ຄຸບມັນໄວ້ ຢ່າໃຫ້ມັນໜີໄປ! "

ລູກສິດຄົນໜຶ່ງຄວ້າໄດ້ຟອຍກວາດເຮືອນ, ຄົນທີສອງໄດ້ເຫລັກຄີບຖ່ານ, ແລະຄົນທີສາມໄດ້ຈອງ ທັງສາມພາກັນໄລ່ປ້ຳໝໍ້ກາໄປຕິດໆ. ເມື່ອໄລປ້ຳທັນແລ້ວ ປາກົດວ່າສ່ວນທີ່ເປັນຫົວ, ເປັນຫາງພວງ, ແລະເປັນຕີນນ້ອຍໆຂອງໂຕເຫງັນນັ້ນ ມະຫັບມະຫາຍໄປ. ມັນກັບເປັນໝໍ້ກາທຳມະດານີ້ເອງ.

" ແປກປະຫລາດອີ່ຫລີ " ຍາທ່ານວ່າ " ມັນຕ້ອງເປັນໝໍ້ກາຜີຄັກໆ ພວກເຮົາບໍ່ຕ້ອງການໝໍ້ກາຜີຈັ່ງຊີ້ຢູ່ໃນວັດຍາມນີ້ ຕ້ອງກຳຈັດມັນ. "

ພໍດີ ມີພໍ່ຄ້າຊື້ເຄື່ອງເກົ່າເຂົ້າມາໃນວັດ ຍາທ່ານເລີຍຟ້າວເອົາໝໍ້ກາໃຫ້ເບິ່ງທັງເວົ້າວ່າ: " ນີ້ໝໍ້ກາເກົ່າແກ່ ອາຕະມາຈະຂາຍໃຫ້ລາຄາຖືກໆ, ໂຍມພໍ່ຄ້າຊິເອົາຫຍັງໃຫ້ກໍໄດ້ ຖ້າຄິດວ່າມັນເໝາະສົມກັນ ."

ພໍ່ຄ້າເອົາໝໍ້ກາຊັ່ງເບິ່ງນ້ຳໜັກ ແລ້ວກໍຕົກລົງຊື້ໝໍ້ການຳຍາທ່ານ ດ້ວຍລາຄາພຽງບໍ່ເທົ່າໃດ. ລາວຜິວປາກກັບເມືອເຮືອນດ້ວຍຄວາມດີອົກດີໃຈ ທີ່ໄດ້ຊື້ເຄື່ອງລາຄາຖືກໆ.

ຄືນນັ້ນ ພໍ່ຄ້າເຄື່ອງເກົ່ານອນຫລັບ, ໝົດທັງເຮືອນຈົມຢູ່ໃນຄວາມມິດງຽບ, ແລ້ວໃນທັນໃດກໍມີສຽງເອີ້ນດັງຂຶ້ນ: " ລຸງພໍ່ຄ້າ, ລຸງພໍ່ຄ້າເອີຍ! "

ພໍ່ຄ້າເຄື່ອງເກົ່າມືນຕາຂຶ້ນ ແລະເວົ້າວ່າ: " ແມ່ນໃຜມາເອີ້ນຮື? " ລາວທັງເວົ້າທັງໄຕ້ທຽນສະຫວ່າງຂຶ້ນ ຈຶ່ງເຫັນໝໍ້ກາຢູ່ຂ້າງໝອນ ເປັນໝໍ້ກາທີ່ມີຫົວມີຫາງພວງ ມີສີ່ຕີນນ້ອຍໆຂອງໂຕເຫງັນ ລາວຕົກໃຈສຸດຂີດ ແລະເວົ້າວ່າ: " ມຶງແມ່ນໝໍ້ກາທີ່ກູຊື້ມາຈາກຄູບາມື້ນີ້ແມ່ນຕວ່າ? "

" ແມ່ນລະ ແມ່ນຂ້ອຍລະ " ໝໍ້ກາວ່າ " ແຕ່ຂ້ອຍບໍ່ແມ່ນໝໍ້ກາທຳມະດາເດີ້ ທີ່ແທ້ແລ້ວຂ້ອຍແມ່ນເຫງັນທີ່ປອມຕົວ ແລະຊື່ຂ້ອຍແມ່ນບູມບູກຸ ຊຶ່ງແປວ່າໂຊກດີ ໝາຍຄວາມວ່າ ຍາທ່ານເອົາຂ້ອຍໃສ່ໄຟ ແລ້ວເຜົາຂ້ອຍ ຂ້ອຍຈຶ່ງແລ່ນໜີ. ແຕ່ຖ້າເຈົ້າເຮັດນຳຂ້ອຍດີໆ ແລະບໍ່ຈັບຂ້ອຍໃສ່ໄຟຈັກເທື່ອ ຂ້ອຍກໍຈະຢູ່ນຳເຈົ້າ ແລະຊ່ອຍເຫລືອເຈົ້າສ້າງຮັ່ງຄູນມີ ."

" ແມ່ນຈັ່ງໃດຫວະ, ຄືເວົ້າແນວຕ່າງໆແທ້ " ພໍ່ຄ້າເຄື່ອງເກົ່າວ່າ " ໂຕຊິຊ່ອຍເຮົາຮັ່ງມີຂຶ້ນຈັ່ງໃດເປັນ? "



“ ຂ້ອຍຫລິ້ນກົນໄດ້ທຸກຢ່າງ ແບບພິລຶກພຸ້ນລະ ” ໝໍ້ກາວ່າ ທັງແກວ່ງຫາງພວງໄປມາ “ ເອົາຈັ່ງຊີ້, ໃຫ້ຂ້ອຍໄປສະແດງ, ເຈົ້າຂາຍປີ້ເພື່ອໃຫ້ຄົນເຂົ້າມາເບິ່ງຂ້ອຍຫລິ້ນກົນ. ”

ພໍ່ຄ້າເຄື່ອງເກົ່າຄິດວ່າ ນີ້ແມ່ນຄວາມຄິດທີ່ສ່ອງໃສແທ້ໆ. ມື້ຖັດມາ ລາວສ້າງໂຮງສະແດງຂຶ້ນພາຍໃນເດີ່ນບ້ານ ແລະຕິດປ້າຍບັກໃຫຍ່ໆ ທີ່ຂຽນວ່າ: “ ບູມບູກຸ ໝໍ້ກາພາໂຊກກັບການສະແດງກົນທີ່ເຫລືອເຊື່ອ. ”

ແຕ່ລະມື້ ມີປະຊາຊົນຫລັ່ງມາເບິ່ງບູມບູກຸຫລາຍຂຶ້ນ ຫລາຍຂຶ້ນທຸກມື້ ພໍ່ຄ້າເຄື່ອງເກົ່ານັ່ງຂາຍປີ້ຢູ່ດ້ານໜ້າ ແລະເມື່ອມີຄົນເຂົ້າມາເຕັມໂຮງສະແດງແລ້ວ ລາວກໍເຂົ້າໄປພາຍໃນແລ້ວເລີ່ມຕີກອງຕຸ້ມໆ! ບູມບູກຸ ຈະອອກມາປາກົດຕົວ ທັງເຕັ້ນ ທັງສະແດງກາຍະສິນທຸກທ່າ. ແຕ່ແນວທີ່ເຮັດໃຫ້ຜູ້ຊົມພໍອົກພໍໃຈຫລາຍນັ້ນແມ່ນບູມບູກຸໄຕ່ເຊືອກ ໂດຍມືໜຶ່ງຈັບຄັນຮົ່ມ ແລະອີກມືໜຶ່ງຈັບວີໄວ້. ຜູ້ຊົມຄິດວ່າລາຍການນີ້ພິລຶກອີ່ຫລີ ເຂົາເຈົ້າພາກັນຮ້ອງໂຮຊົມເຊີຍບູມບູກຸ ຕະຫລອດເວລາ ແລະເມື່ອການສະແດງແຕ່ລະເທື່ອສິ້ນສຸດລົງ ພໍ່ຄ້າເຄື່ອງເກົ່າກໍເອົາເຂົ້າໜົມໃຫ້ບູມບູກຸກິນ.

ພໍ່ຄ້າເຄື່ອງເກົ່າຂາຍປີ້ເຂົ້າຊົມໄດ້ເປັນຈຳນວນຫລາຍ ຈົນໃນທີ່ສຸດ ລາວກໍກາຍເປັນຄົນຮັ່ງມີຢ່າງສຸດແສນ. ມື້ໜຶ່ງລາວເວົ້ານຳບູມບູກຸວ່າ: “ ໂຕຄົງຊິເມື່ອຍຂະໜາດເນາະ ທີ່ສະແດງຈັ່ງຊີ້ທຸກໆມື້ ດຽວນີ້ເຮົາມີເງິນພຽງພໍ ຕາມທີ່ຕ້ອງການແລ້ວ, ດີບໍ່ຖ້າເຮົາຊິພາໂຕກັບຄືນເມືອວັດ ບ່ອນທີ່ໂຕຈະໄດ້ໃຊ້ຊີວິດຢູ່ຢ່າງສະຫງົບ.

“ ເອີ... ” ບູມບູກຸວ່າ “ ຂ້ອຍກໍເລີ່ມຮູ້ສຶກເມື່ອຍແດ່ ແລະຢາກໄປຢູ່ຢ່າງສະຫງົບທີ່ວັດ, ແຕ່ຄູບາເຖົ້າອົງນັ້ນອາດຈະຈັບຂ້ອຍ

ໃສ່ໄຟອີກ ແລະເພິ່ນອາດບໍ່ເອົາເຂົ້າໜົມແຊບໆໃຫ້ຂ້ອຍກິນອີກ ຈັກເທື່ອກໍເປັນໄດ້. "

" ປ່ອຍໃຫ້ຂ້ອຍຈັດການເອງເລື່ອງນີ້ " ພໍ່ຄ້າວ່າ. ດັ່ງນີ້ ມື້ຕໍ່ມາ ພໍ່ຄ້າເຄື່ອງເກົ່າກໍພາບູມບູກຸໄປຍັງວັດ ທັງຂົນເງິນຈຳນວນ ຫລວງຫລາຍ ແລະເຂົ້າໜົມທີ່ບູມບູກຸມັກໄປພ້ອມ.

ເມື່ອໄປຮອດວັດແລ້ວ ພໍ່ຄ້າໄດ້ອະທິບາຍສູ່ຍາທ່ານຟັງ ກ່ຽວກັບເຫດການທີ່ຜ່ານມາ ແລ້ວລາວເອົາເງິນທັງໝົດຖວາຍແດ່ ຍາທ່ານ ເພື່ອເປັນສົມບັດຂອງວັດ. ແລະແລ້ວລາວກໍເວົ້ານຳເພິ່ນ ວ່າ: " ດັ່ງນີ້ຂໍໃຫ້ຍາທ່ານໂຜດຜາຍບູມບູກຸໃຫ້ຢູ່ຢ່າງສະຫງົບທີ່ວັດ ນີ້ຕະຫລອດໄປ ທັງລ້ຽງເກືອມັນດ້ວຍເຂົ້າໜົມ ທີ່ຂ້ານ້ອຍເອົາມາ ພ້ອມນີ້ ແລະຈົ່ງຢ່າເອົາມັນໄປໃສ່ໄຟຈັກເທື່ອທ້ອນ ຂ້ານ້ອຍ. "

" ບໍ່ເປັນຫຍັງ ອາຕະມາຍິນດີໂຜດຜາຍ " ຍາທ່ານວ່າ " ບູມບູກຸ ຊິຢູ່ວັດນີ້ຢ່າງມີສັກສີ ທີ່ກຸຕິມ້ຽນເຄື່ອງຂອງ ໝໍ້ກາໜ່ວຍນີ້ ເປັນຕົວໂຊກໝານແທ້ໆ, ອາຕະມາ ຊິບໍ່ເອົາໄປຕັ້ງໃສ່ ເຕົາໄຟເລີຍ ຖ້າຮູ້ຈັກມາກ່ອນ. "

ດັ່ງນີ້ ຍາທ່ານຈຶ່ງເອີ້ນລູກສິດວັດມາຮັບຊາບ ພວກລູກສິດ ເອົາໝໍ້ກາໜ່ວຍນັ້ນໄປຕັ້ງເທິງແທ່ນໄມ້ ແລະວາງເຂົ້າໜົມໄວ້ທີ່ແທ່ນ ໄມ້ອີກແທ່ນໜຶ່ງຕ່າງຫາກ. ຕໍ່ມາຍາທ່ານຖືແທ່ນໄມ້ແທ່ນໜຶ່ງ, ພໍ່ ຄ້າເຄື່ອງເກົ່າຖືແທ່ນໄມ້ອີກແທ່ນໜຶ່ງ ແລ້ວຍ່າງໄປທີ່ກຸຕິມ້ຽນເຄື່ອງ ໂດຍມີລູກສິດຍ່າງນຳຫລັງ. ທັງໝົດພາກັນແຫ່ບູມບູກຸ ໄປຮັກສາ ໄວ້ຢ່າງລະມັດລະວັງ. ສ່ວນເຂົ້າໜົມກໍຖືກວາງລົງໄວ້ຂ້າງໆ ບູມ ບູກຸນັ້ນ.

ເພິ່ນເລົ່າກັນຕໍ່ມາວ່າ ບູມບູກຸ ຍັງຢູ່ໃນກຸຕິມັງນຂອງທີ່ວັດແຫ່ງນັ້ນຢ່າງສະຫງົບສຸກຈົນຮອດທຸກວັນນີ້. ມີຜູ້ຄົນເອົາເຂົ້າໜົມໄປລ້ຽງບູມບູກຸ ທຸກມື້ ແລະບໍ່ເອົາເຂົາຄ້າງໃສ່ເຕົາໄຟອີກເລີຍ, ບູມບູກຸຈຶ່ງຢູ່ຢ່າງສະຫງົບຕະຫລອດມາ.

*ແປໂດຍ : ອຸທິນ ບຸນຍາວົງ*



# ທ້າວໝາກຄາຍ



ປາງກ່ອນກີ້ ຢູ່ຊົນນະບົດແຫ່ງໜຶ່ງໃນປະເທດຍີ່ປຸ່ນ ມີສອງເຖົ້າຜົວເມຍຢູ່ນຳກັນຕາມລຳພັງ, ເຖົ້າຜູ້ຜົວເປັນຄົນຕັດຟືນ. ທັງສອງຢູ່ຢ່າງງຽບເຫງົາ ແລະປ່ຽວພອຍ ເພາະບໍ່ມີລູກຈັກຄົນ.

ມື້ໜຶ່ງ ພໍ່ເຖົ້າຂຶ້ນໄປເທິງພູ ເພື່ອຕັດຟືນ, ສ່ວນແມ່ເຖົ້າລົງໄປຍັງນ້ຳຫ້ວຍເພື່ອຊັກເຄື່ອງ.

ແມ່ເຖົ້າຊັກເຄື່ອງໄປບໍ່ທັນດົນ ລາວກໍຕາຕື່ດີໃຈ ເພາະເຫັນໝາກຄາຍໜ່ວຍໃຫຍ່ໄຫລນ້ຳມາ. ມັນເປັນໝາກຄາຍໜ່ວຍໃຫຍ່

ທີ່ສຸດ ຕາມທີ່ລາວເຄີຍເຫັນມາ. ແມ່ເຖົ້າຫອບເອົາໝາກຄາຍແລ້ວຂຶ້ນຈາກທ່າ ຍ່າງກັບຄືນເຮືອນ. ລາວກະວ່າຈະເອົາໃຫ້ພໍ່ເຖົ້າກິນແລງ.

ເມື່ອຕາເວັນໃກ້ຈະຄໍ່າລົງ ພໍ່ເຖົ້າກໍກັບຕ່າວຄືນເຮືອນ, ແມ່ເຖົ້າເວົ້າວ່າ: "ເບິ່ງນີ້ແມະ! ຂ້ອຍໄດ້ໝາກຄາຍ ໜ່ວຍໃຫຍ່ພິລຶກເນາະ ໄວ້ໃຫ້ເຈົ້າກິນແລງ. " ສ່ວນພໍ່ເຖົ້າເວົ້າວ່າ ເປັນຕາສະອອນໝາກຄາຍນີ້ນໍ້! ພໍ່ເຖົ້າຫິວແຮງຈຶ່ງບອກເມຍວ່າ " ຟ້າວແບ່ງກັນກິນດຽວນີ້ເທາະ! "

ດັ່ງນີ້ ແມ່ເຖົ້າຈຶ່ງເອົາມີດດວງໃຫຍ່ມາແຕ່ເຮືອນຄົວ ແລະພວມຈະຜ່າໝາກຄາຍອອກເປັນສອງໂພ່ງ, ແຕ່ທັນໃດນັ້ນ ກໍມີສຽງຄົນດັງອອກມາຈາກໃນໜ່ວຍໝາກຄາຍວ່າ: " ຟ້າວເທື່ອ! ຢ່າຊູ່ປາດຂ້ອຍ " ສຽງນັ້ນວ່າ. ທັນໃດນັ້ນໝາກຄາຍກໍຍະອອກເປັນສອງໂພ່ງ ແລະມີແອນ້ອຍຜູ້ຊາຍທີ່ງາມໜ້າຮັກ ເຕັ້ນອອກມາ.

ພໍ່ເຖົ້າແລະແມ່ເຖົ້າພາກັນງຶດງໍ້ອັດສະຈັນ. ສ່ວນແອນ້ອຍເວົ້າຂຶ້ນວ່າ: " ຢ່າຊູ່ຢ້ານ ພະຍາແຖນຢູ່ເທິງຟ້າສ່ອງລົງມາເຫັນວ່າພວກເຈົ້າຫງ່ວມເຫງົາຫລາຍທີ່ບໍ່ມີລູກ ດັ່ງນີ້ເພິ່ນເລີຍສົ່ງຂ້ອຍລົງມາໃຫ້ເປັນລູກ ."

ທັງສອງເຖົ້າພາກັນດີໃຈ ແລະຮັບເອົາແອນ້ອຍໄວ້ເປັນລູກຊາຍ. ເພາະແອນ້ອຍເກີດຈາກໝາກຄາຍ ສອງເຖົ້າເລີຍໃສ່ຊື່ວ່າ ໂມໂມະຕາໂຣ ຊຶ່ງແປວ່າ ທ້າວໝາກຄາຍ. ສອງເຖົ້າພາກັນຮັກທ້າວມາກຄາຍຫລາຍ ແລະຊ່ວຍກັນເບິ່ງແຍງລ້ຽງແອນ້ອຍໃຫ້ເຕີບໃຫຍ່ເປັນຄົນດີ.

ເມື່ອທ້າວໝາກຄາຍ ອາຍຸຍ່າງເຂົ້າສິບຫ້າປີ ລາວເວົ້ານຳພໍ່ວ່າ: “ ພໍ່ເອີ້ຍ ພໍ່ເຮັດດີນຳລູກຕະຫລອດມາ. ບັດນີ້ ລູກກໍໃຫຍ່ສອນບ່າວແລ້ວ ລູກຕ້ອງເຮັດສິ່ງໃດສິ່ງໜຶ່ງເພື່ອຊ່ວຍເຫລືອບ້ານເມືອງ. ຢູ່ຟາກນ້ຳມະຫາສະໝຸດອັນກວ້າງໃຫຍ່ພຸ້ນ ມີດອນໜຶ່ງຊື່ວ່າ: ດອນຍັກໂຂ. ມີຍັກຮ້າຍຫລາຍໂຕອາໄສຢູ່ດອນນີ້ ແລະມັກທ່ຽວມາຍັງດິນແດນທີ່ພວກເຮົາຢູ່ ເພື່ອສ້າງກຳ ທຳເຂັນເລື້ອຍໆເຊັ່ນຄຸບຈັບເອົາຄົນ ທັງລັກເອົາເຄື່ອງຂອງຕ່າງໆຂອງໄທບ້ານໄປຢ່າງປ່າເຖື່ອນ. ດັ່ງນີ້ ລູກຈຶ່ງຊິໄປດອນຍັກໂຂ ໄປປາບຍັກແລ້ວເອົາສົມບັດຕ່າງໆກັບຄືນມາ. ປ່ອຍໃຫ້ລູກໄປ ເນາະພໍ່ເນາະ. ”

ພໍ່ເຖົ້າຕົກຕື່ນປະຫລາດໃຈທີ່ໄດ້ຍິນລູກເວົ້າຈັ່ງຊີ້ ແຕ່ລາວກໍພູມໃຈໃນຕົວທ້າວໝາກຄາຍ ທີ່ຢາກຊ່ວຍເຫລືອຄົນອື່ນ. ດັ່ງນີ້ ພໍ່ເຖົ້າແລະແມ່ເຖົ້າ ຈຶ່ງຊ່ອຍລູກຊາຍຫ້າງຫາກະກຽມສິ່ງຈຳເປັນສຳລັບການເດີນທາງໄປຍັງດອນຍັກໂຂ. ພໍ່ເຖົ້າມອບງ້າວແລະດ້າງປ້ອງກັນຄີງໃຫ້ລູກຊາຍ ສ່ວນແມ່ເຖົ້າເຮັດເຂົ້າໜົມປັງໃຫ້ສຳລັບໄວ້ກິນເດີນທາງ. ຕໍ່ມາ ທ້າວໝາກຄາຍກໍອອກເດີນທາງ ໂດຍບອກພໍ່ແມ່ວ່າ ຈະຕ່າວຄືນມາໄວໆ.

ທ້າວໝາກຄາຍຍ່າງມຸ່ງໜ້າໄປສູ່ນ້ຳສະໝຸດ, ເສັ້ນທາງນັ້ນໄກແສນໄກ. ໄປຕາມທາງ ທ້າວໄດ້ພົ້ໝາດ່າງໂຕໜຶ່ງ. ໝາໂຕນີ້ເຫົ່າແລະຫລູບມາຈະກັດ ແຕ່ທ້າວໝາກຄາຍໂຍນເຂົ້າໜົມປັງໃຫ້ທັງບອກວ່າ ຈະໄປປາບຍັກທີ່ດອນຍັກໂຂ. ຮູ້ດັ່ງນັ້ນໝາບັກດ່າງກໍບອກວ່າ ຢາກໄປນຳເພື່ອຊ່ວຍທ້າວໝາກຄາຍປາບຍັກ.

ທ້າວໝາກຄາຍກັບໝາບັກດ່າງພາກັນຍ່າງຕໍ່ໄປ, ແລະບໍ່ດົນກໍໄປພົ້ລີງໂຕໜຶ່ງ. ໝາບັກດ່າງກັບລີງຜິດແຂກັນ, ທ້າວໝາກຄາຍ



ຈຶ່ງອະທິບາຍແກ່ລີງວ່າ ທ້າວເອງກັບໝາບັກດ່າງຈະໄປປາບຍັກຢູ່ດອນຍັກໂຂ. ຮູ້ດັ່ງນັ້ນ ລີງຈຶ່ງຂໍເດີນທາງໄປນຳ.

ທ້າວໝາກຄາຍ, ໝາບັກດ່າງກັບລີງພາກັນເດີນທາງຕໍ່ໄປ. ທັນໃດ ພວກເຂົາກໍໄປພໍ້ໄກ່ຂີວ. ໝາບັກດ່າງກັບລີງແລະໄກ່ຂີວຊິຕີບຕີກັນ, ແຕ່ເມື່ອໄກ່ຂີວໄດ້ຍິນວ່າ ທ້າວໝາກຄາຍຊິໄປປາບຍັກຢູ່ດອນຍັກໂຂ ມັນຈຶ່ງຂໍໄປນຳ. ດັ່ງນີ້ ທ້າວໝາກຄາຍເລີຍເອົາເຂົ້າໜົມປັງໃຫ້ໄກ່ຂີວກິນ ແລະບອກໃຫ້ມັນເດີນທາງໄປນຳກັນ.

ເປັນອັນວ່າ ໝາບັກດ່າງ, ລີງແລະໄກ່ຂີວ ຊຶ່ງໂດຍປົກກະຕິແລ້ວເປັນສັດຕູກັນ ກໍກາຍມາເປັນໝູ່ຮັກແພງກັນ ແລະເຊື່ອຟັງທ້າວໝາກຄາຍຜູ້ເປັນຊຸນພິນຂອງພວກເຂົາ ຢ່າງຊື່ສັດບໍລິສຸດ. ທັງໝົດພາກັນເດີນທາງໄປເລື້ອຍໆ ຕາມເສັ້ນທາງອັນຍາວໄກ ແລະໃນທີ່ສຸດກໍໄປຮອດນ້ຳສະໝຸດໃຫຍ່. ທີ່ແຄມນ້ຳນີ້ ທ້າວໝາກຄາຍສ້າງເຮືອສະເພົາຂຶ້ນມາລຳໜຶ່ງ ແລ້ວທັງໝົດກໍພາກັນຂີ່ຂ້າມນ້ຳສະໝຸດໄປສູ່ດອນຍັກໂຂ.

ເມື່ອເຮືອສະເພົາລ່ອງເຂົ້າໄປໃກ້ດອນ ພວກເຂົາກໍແນມເຫັນວ່າຖ້ຳຍຂອງຍັກນັ້ນແຂງແກ່ນແໜ້ນໜາ. ມີຍັກຈຳນວນຫລວງຫລາຍຢູ່ພາຍໃນ. ບາງພວກເປັນຍັກສີແດງ, ບາງພວກເປັນສີຟ້າ ແລະບາງພວກເປັນສີດຳ.

ທຳອິດ ໄກ່ຂີວບິນຂ້າມກຳແພງຄ້າຍໄປສັບຫົວຍັກ, ຝ່າຍພວກຍັກພະຍາຍາມໃຊ້ໄມ້ຄ້ອນຕີໂຕ້ ແຕ່ໄກ່ຂີວກໍຫລົບຫລີກໄດ້ຢ່າງວ່ອງໄວ. ໃນເວລາທີ່ພວກຍັກໄລ່ຕີໄກ່ຂີວຢູ່ນັ້ນ ລີງກໍລັກຫລອຍເຂົ້າໄປແລ້ວໄຂປະຕູຄ້າຍອອກ. ສ່ວນທ້າວໝາກຄາຍກັບໝາບັກດ່າງກໍຟ້າວລູ່ເຂົ້າໄປ ແລະຕໍ່ສູ້ ກັບພວກຍັກຢ່າງອາດຫານ.

ການສູ້ຮົບຕົບຕີກັນເປັນໄປຢ່າງດຸເດືອດ. ໄກ່ຂົວສັບທິວ ສັບຕາພວກຍັກຖ່ອຍ, ລິງສັກຂະໂຍງທັງຄູດທຍຸມ, ສ່ວນໝາບັກດ່າງໂດດສວາບໂດດກັດ, ທ້າວໝາກຄາຍກໍເອົາງ້າວຟາດຟັນພວກຍັກຈົນຮ້ອງຄາງໂອຍໆ. ໃນທີ່ສຸດພວກຍັກກໍອ່ອນຍອມ ແລະກົ້ມຫົວນອບນ້ອມຕໍ່ທ້າວໝາກຄາຍ ທັງກ່າວສາບານວ່າ ຈະບໍ່ເຮັດສິ່ງຊົ່ວຊ້າອີກ. ຕໍ່ມາພວກຍັກກໍຂົນເອົາຊັບສົມບັດມອບໃຫ້ທ້າວໝາກຄາຍທັງໝົດ.

ມັນເປັນຊັບສົມບັດ ທີ່ງົດງາມພິລຶກອີ່ຫລີ. ມີເຄື່ອງຄຳເຄື່ອງເງິນ ເຫລືອຄະນານັບ, ແກ້ວມະນີ ກໍມີຢ່າງມະຫາສານ. ມີເສື້ອຍ່າມທີ່ນຸ່ງແລ້ວແນມເບິ່ງບໍ່ເຫັນ, ມີໝວກ, ແລະ ມີໄມ້ຄ້ອນຊຶ່ງເອົາຕີດິນບາດໃດຈະໃຫ້ຕ່ອນຄຳບາດນັ້ນ. ນອກນັ້ນກໍມີຂອງວິເສດອື່ນໆ. ທ້າວໝາກຄາຍ ແລະໝູ່ຜູ້ຊ່ວຍເຫລືອທັງສາມ ເອົາຊັບສົມບັດເຫລົ່ານີ້ໃສ່ເຮືອສະເພົາແລ້ວຕ່າວຄືນມາຍັງຝັ່ງ, ຕໍ່ມາກໍພາກັນເຮັດກວຽນແລ້ວຂົນສົມບັດຂຶ້ນໃສ່ ແລ້ວກໍມຸ່ງໜ້າກັບຄືນບ້ານ.

ສອງເຖົ້າຜົວເມຍພາກັນດີໃຈຫາອັນປຽບບໍ່ໄດ້ ເມື່ອເຫັນລູກຊາຍກັບຄືນມາແຕ່ດອນຍັກໂຂຢ່າງປອດໄພ. ເຂົາເຈົ້າຮັ່ງມີຂຶ້ນຫລາຍດ້ວຍຊັບສົມບັດທີ່ທ້າວໝາກຄາຍເອົາມາໃຫ້, ແລ້ວທັງໝົດກໍພາກັນດຳລົງຊີວິດຢ່າງມີຄວາມຜາສຸກສຳລານ.

*ແປໂດຍ : ອຸທິນ ບຸນຍາວົງ*

# ຜີດັງງວງ



ປາງກ່ອນກີ້ ມີຜີດັງງວງສອງໂຕ ອາໄສຢູ່ເທິງພູສູງ ໃນພາກເໜືອຂອງປະເທດຍີ່ປຸ່ນ. ໂຕໜຶ່ງ ແມ່ນຜີສີຟ້າຫລືຜີດັງຟ້າ ສ່ວນອີກໂຕໜຶ່ງແມ່ນຜີສີແດງຫລືຜີດັງແດງ. ຜີສອງໂຕນີ້ພູມໃຈໃນດັງຂອງມັນຫລາຍ ເພາະສາມາດຍືດອອກ ແລະເດ່ໄປໄກຫລາຍໂຍດ, ເດ່ຂ້າມທົ່ງພຽງອັນກວ້າງໄກກໍໄດ້, ຜີທັງສອງມັກຖຽງກັນຢູ່ເລື້ອຍໆວ່າ ດັງໃຜງາມ ກວ່າກັນ.

ຢູ່ມາມື້ໜຶ່ງ ຜີດັງຟ້າພວມນັ່ງຢູ່ຈອມພູ, ມັນໄດ້ກິ່ນຫອມລອຍມາຈາກບ່ອນໃດບ່ອນໜຶ່ງ ທີ່ຫ່າງພຽງພຸ້ນ.

" ອື! ມີກິ່ນຫອມໆ" ມັນເວົ້າຂຶ້ນ. " ແປກເວີ້ຍ ຊິແມ່ນຫຍັງນໍ." ດັ່ງນີ້ ມັນຈຶ່ງຍືດດັງອອກແລ້ວເດ່ອອກໄປນຳຫາກິ່ນຫອມທີ່ລອຍມາ ຍືດໄປເລື້ອຍໆ ຈົນຂ້າມພູໄປເຖິງເຈັດໜ່ວຍແລ້ວກາຍໄປຮອດທົ່ງພຽງ ແລະໃນທີ່ສຸດດັງງວງກໍໄປຈຸທໍໂຮງຂອງພະຍາອົງໜຶ່ງ.

ພາຍໃນໂຮງ ລູກສາວພະຍາຊື່ ເຈົ້າຍິງດອກໄມ້ຂາວ ພວມຈັດລ້ຽງເພື່ອນສະຫາຍຢູ່. ມີເຈົ້າຍິງນ້ອຍໆມາຮ່ວມຫລາຍອົງ, ເຈົ້າຍິງດອກໄມ້ຂາວ ຖືໂອກາດຄົ້ນເອົາເຄື່ອງງາມທີ່ສຸດ ແລະຫາຍາກທີ່ສຸດມານຸ່ງອ້າງໜູ່. ພວກເຈົ້າຍິງພາກັນລູບຄຳເຄື່ອງນຸ່ງອັນງົດງາມທີ່ເອົາມາຈາກຫີບສົມບັດ ແລະອົບດ້ວຍເຄື່ອງຫອມ. ມັນແມ່ນເຄື່ອງຫອມນີ້ເອງ ທີ່ຜີດັງຟ້າໄດ້ກິ່ນອັນທີ່ລອຍມາຕາມອາກາດ.

ຄ້ອມພໍດີເວລານັ້ນ ເຈົ້າຍິງດອກໄມ້ຂາວພວມຊອກຫາບ່ອນຫ້ອຍເຄື່ອງນຸ່ງເພື່ອຈະໄດ້ແຍງເບິ່ງໃຫ້ເຕັມຕາ, ເຈົ້າຍິງຫລຽວໄປເຫັນດັງຂອງຜີສີຟ້າ ຈຶ່ງຄິດວ່າແມ່ນຮາວໄມ້ ເລີຍເວົ້າຂຶ້ນວ່າ:

" ພຸ້ນເດ ມີຄົນເອົາຮາວສີຟ້າໄປໄວ້ທີ່ລະບຽງ ພວກເຮົາໄປຫ້ອຍເຄື່ອງໃສ່ເນາະ."

ເວົ້າແລ້ວ ເຈົ້າຍິງກໍ່ເອີ້ນພວກສາວໃຊ້ເອົາເຄື່ອງໄປພາດໃສ່ຮາວ ຊຶ່ງອັນທີ່ຈິງແມ່ນດັງຂອງຜີນັ້ນເອງ.

ຜີດັງຟ້າ ທີ່ນັ່ງຢູ່ຈອມພູໄກໆພຸ້ນ ຮູ້ສຶກຄັນດັງຍຸກຍິກ ຈຶ່ງຟ້າວຫົດດັງກັບຄືນ.

ພວກເຈົ້າຍິງ ທີ່ເຫັນຜ້າແພຜືນງາມທັງຫລາຍລອຍໜີໄປໃນທ້ອງຟ້າ ກໍພາກັນຕົກໃຈຢ່າງແຮງ, ແຕ່ລະອົງພະຍາຍາມຢື້ເອົາຜ້າແພແຕ່ກໍບໍ່ທັນ.

ເມື່ອຜີດັງຟ້າ ເຫັນຜ້າແພຜືນງາມຕິດມານຳດັງຂອງຕົນ ມັນກໍຕື່ນເຕັ້ນດີໃຈເປັນທີ່ສຸດ. ມັນຫອບເອົາຜ້າແພເຫລົ່ານັ້ນເມືອເຮືອນ. ຕໍ່ມາມັນກໍເອີ້ນຜີດັງແດງທີ່ຢູ່ພູໜ່ວຍຖັດໄປມາຫາ ແລ້ວກ່າວວ່າ: " ເຫັນບໍ່ ດັງຂອງເຮົາພິລຶກຂະໜາດໃດ, ມັນເກາະເອົາຜ້າແພງາມໆມາໃຫ້."

ເມື່ອເຫັນດັ່ງນັ້ນ ຜີດັງແດງກໍຄິດອິດສາ, ເຖິງຂະໜາດວ່າ ຖ້າໂຕມັນບໍ່ແດງ ຈັ່ງໃດໜ້າມັນກໍຄົງປ່ຽນເປັນສີຂຽວພຸ້ນແຫລະ.

" ໂຕຖ້າເບິ່ງ! ດັງເຮົາພີ້ດີກກວ່າ " ຜີດັງແດງເວົ້າ " ຖ້າຈັກໜ້ອຍ ແລ້ວເຮົາຊິເຮັດໃຫ້ເບິ່ງ."

ແຕ່ນັ້ນມາ ຜີດັງແດງກໍມານັ່ງຢູ່ເທິງຈອມພູ ເອົາມືລູບດັງແດງທັງສູບດົມຫາກິ່ນໄປພ້ອມ ແຕ່ມັນກໍບໍ່ໄດ້ກິ່ນຫຍັງເລີຍ. ນັ່ງຢູ່ຫລາຍມື້ມັນກໍໝົດຄວາມອົດທົນ ແລ້ວຈົ່ມວ່າ:" ຄອງຖ້າຕໍ່ໄປບໍ່ໄຫວດອກ, ຈັ່ງໃດກໍຊິຍືດດັງອອກ ເດ່ໄປກາງທົ່ງພຸ້ນກ່ອນ. ແນ່ນອນວ່າຈະຕ້ອງພໍ້ຂອງດີແນ່ນອນ."

ເວົ້າແລ້ວ ຜີດັງແດງກໍເລີ່ມຍືດດັງໃຫ້ຍາວອອກ ຍາວອອກຈົນເດ່ຂ້າມພູໄປໄດ້ເຈັດໜ່ວຍ ເດ່ອອກໄປຮອດທົ່ງພຽງ ແລະໃນທີ່ສຸດ ກໍໄປຈຸທໍໂຮງຫລັງດຽວກັນກັບທີ່ກ່າວມາແລ້ວ.

ຄ້ອນພໍດີເວລານັ້ນ ເຈົ້າຊາຍວິລະ ຊຶ່ງເປັນລູກຊາຍຂອງພະຍາ ພວມຫລິ້ນຢູ່ໃນສວນອຸທິຍານພ້ອມກັບເພື່ອນສະຫາຍ. ເມື່ອເຈົ້າຊາຍແນມເຫັນດັງແດງຂອງຜີ ກໍຄຶດວ່າແມ່ນຮາວໄມ້ ຈຶ່ງຮ້ອງ



ຂຶ້ນວ່າ:" ໂທ້ ເບິ່ງແມ້ ມີຄົນເອົາຮາວໄມ້ສີແດງມາໄວ້ບ່ອນນີ້, ພວກເຮົາໄປຈ່ອງຂີ່ໂຫຍັນເທາະ." ເວົ້າແລ້ວກໍພາກັນເອົາເຊືອກເສັ້ນໃຫຍ່ໆໄປມັດຍ່ອນ ເຮັດເປັນບ່ອນໂອ່ນໂລ່ນຊາຫລາຍບ່ອນ ແລະພາກັນຂີ່ໂຫຍັນໄປມາຢ່າງມ່ວນຊື່ນ, ບາງເທື່ອໂຫຍັນໄປແຮງໆຈົນຊິຮອດຟ້າ. ເຈົ້າຊາຍແລະເພື່ອນສະຫາຍ ພາກັນຫລິ້ນມ່ວນເອົາແທ້ເອົາວ່າ. ເຂົາເຈົ້າຂຶ້ນຂີ່ຮາວໄມ້ສີແດງ ສອງມືຈ່ອງແລ້ວປີນຂຶ້ນແລະໂດດລົງ ບາງຄົນເລີ່ມເອົາມີດ ເຈາະຄວັດ ຊື່ຫຍໍ້ຂອງຕົນໃສ່ໄມ້ນີ້ນຳພ້ອມ.

ທັງໝົດນັ້ນເຮັດໃຫ້ຜີດັງແດງທີ່ນັ່ງຢູ່ເທິງຈອມພູພຸ້ນເຈັບໆປວດໆ. ມັນຮູ້ສຶກວ່າດັງຕົນເອງໜັກຫລາຍຈົນບໍ່ສາມາດເໜັງຕີງໄດ້. ແຕ່ທັນທີທີ່ເດັກນ້ອຍເອົາມີດຈິ້ມເກາງດັງ ຜີດັງແດງກໍທິດດັງຄືນຢ່າງແຮງ ທັງສັ່ນສະດຸ້ງ ຈົນເດັກນ້ອຍພາກັນຟ້ງອອກໝົດ, ແລ້ວມັນກໍທິດດັງກັບຄືນມາຫາຈອມພູຢ່າງໄວ.

ເມື່ອເຫັນດັ່ງນັ້ນ ຜີດັງຟ້າກໍຫົວຂວັນຈົນໄສ້ຂົດ ໄສ້ໄຂ, ສ່ວນຜີດັງແດງເອົາແຕ່ລູບໆ ຄຳໆດັງຕົນເອງ ແລ້ວກໍເວົ້າຂຶ້ນວ່າ: " ເປັນຈັ່ງຊີ້ແຫລະນໍ ທີ່ໄປອິດສາບັງບຸດຜູ້ອື່ນ, ຫລາບແລ້ວ! ຂ້ອຍຊິບໍ່ຍື່ນດັງເດ່ລົງໄປທົ່ງພຸ້ນອີກຈັກເທື່ອ."

*ແປໂດຍ : ສຸພັນທາ ກັນລະຍາ*

# ຕົ້ນແປກອາຖັນ



ຄັ້ງໜຶ່ງ ມີຄົນຕັດຟືນຜູ້ໜຶ່ງ, ລາວທຸກຍາກຫລາຍແຕ່ກໍໃຈດີມີເມດຕາ. ລາວບໍ່ຫັກເອົາງ່າໄມ້ດິບຈາກຕົ້ນຈັກເທື່ອ ເພື່ອເອົາໄປເຮັດຟືນ. ລາວມີແຕ່ເກັບຫ້ອນເອົາງ່າໄມ້ຕາຍທີ່ວາງຢູ່ຕາມດິນ. ລາວຮູ້ວ່າແມ່ນຫຍັງຈະເກີດຂຶ້ນເວລາຄົນເຮົາຫັກງ່າໄມ້ຈາກຕົ້ນ, ນັ້ນກໍຄືຢາງໄມ້ຊຶ່ງປຽບດັ່ງເລືອດຂອງຕົ້ນໄມ້ ຈະຍ້ອຍລົງຍ້ອຍລົງ ປານກັບວ່າຕົ້ນໄມ້ທີ່ບາດເຈັບນີ້ມີເລືອດໄຫລ

ອອກ. ດັ່ງນີ້ ໃນເມື່ອ ລາວບໍ່ຢາກໃຫ້ຕົ້ນໄມ້ໄດ້ຮັບອັນຕະລາຍ ລາວຈຶ່ງບໍ່ຕັດບໍ່ຮານງ່າໄມ້ຈັກເທື່ອ.

ມື້ໜຶ່ງ ຂະນະທີ່ລາວຍ່າງຢູ່ກ້ອງຕົ້ນແປກສູງໆ ເພື່ອຊອກຫາເອົາຟືນ ລາວກໍໄດ້ຍິນສຽງຈົ່ມວ່າ:

ໄຫລຫລັ່ງຍ້ອຍ ໜຽວຍືດຢາງໃສ

ເພາະມີຄົນຫັກ ງ່າແພງຂອງຂ້ອຍ

ຄົນຕັດຟືນງວາກໄປເບິ່ງ, ລາວເຫັນຄັກແທ້ແນ່ນອນວ່າ ມີຜູ້ມາເຮັດໃຫ້ງ່າແປກຫັກລົງສາມງ່າ, ຢາງແປກຈຶ່ງໄຫລຍ້ອຍອອກມາ. ຄົນຕັດຟືນ ພະຍາຍາມເອົາງ່າໄມ້ມາມັດຕໍ່ໃສ່ຄືນ ຢ່າງຊຳນິຊຳນານທັງກ່າວວ່າ :

ບັດນີ້ງ່າອ່ອນເຈົ້າ ຕິດກັນປະສານຕໍ່

ຢຸດຫລັ່ງຍ້ອຍ ຢາງເຈົ້າບໍ່ຍ່າວໄຫລ ແລ້ວເດ.

ແລ້ວລາວກໍຈີກໂສ້ງເສື້ອຕົນເອງເອົາຜ້າຕ່ອນໜຶ່ງມາພັນບາດໃຫ້ຕົ້ນໄມ້.

ເມື່ອລາວພັນບາດສຳເລັດໄປບໍ່ດົນ ກໍມີສິ່ງນ້ອຍໆເຫລື້ອມໆຈຳນວນຫລວງຫລາຍ ຫລົ່ນລົງມາແຕ່ເທິງຕົ້ນໄມ້. ມັນແມ່ນເງິນ! ຫລົ່ນລົງມາເດຍລະດາດ. ຄົນຕັດຟືນຕົ້ນຕາຕື້, ໝົດຕົນຕົວເກືອບປົກຄຸມໄປດ້ວຍເງິນ. ລາວຫລຽວເບິ່ງຕົ້ນໄມ້ທັງຍິ້ມດີໃຈ ແລ້ວກໍກ່າວຂອບໃຈເປັນຢ່າງສູງ. ຕໍ່ມາລາວເກັບເອົາເງິນແລ້ວກັບເມືອເຮືອນ.

ເງິນມີຈຳນວນຫລາຍຈົນນັບບໍ່ຖ້ວນ, ລາວຄ່ອຍໆຮູ້ສຶກວ່າບັດນີ້ ລາວເປັນຄົນຕັດຟືນທີ່ຮັ່ງມີເປັນເສດຖີອີຫລີ. ທຸກໆຄົນຮູ້ດີວ່າ ຕົ້ນແປກເປັນສັນຍະລັກຂອງຄວາມຢູ່ດີພາສຸກໃນຍີ່ປຸ່ນ, ແລະເປັນອັນແນ່ນອນວ່າ ຕົ້ນແປກກະຕັນຍູຕົ້ນນີ້ພາໃຫ້ລາວເປັນເສດຖີ.

ຄ້ອນພໍດີ ຂະນະນັ້ນມີໃບໜ້າຂອງໃຜຜູ້ໜຶ່ງປາກົດຂຶ້ນທີ່ປ່ອງຢ້ຽມ. ມັນແມ່ນໃບໜ້າຂອງຄົນຕັດຟືນອີກຄົນໜຶ່ງ. ແຕ່ຜູ້ນີ້ ທັງກິລິຍາບໍ່ດີ ທັງບໍ່ມີເມດຕາປານີເລີຍ. ຄວາມຈິງແລ້ວແມ່ນຜູ້ນີ້ເອງທີ່ໄປຕັດງ່າແປກ ແລະຫັກກິ່ງນ້ອຍໆອອກ. ເມື່ອເຫັນເງິນຫລວງຫລາຍລາວກໍເວົ້າວ່າ: " ເຈົ້າເອົາເງິນທັງໝົດນີ້ມາແຕ່ໃສ? ໂທ່ຈັ່ງແມ່ນໃສເຫລື້ອມຍຸບໆ ງາມອີ່ຫລີ! "

ຄົນຕັດຟືນຜູ້ໃຈດີ ຫອບເງິນຂຶ້ນເພື່ອໃຫ້ຄົນຕັດຟືນອີກຜູ້ໜຶ່ງເຫັນຄັກໆ. ມັນເປັນເງິນແທ່ງສີ່ລ່ຽມ ອັນເປັນເງິນທີ່ໃຊ້ກັນໃນຍີ່ປຸ່ນ, ມີເງິນທັງໝົດເຕັມຫ້າກະຕ່າ. ຄົນຜູ້ໃຈດີ ເລົ່າເລື່ອງທີ່ລາວໄດ້ເງິນມາຈັ່ງໃດສູ່ອີກຜູ້ໜຶ່ງຟັງຈົນສຸດ.

" ຈາກຕົ້ນແປກໃຫຍ່ ຕົ້ນນັ້ນຫວະ? " ຄົນຕັດຟືນນິໄສບໍ່ດີສໍ້.

" ອີຍຍ! " ຄົນຕັດຟືນນິໄສບໍ່ດີວ່າ ແລ້ວກໍຟ້າວແລ່ນໄປໄວໆ ເທົ່າທີ່ຈະໄວໄດ້. ລາວແລ່ນກົງໄປທີ່ຕົ້ນແປກໃຫຍ່, ສ່ວນຕົ້ນແປກກ່າວວ່າ:

" ໜຽວຍືດໆແມ່ນເລືອດຂ້ອຍເດີ້
ແຕະຕ້ອງຂ້ອຍເມື່ອໃດ ເລືອດໄຫລນອງຖ້ວມເຈົ້າໂລດ "

" ກໍພໍດີແມ່ນແນວຂ້ອຍຢາກໄດ້ອັນເງິນຄຳໄຫລນອງນີ້ນ່າ." ຊາຍຕັດຟືນນິໃສບໍ່ດີວ່າ. ລາວເດ່ມີໄປຫັກງ່າໄມ້, ທັນໃດຕົ້ນແປກກໍຫົດລົງໃສ່ລາວໂລດ ແຕ່ເປັນການຫົດດ້ວຍຢາງໜຽວຍືດໆ, ບໍ່ແມ່ນຄຳ ບໍ່ແມ່ນເງິນແຕ່ຢ່າງໃດເລີຍ.

ຄົນຕັດຟືນຜູ້ໂລບມາກຖືກຢາງແປກຕິດແປດ ແລະປົກຄຸມໄປທົ່ວຮ່າງກາຍ, ມັນຕິດຜົມ ຕິດແຂນແລະຂາ. ເພາະຢາງແປກນີ້ໜຽວຫລາຍ ລາວຈຶ່ງເໜັງຕີງບໍ່ໄດ້ ແລະເຖິງແມ່ນວ່າລາວຈະຮ້ອງຂໍຄວາມຊ່ວຍເຫລືອ ແຕ່ບໍ່ມີຜູ້ໃດໄດ້ຍິນ, ລາວຕິດຢູ່ຈັ່ງຊັ້ນສາມມື້, ມື້ໜຶ່ງແມ່ນສໍາລັບງ່າໜຶ່ງໆ ທີ່ລາວຫັກໄປ. ລາວຕິດຢູ່ຈົນເທົ້າຢາງແປກເສື່ອມ ແລະອ່ອນ ພໍອອກໄດ້ລາວຈຶ່ງອີ່ລາກອີ່ເລືອກັບເມືອເຮືອນ.

ແລະນັບແຕ່ນັ້ນມາ ລາວບໍ່ຫັກງ່າໄມ້ໃດໆອອກຈາກຕົ້ນໄມ້ດິບໆຈັກເທື່ອ.

*ແປໂດຍ : ອຸທິນ ບຸນຍາວົງ*



# ແມງມຸມຕໍ່າຫູກ



ດົນນານມາແລ້ວ ມີຊາວນາຄົນໜຶ່ງຊື່ວ່າ ໂຢຊາກຸ. ມື້ໜຶ່ງຂະນະທີ່ເຮັດວຽກຢູ່ທີ່ງນາ ລາວເຫັນ ງູໂຕໜຶ່ງພວມຈະກິນແມງມຸມ. ໂຢຊາກຸ ຮູ້ສຶກ ອີ່ຕົນແມງມຸມຫລາຍ ດັ່ງນີ້ ລາວຈຶ່ງເອົາຈົກໄລ່ງູໜີໄປ, ເປັນການກອບກູ້ເອົາຊີວິດແມງມຸມໄວ້. ຕໍ່ມາແມງມຸມໄຕ່ເຂົ້າໄປໃນປ່າຫຍ້າ, ແຕ່ກ່ອນອື່ນໃດ ມັນຢຸດຄາວໜຶ່ງແລ້ວກົ້ມຫົວລົງສະແດງຄວາມຂອບໃຈຕໍ່ ໂຢຊາກຸ.

ເຊົ້າມື້ໜຶ່ງ ລຸນຫລັງນັ້ນບໍ່ດົນ, ຂະນະທີ່ ໂຢຊາກຸຢູ່ໃນເຮືອນ ລາວກໍໄດ້ຍິນສຽງນ້ອຍໆຮ້ອງມາໃສ່ວ່າ: " ໂຢຊາກຸ ໂຢຊາກຸເອີຍ."

ລາວໄປທີ່ປະຕູເລີຍເຫັນຍິງສາວງາມຢາດຍ້ອຍ ຢືນຢູ່ເດີ່ນບ້ານ.

" ຂ້ອຍໄດ້ຍິນວ່າ ເຈົ້າພວມຊອກຫາຄົນມາຕໍ່າຫູກ ເຮັດເຄື່ອງນຸ່ງ." ນາງວ່າ "ໃຫ້ຂ້ອຍຢູ່ເຮືອນນໍາໄດ້ບໍ່ ແລ້ວຂ້ອຍຊິຕໍ່າຫູກໃຫ້?"

ໂຢຊາກຸດີໃຈຫລາຍ ເພາະລາວຕ້ອງການສາວຕໍ່າຫູກຢູ່ແລ້ວ, ດັ່ງນີ້ ລາວຈຶ່ງພານາງໄປຫ້ອງຕໍ່າຫູກ. ນາງພໍໃຈແລະເຂົ້ານັ່ງແປ້ນກີ່ເລີ່ມເຮັດວຽກໂລດ. ຕົກຮອດມື້ແລງ ໂຢຊາກຸໄປຫານາງທີ່ກີ່ຕໍ່າຫູກອີກ ແລ້ວກໍຕື່ນເຕັ້ນຢ່າງໃຫຍ່ເມື່ອເຫັນວ່າ ນາງຕໍ່າແພສໍາເລັດໄປແລ້ວແປດຜືນ ພຽງພໍທີ່ຈະຕັດເຄື່ອງນຸ່ງ ຊຸດກີໂມໂນ. ລາວບໍ່ເຄີຍຮູ້ເຄີຍເຫັນຜູ້ໃດມາກ່ອນຈັກເທື່ອທີ່ສາມາດຕໍ່າແພໄດ້ຫລາຍປານນີ້ໃນມື້ດຽວ.

" ເຈົ້າເຮັດແນວໃດ ຈຶ່ງຕໍ່າໄດ້ຫລາຍປານນີ້? " ລາວຖາມນາງ, ແຕ່ແທນທີ່ນາງຈະຕອບ ນາງຊໍ້າເວົ້າແນວຕ່າງໄປກວ່ານັ້ນວ່າ: " ເຈົ້າຕ້ອງບໍ່ຖາມຂ້ອຍຈັ່ງຊັ້ນ, ແລະເຈົ້າຕ້ອງບໍ່ເຂົ້າມາຫ້ອງນີ້ຈັກເທື່ອ ໃນເວລາຂ້ອຍພວມຕໍ່າຫູກຢູ່."

ແຕ່ໂຢຊາກຸຊໍ້າແຮ່ງຢາກຮູ້ຢາກເຫັນ. ດັ່ງນີ້ ມື້ໜຶ່ງລາວຈຶ່ງຫລອຍເຂົ້າໄປ ໃກ້ຫ້ອງຕໍ່າຫູກ ແລະສ່ອງປ່ອງຢ້ຽມເບິ່ງ.

ສິ່ງທີ່ລາວເຫັນນັ້ນເຮັດໃຫ້ລາວຕື່ນເຕັ້ນສຸດຂະໜາດ ເພາະມັນບໍ່ແມ່ນນາງສາວ ທີ່ນັ່ງຢູ່ແປ້ນກີ່ ຫາກແຕ່ແມ່ນແມງມຸມໃຫຍ່ທີ່ໃຊ້ຕີນທັງແປດຕໍ່າແພຢ່າງວ່ອງໄວ, ສ່ວນເສັ້ນດ້າຍກໍແມ່ນໃຊ້ໄຍແມງມຸມທີ່ສາວອອກມາຈາກປາກນັ້ນເອງ.



ໂຢຊາກຸ ແນມເບິ່ງຄັກໆ ແລ້ວກໍຮູ້ວ່າມັນແມ່ນແມງມຸມຕົວດຽວກັນກັບທີ່ລາວໄດ້ຊ່ວຍກອບກູ້ຊີວິດເອົາໄວ້ໃນມື້ນັ້ນ. ຕໍ່ມາໂຢຊາກຸກໍເຂົ້າໃຈເລື່ອງທັງໝົດເອງ. ແມງມຸມຮູ້ບຸນຄຸນຫລາຍມັນຈຶ່ງຢາກເຮັດອັນໃດອັນໜຶ່ງເພື່ອຊ່ວຍໂຢຊາກຸ. ມັນແປງເພດເປັນນາງສາວຜູ້ງົດງາມແລ້ວມາຕໍ່າແຜ່ນແພໃຫ້ໂຢຊາກຸ. ທໍາອິດມັນກິນຝ້າຍເຂົ້າໄປ ແລ້ວສາວອອກມາເປັນເສັ້ນດ້າຍຈາກກະໂຕມັນເອງ, ຕໍ່ມາມັນກໍໃຊ້ຕີນທັງແປດຕໍ່າແຜ່ນແພຢ່າງວ່ອງໄວທັນໃຈ.

ໂຢຊາກຸ ສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫລືອຕໍ່ແມງມຸມທີ່ໄດ້ຊ່ວຍລາວ. ຕໍ່ມາ ລາວເຫັນວ່າຝ້າຍໃກ້ຈະໝົດແລ້ວ, ດັ່ງນີ້ເຊົ້າມື້ຕໍ່ມາ ລາວຈຶ່ງອອກເດີນທາງໄປຍັງບ້ານທີ່ຢູ່ໃກ້ສຸດ ຄືຢູ່ອີກເບື້ອງໜຶ່ງຂອງພູເຂົາເພື່ອຊື້ຝ້າຍມາຕື່ມອີກ. ລາວຊື້ຝ້າຍມັດບັກໃຫຍ່ແລ້ວແບກໃສ່ຫລັງຍ່າງກັບບ້ານ.

ຕາມເສັ້ນທາງ ມີເລື່ອງເປັນຕາຕົບສັ່ນເກີດຂຶ້ນ. ຄືຂະນະທີ່ໂຢຊາກຸ ນັ່ງເຊົາເມື່ອຍຢູ່ນັ້ນກໍມີງູໂຕໜຶ່ງເລັດລອດເຂົ້າໄປໃນມັດຝ້າຍ. ແມ່ນງູຕົວດຽວກັນກັບທີ່ລາວເຄີຍໄລ່ໜີຈາກແມງມຸມນັ້ນເອງ. ແຕ່ໂຢຊາກຸບໍ່ຮູ້ເລີຍວ່າ ງູມາລັກລີ້ຢູ່ໃນຝ້າຍ. ລາວຈຶ່ງແບກມັດຝ້າຍໄປຮອດເຮືອນ ແລ້ວເອົາມາມອບໃຫ້ສາວຕໍ່າຫູກ.

ນາງດີໃຈຫລາຍທີ່ໄດ້ຝ້າຍຕື່ມ ເພາະຝ້າຍທີ່ມີຢູ່ກ່ອນນັ້ນນາງເອົາຕໍ່າໝົດແລ້ວ.

ຕໍ່ມານາງເອົາມັດຝ້າຍເຂົ້າໄປໃນຫ້ອງຕໍ່າຫູກ.

ທັນທີ ທີ່ນາງເຂົ້າຮອດໃນຫ້ອງ ນາງກໍແປງເພດເປັນແມງມຸມຄືນ ແລະເລີ່ມກິນຝ້າຍຢ່າງວ່ອງໄວທີ່ສຸດ ປານວ່າມັນແມ່ນຂອງແຊບນົວເພື່ອຈະໄດ້ເຮັດເປັນເສັ້ນດ້າຍ ຢູ່ໃນຮ່າງຄີງຂອງນາງເອງ.

ນາງແມງມຸມກິນຝ້າຍເຂົ້າໄປບໍ່ຢຸດ ກິນແລ້ວກໍກິນ, ເມື່ອກິນໄປຈົນເກືອບໝົດມັດຝ້າຍ, ແລ້ວໃນທັນໃດ ງູກໍຄະລາດອອກມາຈາກຝ້າຍນັ້ນ. ງູອ້າປາກກວ້າງ ເພື່ອຈະກືນກິນແມງມຸມ. ແມງມຸມຕົກໃຈຢ້ານ ແລ້ວໂດດໜີທາງປ່ອງຢ້ຽມ. ສ່ວນງູເລືອຽ້ອກແຽ້ກໄລ່ນຳຫລັງແມງມຸມໄປໄວໆ. ເພາະແມງມຸມກິນຝ້າຍເຂົ້າໄປຫລວງຫລາຍ ມັນເລີຍແລ່ນບໍ່ໄວປານໃດ, ດັ່ງນີ້ ງູຈຶ່ງໄລ່ທັນແມງມຸມ, ງູອ້າປາກກວ້າງເພື່ອຊິກືນກິນແມງມຸມອີກເທື່ອໜຶ່ງ, ຄ້ອມພໍດີມີແນວອັດສະຈັນເກີດຂຶ້ນ.

ລຸງຕາເວັນ ຢູ່ເທິງຟ້າ ສ່ອງລົງມາເບິ່ງເຫດການທີ່ພວມເກີດຂຶ້ນຢູ່. ລາວຮູ້ວ່າແມງມຸມດີຕໍ່ໂຢຊາກຸ ຈັ່ງໃດ, ລາວຮູ້ສຶກອີ່ຕົນແມງມຸມຫລາຍ. ດັ່ງນີ້ ລຸງຕາເວັນຈຶ່ງສົ່ງເລົາແສງລົງມາເກາະເອົາສິ້ນຂອງໄຍທີ່ຄາຢູ່ປາກແມງມຸມ ແລ້ວຊັກໂຕແມງມຸມຂຶ້ນໄປເທິງຟ້າຈົນງູບໍ່ສາມາດໄປເຖິງໄດ້.

ແມງມຸມສະແດງຄວາມຮູ້ບຸນຄຸນຕໍ່ລຸງຕາເວັນທີ່ໄດ້ກອບກູ້ເອົາຕົນຈາກປາກຂອງງູ. ດັ່ງນີ້ແມງມຸມຈຶ່ງໃຊ້ຝ້າຍທີ່ຢູ່ໃນທ້ອງມັນທັງໝົດຕໍ່າເປັນກ້ອນເມກສີຂາວຢູ່ຕາມທ້ອງຟ້າ. ເພິ່ນເລົ່າກັນວ່າ ນີ້ຄືເຫດຜົນທີ່ວ່າ ເປັນຫຍັງກ້ອນເມກຈຶ່ງອ່ອນນຸ່ມແລະຂາວຄືຝ້າຍ, ແລະດ້ວຍເຫດຜົນດັ່ງດຽວກັນນີ້ ເປັນຫຍັງທັງແມງມຸມ ແລະກ້ອນເມກຈຶ່ງມີຊື່ດຽວກັນໃນພາສາຍີ່ປຸ່ນຄື ກູໂມະ.

*ແປໂດຍ : ອຸທິນ ບຸນຍາວົງ*

# ນົກຈອກລີ້ນກຸດ



ຄັ້ງໜຶ່ງ ຍັງມີພໍ່ເຖົ້າຄົນໜຶ່ງ, ລາວມີເມຍເປັນຄົນໃຈແຄບ ທັງໂມໂຫຮ້າຍ. ທັງສອງບໍ່ມີລູກຈັກຄົນ, ດັ່ງນັ້ນພໍ່ເຖົ້າຈຶ່ງເອົານົກຈອກນ້ອຍມາລ້ຽງໄວ້ເບິ່ງ. ພໍ່ເຖົ້າເອົາໃຈໃສ່ລ້ຽງດູນົກນ້ອຍຢ່າງຖະໜອມແພງ. ທຸກມື້ເມື່ອກັບຈາກວຽກງານມາຮອດເຮືອນ ລາວມັກໄປແຍງເບິ່ງນົກນ້ອຍ ທັງເວົ້າກັບມັນຈົນຮອດຍາມກິນເຂົ້າແລງ, ແລ້ວລາວກໍຈະເອົາຂອງກິນໃນຈານຂອງລາວ ເກືອນົກໄປພ້ອມ. ລາວລ້ຽງນົກຈອກໂຕນີ້ພໍປານວ່າມັນເປັນລູກຄືງໆ.

ສ່ວນແມ່ເຖົ້າ ບໍ່ຄ່ອຍມີໃຈເອື້ອເຟື້ອຕໍ່ຜູ້ໃດ ຫລື ຕໍ່ສິ່ງໃດເລີຍ. ລາວຊັງນົກຈອກໂຕນີ້ເປັນພິເສດ ແລະດ່າຜົວຢູ່ເລື້ອຍໆທີ່ລ້ຽງແນວໄຮ້ປະໂຫຍດໄວ້ໃນເຮືອນ. ຮອດມື້ໃດທີ່ຕ້ອງຊັກເຄື່ອງແລ້ວ ແມ່ເຖົ້າແຮ່ງໃຈຮ້າຍເປັນພິເສດ, ທັງນີ້ ເພາະລາວຄ້ານເຮັດວຽກໜັກ.

ຢູ່ມາມື້ໜຶ່ງ ຂະນະທີ່ພໍ່ເຖົ້າອອກໄປເຮັດວຽກຢູ່ທົ່ງນາ, ແມ່ເຖົ້າກະກຽມຊັກເຄື່ອງ ທຳອິດລາວຕົ້ມແປ້ງເພື່ອລີດເຄື່ອງແລ້ວຖອກໃສ່ແອ່ງໄມ້ໄວ້ເພື່ອໃຫ້ມັນເຢັນລົງ, ເວລາທີ່ລາວປິ່ນໜ້າໄປເຮັດວຽກທາງອື່ນ, ນົກຈອກກໍ່ບິນລົງມາຈັບຂອບແອ່ງ ແລ້ວຈິກກິນແປ້ງນັ້ນ. ຄ້ອມພໍດີ ແມ່ເຖົ້າງວາກມາເຫັນ ນົກຈອກພວມກິນແປ້ງຢູ່ ລາວໂມໂຫສຸດຂີດ ຈຶ່ງຄວ້າໄດ້ມີດຕັດ ແລ້ວຕັດລີ້ນນົກຈອກຂາດທັນໃດ ! ຕໍ່ມາລາວໂຍນນົກຂຶ້ນໄປກາງອາກາດ ທັງຮ້ອງໃສ່ວ່າ : " ບັດນີ້ໜີໄປໄກໆ ນົກຈັງໄຮ ! " ດັ່ງນີ້ນົກຈອກອາພັບຈຶ່ງບິນໜີເຂົ້າປ່າໄປ.

ເວລາຕໍ່ມາ ພໍ່ເຖົ້າກັບຕ່າວມາຮອດເຮືອນ ແລະພົບວ່ານົກຈອກໜີໄປແລ້ວ. ລາວຊອກຫານົກ ຊອກແລ້ວຊອກອີກ ທັງຖາມເມຍວ່າ ນົກໄປໃສ. ຈົນໃນທີ່ສຸດເມຍກໍ່ບອກເລື່ອງທີ່ນາງໄດ້ເຮັດລົງໄປ. ພໍ່ເຖົ້າຮູ້ສຶກເສຍດາຍນົກຫລາຍ, ເຊົ້າມື້ຕໍ່ມາ ລາວຈຶ່ງເຂົ້າປ່າ ປໍາຫານົກຈອກ ທັງປາກກໍ່ເອີ້ນຢູ່ບໍ່ເຊົາ : " ນົກຈອກນ້ອຍເອີຍ ລູກຢູ່ໃສ ? "

ທັນໃດນັ້ນ ນົກຈອກກໍ່ບິນມາຫາພໍ່ເຖົ້າ. ມັນນຸ່ງຊຸດກີໂມໂນອັນງົດງາມຂອງແມ່ຍິງ ແລະປາກເວົ້າສຽງຄືນໄດ້. ນົກຈອກເວົ້າວ່າ : " ສະບາຍດີ ພໍ່ເຖົ້າ ຄືຊິເມື່ອຍຫລາຍນໍ້ ຂໍໃຫ້ພໍ່ເຖົ້າໄປພັກຢູ່ເຮືອນລູກສາກ່ອນ. "

ເມື່ອພໍ່ເຖົ້າ ໄດ້ຍິນສຽງນົກຈອກເວົ້າ ລາວກໍເຂົ້າໃຈໂລດວ່າ ຕ້ອງແມ່ນນົກຈອກເທວະດາ. ດັ່ງນີ້ ລາວຈຶ່ງຕິດຕາມນົກໄປ ແລະ ບໍ່ດົນກໍໄປຮອດເຮືອນງາມໆ ຫລັງໜຶ່ງຢູ່ກາງປ່າ. ນົກພາພໍ່ເຖົ້າເຂົ້າໄປໃນເຮືອນ ແລະໄປນັ່ງທີ່ຫ້ອງຮັບແຂກ. ນົກມີລູກສາວຫລາຍໂຕ, ພວກນາງພາກັນເອົາຂອງກິນແຊບໆ ພ້ອມດ້ວຍເຄື່ອງດື່ມມາສູ່ພໍ່ເຖົ້າກິນ. ສົ່ນາງໃນຈຳນວນນີ້ ພາກັນຟ້ອນຢ່າງງົດງາມອ່ອນຊ້ອຍ. ພວກນາງຟ້ອນງາມຫລາຍຈົນພໍ່ເຖົ້າຕົບມືບໍ່ເຊົາທັງບອກໃຫ້ນາງຟ້ອນຕໍ່ໄປເລື້ອຍໆ. ລາວມ່ວນຈົນລືມເວລາ.

ກ່ອນລາວຈະຄຶດສະເດືອກໄດ້ ຕາເວັນກໍພວມຈະລີ້ງລັບຂອບຟ້າແລ້ວ, ລາວຈຶ່ງຟ້າວລຸກຂຶ້ນແລະເວົ້າວ່າ ລາວຕ້ອງຟ້າວກັບເມືອເຮືອນເພາະຢ້ານເມຍລາວເປັນຫ່ວງນຳ. ນົກຈອກຂໍໃຫ້ລາວຢູ່ຕໍ່, ລາວເອງກໍມ່ວນອອນຊອນ ຈົນບໍ່ຢາກລຸກໜີຈາກໄປ. ແຕ່ເຖິງປານນັ້ນ ລາວກໍຍັງບອກວ່າ: " ບໍ່ດອກ, ພໍ່ເຖົ້າຕ້ອງເມືອແທ້ໆ."

ນົກຈອກເວົ້າວ່າ: " ຖ້າຈັ່ງຊັ້ນ ລູກຂໍມອບຂອງຂວັນໃຫ້ພໍ່ເຖົ້າເອົາເມືອເຮືອນນຳ. "

ແລ້ວນົກຈອກໍເອົາກະຕ່າອອກມາສອງໜ່ວຍ, ໜ່ວຍໜຶ່ງໃຫຍ່ທັງໜັກ ແລະອີກໜ່ວຍໜຶ່ງນ້ອຍທັງເບົາ. ນົກຈອກບອກວ່າ: " ພໍ່ເຖົ້າເລືອກເອົາຕາມໃຈໜ່ວຍໜຶ່ງ. " ພໍ່ເຖົ້າບໍ່ເປັນຄົນໂລບມາກໂລພາ ລາວຈຶ່ງຈັບເອົາກະຕ່າໜ່ວນນ້ອຍ ແລ້ວເດີນທາງເມືອບ້ານ. ເມື່ອມາຮອດເຮືອນ ລາວໄດ້ບອກເມຍກ່ຽວກັບເລື່ອງທີ່ໄດ້ໄປພົບພໍ້ມາ, ແລ້ວລາວກໍໄຂກະຕ່າອອກ. ຂ້າງໃນນັ້ນເຕັມໄປດ້ວຍສິ່ງຂອງວິເສດນາໆຊະນິດ, ມີຄຳ, ເງິນ, ເພັດ, ແກ້ວພິລາ, ຫີນປະກາລັງ ແລະ

ຖົງເງິນ. ຊັບສິນບັດໃນກະຕ່ານີ້ ພຽງພໍສຳລັບສອງເຖົ້າ ທີ່ຈະຢູ່ຢ່າງເສດຖີໄປຈະຫລອດຊີວິດ.

ພໍ່ເຖົ້າດີໃຈຫລາຍເມື່ອເຫັນຊັບສິນບັດເຫລົ່ານີ້. ແຕ່ແມ່ເຖົ້າກັບໃຈຮ້າຍຂຶ້ນວົ່ງ ລາວດ່າຜົວວ່າ : " ເຈົ້າໂງ່ອີ່ຫລີ ! ເປັນຫຍັງຈຶ່ງບໍ່ເລືອກເອົາກະຕ່າໜ່ວຍໃຫຍ່. ຄັນຊັ້ນພວກເຮົາຄືຊິໄດ້ເງິນຄຳຫລາຍກວ່ານີ້ແລ້ວ. ຂ້ອຍຊິໄປເຮືອນນົກຈອກເອງແລ້ວເອົາກະຕ່າໜ່ວຍນັ້ນມາ. "

ພໍ່ເຖົ້າຂໍຮ້ອງເມຍບໍ່ໃຫ້ເປັນຄົນໂລບມາກຫລາຍໂດຍເວົ້າວ່າສອງຄົນເຂົາເຈົ້າເອງມີພຽງພໍແລ້ວ. ແຕ່ແມ່ເຖົ້າໄດ້ຕັດສິນໃຈແລ້ວທີ່ຈະເຮັດຕາມຄິດໄວ້. ລາວເອົາເກີບເຟືອງມາສຸບແລ້ວອອກເດີນທາງ.

ເມື່ອໄປຮອດເຮືອນນົກຈອກ ແມ່ເຖົ້າກໍເວົ້າສຽງຫວານຈ້ອຍໆ. ນົກຈອກເຊີນລາວເຂົ້າໄປໃນເຮືອນແລ້ວເອົານ້ຳຊາ ແລະເຂົ້າໜົມມາສູ່ກິນ. ເມື່ອແມ່ເຖົ້າກຽມໂຕຈະກັບຄືນ ຝ່າຍນົກຈອກກໍຍົກເອົາກະຕ່າອອກມາອີກ, ກະຕ່າໃຫຍ່ໜ່ວຍໜຶ່ງ ແລະກະຕ່ານ້ອຍໜ່ວຍໜຶ່ງ, ທັງບອກແມ່ເຖົ້າວ່າໃຫ້ເລືອກເອົາໜ່ວຍໜຶ່ງ. ຝ່າຍແມ່ເຖົ້າກໍປຸ໊ບປັ໊ບຄວ້າເອົາກະຕ່າໃຫຍ່ໂລດ, ມັນໜັກແທ້ໜັກວ່າ ຈົນລາວຍົກໃສ່ບ່າຍາກແສນຍາກ, ແຕ່ຍ້ອນນົກຈອກຊ່ອຍ ລາວຈຶ່ງແບກໃສ່ບ່າໄດ້ ແລ້ວກໍຍ່າງກັບເມືອບ້ານ.

ຂະນະຍ່າງໄປຕາມທາງ ກະຕ່າກໍໜັກຂຶ້ນໜັກຂຶ້ນຊຸກໃຊ້, ແມ່ເຖົ້າຄຶດສົງໄສຢູ່ບໍ່ເລົາກບໍ່ແລ້ວວ່າ ໃນກະຕ່າມີຫຍັງຄືພິລຶກແທ້. ບາດແລ້ວ ລາວກໍນັ່ງລົງແຄມທາງ ແລະດ້ວຍຄວາມຢາກຮູ້ຢາກເຫັນລາວເລີຍໄຂກະຕ່າອອກເບິ່ງ. ເມື່ອໄຂອອກປັ໊ບ! ແນວເປັນຕາຢ້ານທຸກຢ່າງກໍພົບໃສ່ລາວ ເຊັ່ນ: ຫົວຜີຂາດສົ່ງສຽງຄາງໃສ່ເປັນຕາຂົນ

ລຸກ, ແມງຕໍ່ພ້ອມດ້ວຍໄລແຫລມຍາວບິນມາພຶບໆ, ແລ້ວກໍ່ມີງູ, ຄັນຄາກ ແລະອື່ນໆຊຶ່ງລ້ວນແຕ່ເປັນຕາອະເຫຍືອງ. ແມ່ເຖົ້າສະທ້ານສັ່ນເຊັ່ນສຸດຂີດ.

ລາວລຸກປຶ້ບປັ໊ບ ແລ້ວແລ່ນຕາລີ້ຕາລານ ກັບເມືອເຮືອນຢ່າງໄວຈີນສຸດແຮງເກີດຂອງລາວ, ແລະບອກພໍ່ເຖົ້າເຖິງເລື່ອງທີ່ເກີດຂຶ້ນ. ບາດແລ້ວລາວກໍກ່າວວ່າ : " ຂ້ອຍສາບານວ່າ ຈະບໍ່ເປັນຄົນຄັບແຄບ ແລະໂລບມາກໂລພາອີກຈັກເທື່ອ. " ເບິ່ງແລ້ວກໍຄືວ່າລາວໄດ້ຮຽນຮູ້ ແລະຊາບຊຶ້ມບົດຮຽນຢ່າງເຖິງຖອງ ເພາະນັບແຕ່ບັດນັ້ນເປັນຕົ້ນມາ ລາວກາຍເປັນຄົນໃຈດີ ແລະພະຍາຍາມຊ່ວຍພໍ່ເຖົ້າເອົາອາຫານເກືອນົກທີ່ບິນເຂົ້າມາໃນສວນສະເໝີໆ.

*ແປໂດຍ : ສຸນີນທາ ກັນລະຍາ*



# ກະຕ່າຍໃນດວງຈັນ



ຄັ້ງ ໜຶ່ງດົນນານມາແລ້ວ ພໍ່ເຖົ້າຜູ້ຢູ່ໃນດວງຈັນສ່ອງລົງມາຍັງໂລກມະນຸດ ເລີຍເຫັນກະຕ່າຍ, ລິງ ແລະໝາຈອກ ອາໄສຢູ່ໃນປ່າ ແຫ່ງໜຶ່ງ, ສັດທັງສາມຮັກແພງກັນທີ່ສຸດ.

" ເອ... ສັດໂຕໃດນໍທີ່ໃຈດີກວ່າໝູ່. " ພໍ່ເຖົ້າ ເວົ້າກັບຕົນເອງ " ຄິດວ່າ ຊິລົງໄປເບິ່ງເອງກ່ອນ. "ດັ່ງນີ້ ພໍ່ເຖົ້າຈຶ່ງແປງເພດເປັນຄົນຂໍທານ ແລ້ວລົງຈາກດວງຈັນ ມຸ່ງໜ້າເຂົ້າໄປໃນປ່າ ບ່ອນທີ່ສັດທັງສາມຢູ່. ລາວເວົ້າກັບພວກສັດວ່າ :



" ໂອຍ ຊ່ອຍຂ້ອຍແດ່. ຂ້ອຍຫິວຫລາຍ ຫິວອີ່ຫລີ. "

" ໂທ! ເປັນຕາອີ່ຕົນແທ້ ພໍ່ເຖົ້າຂໍທານນີ້. " ສັດທັງສາມວ່າ ແລ້ວກໍຟ້າວແລ່ນໄປຫາຂອງກິນມາໃຫ້.

ລີງຫອບເອົາໝາກໄມ້ມາ, ໝາຈອກໄດ້ປາໂຕໃຫຍ່ມາ, ສ່ວນກະຕ່າຍບໍ່ໄດ້ຫຍັງມາເລີຍ.

" ຂ້ອຍນໍ້ຂ້ອຍ! ຂ້ອຍຊິເຮັດຈັ່ງໃດ?" ກະຕ່າຍຈົ່ມທຸກ ແລ້ວໃນທັນໃດນັ້ນມັນກໍຄິດອອກ ແລະເວົ້າຂຶ້ນວ່າ :

" ຈົ່ງຊ່ອຍເຮົາແດ່ລີງ " ກະຕ່າຍເວົ້າ " ຊ່ອຍໄປຫາເອົາຟືນມາໃຫ້ເຮົາແດ່. ແລ້ວກໍຂໍໃຫ້ໝາຈອກດັງໄຟກອງບັກໃຫຍ່ໆໃຫ້ເຮົາແດ່. "

ທັງສອງເຮັດຕາມທີ່ກະຕ່າຍຂໍຮ້ອງ ແລະເມື່ອກອງໄຟລຸກໄໝ້ຮຸ່ງອີ່ງຕິ່ງ ກະຕ່າຍກໍບອກ ພໍ່ເຖົ້າຂໍທານວ່າ: " ຂ້ອຍບໍ່ມີຫຍັງຊິໃຫ້ເຈົ້າ. ດັ່ງນີ້ຂ້ອຍຈຶ່ງຊິເອົາຕົວເອງຈີ່ໄຟ ແລະເມື່ອໃດຂ້ອຍສຸກດີແລ້ວເຈົ້າກິນຂ້ອຍໄດ້ໂລດ. "

ກະຕ່າຍພວມຈະໂດດເຂົ້າກອງໄຟ ເພື່ອໃຫ້ຕົວເອງສຸກ ແຕ່ທັນໃດນັ້ນ ຄົນຂໍທານ ກໍແປງເພດເປັນພໍ່ເຖົ້າໃນດວງຈັນຄືນ.

" ເຈົ້າເສຍສະຫລະອີ່ຫລີ ທ້າວກະຕ່າຍ " ພໍ່ເຖົ້າວ່າ

" ແຕ່ເຈົ້າບໍ່ຄວນທຳຮ້າຍຕົວເອງຈັກເທື່ອ. ໃນເມື່ອເຈົ້າເປັນຜູ້ໃຈດີກວ່າໝູ່ ຂ້ອຍຈຶ່ງຊິເອົາເຈົ້າໄປຢູ່ເຮືອນນຳ. "

ແລ້ວພໍ່ເຖົ້າໃນດວງຈັນ ກໍອູ້ມເອົາກະຕ່າຍ ພາໄປຢູ່ນຳທີ່ດວງຈັນ. ຫລຽວເບິ່ງແມະ! ຖ້າເຈົ້າເບິ່ງຄັກໆ ຍາມເດືອນຫງາຍ ທີ່ໃສແຈ້ງ ເຈົ້າຈະເຫັນກະຕ່າຍຢູ່ເທິງພຸ້ນ, ພໍ່ເຖົ້າເອົາໄປຢູ່ນຳເມື່ອດົນແສນດົນມາແລ້ວ.

*ແປໂດຍ : ສຸບັນທາ ກັນລະຍາ*

# ຊາຍເຕັ້ນຄືລີງ ຍິງເຕັ້ນຄືນົກ



**ຄັ້ງ** ໜຶ່ງ ພໍ່ເຖົ້າຕັດຟືນຄົນໜຶ່ງ ຂຶ້ນໄປເທິງພູ ເພື່ອຫາຕັດໄມ້, ໄປຕາມໄປກໍເລີຍຫລົງທາງ. ລາວຍ່າງຢູ່ເປັນເວລາດົນນານ ໂດຍບໍ່ ຮູ້ວ່າຕີນເອງຍ່າງໄປທາງໃດ, ຈົນໃນທີ່ສຸດ ລາວກໍໄດ້ຍິນສຽງດົນຕີ ດັງມາແຕ່ໄກ ແລະໄດ້ກິ່ນ ອາຫານ ແລະເຫລົ້າ ລອຍມາເຂົ້າດັງ.

ເມື່ອຂຶ້ນໄປເທິງຈອມພູ ລາວກໍເຫັນລີງຝູງໃຫຍ່ ຊຶ່ງພວມກິນ ອາຫານ ທັງເຕັ້ນ ທັງຮ້ອງເພງ ທັງດື່ມເຫລົ້າຊະນິດໜຶ່ງ ຊຶ່ງພວກ

ລີງເອງເຮັດຈາກເມັດເຂົ້າ. ກິ່ນເຫລົ້ານີ້ດີຫລາຍ ຈີນພໍ່ເຖົ້າຄຶດຢາກໄດ້ຂຶ້ນມາທັນໃດ.

ພວກລີງພາກັນຮ້ອງເພງ ແລະເຕັ້ນລໍາຢ່າງມ່ວນຊື່ນ ຈີນພໍ່ເຖົ້າຕື່ນຕາຕື່ ແລ້ວຕໍ່ມາ ລີງໂຕໜຶ່ງກໍຈັບເອົານໍ້າເຕົ້າ ຮ່າຍເຫລົ້າໃສ່ ແລະກ່າວວ່າ ຮອດເວລາແລ້ວ ທີ່ມັນຕ້ອງຕ່າວຄືນເຮືອນກ່ອນ. ລີງໂຕອື່ນໆກ່າວວ່າ ຈິ່ງເມືອດີ, ແລ້ວລີງໂຕນີ້ກໍກັບເມືອ. ເມື່ອພໍ່ເຖົ້າເຫັນດັ່ງນັ້ນ ລາວກໍຕັດສິນໃຈຕິດຕາມລີງໄປ ເພື່ອເບິ່ງວ່າ ຊິພໍມີທາງ ເອົາເຫລົ້າໄດ້ແດ່ບໍ່.

ໄປບໍ່ດົນ ນໍ້າເຕົ້າໃສ່ເຫລົ້ານັ້ນກໍໜັກຂຶ້ນ ໜັກຂຶ້ນ. ດັ່ງນີ້ ລີງຈຶ່ງຢຸດ ແລ້ວຫຍົ້ນເຫລົ້າລົງໃສ່ໂຖໄວ້ສ່ວນໜຶ່ງ. ມັນເອົານໍ້າເຕົ້າທີ່ມີເຫລົ້າເຫລືອຢູ່ນັ້ນ ໄປເຊື່ອງໄວ້ໂກນຕົ້ນໄມ້ແກ່ໆຕົ້ນໜຶ່ງ, ແລ້ວກໍເອົາໂຖເຫລົ້າຕັ້ງໃສ່ຫົວ ຍ່າງໄປຢ່າງມ່ວນຊື່ນ ໂດຍພະຍາຍາມບໍ່ໃຫ້ໂຖເຫລົ້າຕົກລົງມາ.

ພໍ່ເຖົ້າທີ່ພະຍາຍາມຈອບເບິ່ງຢູ່ນັ້ນ ກໍເຫັນເຫດການທັງໝົດ. ເມື່ອລີງໄປໄກແລ້ວ ພໍ່ເຖົ້າເວົ້າຂຶ້ນວ່າ : " ລີງຄືຊິບໍ່ວ່າຫຍັງດອກ ຖ້າຂ້ອຍຊິຢືມເຫລົ້າວິເສດນີ້ໜ້ອຍໜຶ່ງ. " ເວົ້າແລ້ວລາວກໍແລ່ນໄປທີ່ຕົ້ນໄມ້ມີໂກນນັ້ນ ຈັດການຫຍົ້ນເອົາເຫລົ້າໃສ່ໂຖຫລາຍເຕີບ. " ຄັກອີຫລີ " ລາວຄຶດ " ຖ້າມັນແຊບສົມດັ່ງໄດ້ກິ່ນແລ້ວ ຈັ່ງໃດກໍຕ້ອງແມ່ນຍອດເຫລົ້າແທ້ໆ. ຂ້ອຍຊິເອົາໄປຕ້ອນເມຍ ຖ້າວ່າຂ້ອຍຮູ້ຈັກທາງເມືອບ້ານໃດລະ !"

ເວລາດຽວກັນນີ້ ເມຍຂອງລາວກໍມີເລື່ອງຜະຈົນໄພ ຄືວ່າ ຂະນະທີ່ແມ່ເຖົ້າພວມຊັກເຄື່ອງຢູ່ກ້ອງຕົ້ນໄມ້ນັ້ນ ທັນໃດ ແມ່ເຖົ້າ

ກໍມາບເຫັນພວກນົກຈອກພວມຊຸມແຊວກັນຄ້າຍໆຄືເປັນງານລ້ຽງ, ນົກເຫລົ່ານີ້ ພວມກິນອັນໃດອັນໜຶ່ງທີ່ມີກິ່ນດີໆ ຈົນລາວຄຶກຢາກໄດ້ໄວ້ສ່ວນໜຶ່ງ.

ດັ່ງນີ້ ເມື່ອນົກຈອກເລີກຊຸມແຊວ ເຊົາເຕັ້ນລຳ ເຊົາຮ້ອງເພງແລ້ວ ແມ່ເຖົ້າກໍຄວ້າເອົານ້ຳເຕົ້າ ມາເຊື່ອງໄວ້ດ້ານໃນເສື້ອຍ່າມ ແລ້ວຟ້າວກັບເມືອເຮືອນ.

" ຂ້ອຍຊິເອົາອັນນີ້ໄປໄວ້ໃຫ້ພໍ່ເຖົ້າ. " ລາວຄຶດ " ຖ້າມັນແຊບສົມດັ່ງໄດ້ກິ່ນແລ້ວ ຈັ່ງໃດກໍຕ້ອງແມ່ນຍອດເຫລົ້າແທ້ໆ. "

ແມ່ເຖົ້າມາຮອດເຮືອນ ບໍ່ທັນດົນ, ພໍ່ເຖົ້າກໍປາກົດຕົວເຊັ່ນດຽວກັນ ຫລັງຈາກທີ່ໄດ້ຊອກຫາທາງກັບບ້ານຈົນພົບໃນທີ່ສຸດ.

" ຂ້ອຍມີແນວໃຫ້ເຈົ້າເບິ່ງ " ທັງສອງເວົ້າຂຶ້ນພ້ອມໆກັນ. ແລ້ວຕໍ່ມາ ແຕ່ລະຝ່າຍກໍເລົ່າເລື່ອງທີ່ຕົນໄດ້ປະສົບມາສູ່ກັນຟັງ. ຕໍ່ມາອີກ ທັງສອງແລກປ່ຽນເຫລົ້າຊຶ່ງກັນແລະກັນ ແລ້ວພາກັນດື່ມຢ່າງພໍອົກພໍໃຈ.

ຄັກອີ່ຫລີ ເຫລົ້າອັນນີ້, ແຕ່ພໍດື່ມໄປບໍ່ດົນ ທັງສອງກໍຮູ້ສຶກວ່າປວດຈ້າວໆຢາກເຕັ້ນລຳ, ຢາກຮ້ອງເພງ ຈົນອົດໄວ້ບໍ່ໄດ້. ແມ່ເຖົ້າເລີ່ມຕົ້ນ ເວົ້າໄປ່ ແລະເຕັ້ນກະຢ່ອງກະແຢ້ງ ຄືລີງ, ສ່ວນພໍ່ເຖົ້າວາແຂນອອກ ແລ້ວຮ້ອງຈິບໆ ຄືນົກຈອກ.

ທຳອິດ ພໍ່ເຖົ້າຮ້ອງເພງຂຶ້ນວ່າ :

ຮ້ອຍນົກຈອກເຕັ້ນ ກາງລະດູບານໃໝ່!
ສິ່ງສຽງ ຈິບຈ໊ຽບ ຈິບຈ໊ຽບ ບໍ່ງຽບ ບໍ່ເຫງົາ.

ຕໍ່ມາ ແມ່ເຖົ້າກໍຮ້ອງວ່າ :

ຮ້ອຍລີງກັງສິ່ງສຽງ ເນືອງນັນ
ດັ່ງສະນັ່ນ ສຽງເຫລີ ສຽງໃຫລ.





ສອງເຖົ້າພາກັນຮ້ອງສຽງດັງກ້ອງປ່າ ຈົນເຈົ້າຂອງປ່າໄມ້ແຫ່ງນີ້ ໄດ້ຍິນ ແລະຟ້າວແລ່ນມາເບິ່ງ. ເຈົ້າຂອງປ່າໄມ້ເຫັນກັບຕາຕົນເອງວ່າ ແມ່ເຖົ້າເຕັ້ນລຳທັງເຮັດທ່າທາງກະຍ່ອງ ກະແຢ່ງ ຄືລີງ, ສ່ວນພໍ່ເຖົ້າເຕັ້ນລຳທັງເຮັດທ່າງທາງຄືນົກຈອກ.

" ນີ້ ນີ້ " ເຈົ້າຂອງປ່າໄມ້ວ່າ " ບໍ່ແມ່ນຈັ່ງຊັ້ນຈັກດີ້ ! ຖ້າພວກເຈົ້າຊິເຕັ້ນລຳ, ແມ່ຍິງເຕັ້ນ ຕ້ອງງົດງາມອ່ອນຊ້ອຍແບບເພດຍິງ ຄືດັ່ງນົກຈອກເຕັ້ນ, ສ່ວນຜູ້ຊາຍເຕັ້ນກໍຕ້ອງຂຶງຂັງແບບເພດຊາຍຄືດັ່ງລີງເຕັ້ນ, ບໍ່ແມ່ນແບບປີ້ນກັນເດີ. "

ດັ່ງນີ້ ສອງເຖົ້າຜົວເມຍຈຶ່ງເຊົາເຕັ້ນ ແລະບອກເຈົ້າຂອງປ່າໄມ້ ຫລື ເຈົ້າຂອງທີ່ດິນ ທີ່ເຂົາເຈົ້າອາໄສຢູ່ ກ່ຽວກັບເລື່ອງຜະຈົນໄພທີ່ໄດ້ພົບມາ.

" ເອີ... ສົມພໍທັ້ນລະ " ເຈົ້າຂອງປ່າໄມ້ວ່າ " ແຕ່ລະຄືນພວກເຈົ້າດື່ມເຫລົ້າປີ້ນກັນ. ເປັນຫຍັງບໍ່ປ່ຽນເຫລົ້າກັນແລ້ວດື່ມອີກໃໝ່ ເບິ່ງວ່າ ຊິເປັນແນວໃດ. "

ຕໍ່ນັ້ນມາ ພໍ່ເຖົ້າກໍດື່ມເຫລົ້າຂອງລີງສະເໝີ ແລະເຕັ້ນລຳແບບຜູ້ຊາຍແທ້ໆ. ສ່ວນແມ່ເຖົ້າດື່ມເຫລົ້ານົກຈອກເປັນປະຈຳ ແລະເຕັ້ນລຳແບບແມ່ຍິງເຕັມຂັ້ນ. ທຸກຄືນທີ່ໄດ້ເຫັນເຂົາເຈົ້າເຕັ້ນລຳ ແລະໄດ້ຍິນເຂົາເຈົ້າຮ້ອງເພງ ຕ່າງກໍຄິດວ່າ ເຂົາເຈົ້າເປັນຕາໜ້າຮັກແທ້ໆ ແລະຕ່າງກໍພະຍາຍາມເຮັດຄືເຂົາເຈົ້າ. ແລະນີ້ແຫລະເປັນຫຍັງ ທຸກມື້ນີ້ ຜູ້ຊາຍຈຶ່ງດົດດື່ມຢ່າງຄ່ອງແຄ່ວ ອາດຫານ ເວລາເຕັ້ນລຳ, ສ່ວນແມ່ຍິງ ມີລີລາງົດງາມອ່ອນຊ້ອຍຄືດັ່ງນົກ.

*ແປໂດຍ : ສຸນັນທາ ກັນລະຍາ*

# ຊາບູໂຣ ໂງ່ຄືຕໍ



ດົນ ນານມາແລ້ວ ໃນປະເທດຍີ່ປຸ່ນ ຍັງມີທ້າວນ້ອຍຜູ້ໜຶ່ງ ຢູ່ສວນນຳພໍ່ແມ່, ລາວຊື່ວ່າ ຊາບູໂຣ. ທ້າວນ້ອຍມັກເຮັດແນວໂງ່ໆ ສະເໝີ, ຊາວບ້ານເລີຍເອີ້ນວ່າ ຊາບູໂຣໂງ່ຄືຕໍ. ລາວບໍ່ອາດ ຈື່ຈຳອັນໃດໃນເວລາດຽວກັນໄດ້ ເກີນກວ່າໜຶ່ງອັນຈັກເທື່ອ ແລ້ວກໍຈະເຮັດແຕ່ອັນນັ້ນອັນດຽວ ເຖິງແມ່ນວ່າມັນຈະໄຮ້ປະໂຫຍດປານໃດກໍ່ຕາມ. ພໍ່ແມ່ ອຸກໃຈນຳລູກຄົນນີ້ທີ່

ສຸດ ແຕ່ກໍຫວັງວ່າ ລູກຄົງຈະສະຫລາດຂຶ້ນ ເມື່ອໃຫຍ່ຂຶ້ນມາ. ເຂົາເຈົ້າຕັ້ງວ່າອຶດທົນ ເອົາແທ້ເອົາວ່າ ເພາະເຫັນແກ່ລູກ.

ມື້ໜຶ່ງ ພໍ່ບອກວ່າ : " ຊາບູໂຣ ມື້ນີ້ໄປບ່ອນປູກມັນຝະລັ່ງ ແລ້ວຂຸດເອົາມັນຝະລັ່ງເດີ້, ເມື່ອຂຸດໄດ້ແລ້ວ ໃຫ້ຄ່ອຍໆຢາຍຕາກແດດໄວ້. "

" ເຂົ້າໃຈລະ " ຊາບູໂຣວ່າ, ແລ້ວລາວກໍແບກຈົກໄປຍັງບ່ອນປູກມັນຝະລັ່ງ.

ຊາບູໂຣ ຂຸດໄປຂຸດໄປ ເພື່ອຄົ້ນຫາມັນຝະລັ່ງ, ແລ້ວໃນທັນໃດ ຈົກຂອງລາວກໍໄປສັບສິ່ງໜຶ່ງຢູ່ໃນດິນ. ລາວຂຸດເລິກລົງອີກເລີຍພົບໄຫໃຫຍ່ເກົ່າແກ່ໜ່ວຍໜຶ່ງ. ເມື່ອລາວເບິ່ງຂ້າງໃນໄຫ ກໍເຫັນວ່າ ເຕັມໄປດ້ວຍຫລຽນຄຳອັນໃຫຍ່. ມັນແມ່ນສົມບັດອັນມະຫາສານທີ່ຄົນຝັງໄວ້ແຕ່ດົນມາແລ້ວ.

ຊາບູໂຣເວົ້າກັບຕົນເອງວ່າ : " ພໍ່ບອກວ່າ ທຳອິດຂ້ອຍຕ້ອງຂຸດເອົາສິ່ງຂອງຂຶ້ນມາ ແລ້ວປະຕາກແດດໄວ້ໃຫ້ມັນແຫ້ງ." ດັ່ງນີ້ລາວຈຶ່ງເອົາຫລຽນຄຳຢາຍແຜ່ອອກ ດ້ວຍຄວາມເອົາໃຈໃສ່ ຕໍ່ມາກໍກັບເມືອເຮືອນ ແລະເວົ້າວ່າ : " ລູກພົບໄຫຄຳ ແລະເອົາຄຳຢາຍຕາກແດດໄວ້ ເພື່ອໃຫ້ມັນແຫ້ງ. "

ພໍ່ແມ່ໄດ້ຍິນດັ່ງນັ້ນ ກໍຕື່ນຕາຕື່. ເຂົາເຈົ້າແລ່ນໄປທີ່ໜານປູກມັນຝະລັ່ງ, ແຕ່ວ່າ ມີຄົນເອົາຄຳໄປແລ້ວທັງໝົດ, ບໍ່ເຫລືອແມ່ນແຕ່ຫລຽນດຽວ.

ພໍ່ຂອງຊາບູໂຣ ບອກໃນເວລາຕໍ່ມາວ່າ : " ເທື່ອໜ້າລູກພົບເຫັນຫຍັງຕ້ອງຫໍ່ດີໆ ແລ້ວເອົາມາເຮືອນ. ບາດນີ້ຢ່າລືມເດີ້ !"

" ລູກເຂົ້າໃຈ " ຊາບູໂຣວ່າ. ແລະມື້ຖັດມາ ລາວໄປພົບແມວຕາຍຢູ່ເດີ່ນ, ລາວກໍເລີຍຫໍ່ຢ່າງດີ ແລ້ວເອົາເມືອເຮືອນ ດ້ວຍຄວາມຮູ້ສຶກພາກພູມໃຈ ທີ່ບໍ່ລືມຄໍາພໍ່ສັ່ງ.

ຝ່າຍພໍ່ກ່າວວ່າ : " ຢ່າໂງ່ຫລາຍແມ້ ! ເມື່ອລູກໄປເຫັນແມວຈັ່ງຊີ້ ກໍຕ້ອງເອົາຖິ້ມລົງນໍ້າ ຊັ້ນຕວ່າ "

ມື້ຕໍ່ມາ ຊາບູໂຣຂຸດເຫງົ້າໄມ້ ຂະໜາດໃຫຍ່ອອກໄດ້. ລາວຄິດໜັກ ແລະຍັງຈື່ຄໍາທີ່ພໍ່ບອກ ກ່ຽວກັບແມວຕາຍໂຕນັ້ນ. ດັ່ງນັ້ນ ລາວຈຶ່ງເອົາເຫງົ້າໄມ້ຖິ້ມລົງຫ້ວຍ ຈົນນໍ້າຟົ້ງກະຈາຍ.

ຄ້ອມພໍດີ ມີເພື່ອນກາຍມາເຫັນ, ເພື່ອນຜູ້ນີ້ເວົ້າວ່າ :

" ຮວ້າຍ ! ຢ່າເອົາຂອງດີຖິ້ມຈັ່ງຊັ້ນແມ້ ! ເຫງົ້າໄມ້ນັ້ນເຮັດຟືນດັງໄຟກໍໄດ້, ໂຕຄວນຈະຜ່າມັນເປັນປ່ຽງນ້ອຍແລ້ວຫອບເມືອເຮືອນ. "

" ເຮົາເຂົ້າໃຈຢູ່ " ຊາບູໂຣວ່າ ແລ້ວມຸ່ງໜ້າກັບເມືອເຮືອນ. ໄປຕາມທາງ ລາວເຫັນຈອກນໍ້າຊາ ຊຶ່ງມີຜູ້ປະໄວ້ແຄມທາງ.

" ໂຫ ! ນີ້ຂອງດີຕວ່າ. " ຊາບູໂຣວ່າ ແລ້ວກໍເອົາຈິກຟາດເຕົ້ານໍ້າຊາ ພ້ອມທັງຈອກຈົນໝຸ່ນ, ຕໍ່ມາ ລາວກໍເກັບຫ້ອນເອົາເຟືອງເລັກເຟືອງນ້ອຍ ເມືອນໍາພ້ອມ.

" ແມ່ເອີ້ຍ ! " ລາວບອກແມ່ " ເບິ່ງນີ້ແມະ ລູກໄປພໍ້ອີຫຍັງນີ້ນ່າ ກໍເລີຍເອົາມາ. " ແລ້ວລາວກໍເອົາເຟືອງຈອກແຕກໃຫ້ແມ່ເບິ່ງ.

" ອຸ່ຍ ! ຕາຍແລ້ວ " ແມ່ລາວວ່າ " ມັນແມ່ນເຕົ້າຊາພ້ອມດ້ວຍຈອກ ທີ່ແມ່ເອົາໄປໃຫ້ພໍ່ພ້ອມທັງຂອງກິນສວາຍທວ່າງທ່ຽງຫັ້ນ, ແຕ່ລູກຊໍ້າມາທໍາລາຍມັນຈົນມຸ່ນອັບຍັບ ! "

ມື້ຕໍ່ມາ ພໍ່ແມ່ຂອງຊາບູໂຣເວົ້າວ່າ : " ທຸກສິ່ງທຸກຢ່າງທີ່ລູກເຮັດ ນັ້ນ ລູກເຮັດຜິດໝົດ. ມື້ນີ້ ພໍ່ກັບແມ່ຊິອອກໄປເຮັດວຽກຢູ່ກາງທົ່ງ, ໃຫ້ລູກຢູ່ຮັກສາເຮືອນເດີ້. " ແລ້ວເຂົາເຈົ້າກໍອອກຈາກເຮືອນໄປ, ປະຊາບູໂຣໄວ້ຄົນດຽວ.

"ເວົ້າແທ້ ຂ້ອຍບໍ່ເຂົ້າໃຈເລີຍເປັນຫຍັງຄົນທັງຫລາຍຈຶ່ງເອີ້ນຂ້ອຍວ່າ ຊາບູໂຣ ໂງ່ຄືຕໍ່ " ລາວຈົ່ມຢູ່ຜູ້ດຽວ " ຂ້ອຍເຮັດທຸກຢ່າງຖືກເປັະຕາມທີ່ເຂົາບອກໃຫ້ເຮັດ ເທື່ອໃດກໍເທື່ອນັ້ນ. "

*ແປໂດຍ : ສຸນັນທາ ກັນລະຍາ*



# ທ້າວນ້ອຍໜຶ່ງນີ້ວ



ປາງກ່ອນກີ້ ມີຜົວເມຍຄູ່ໜຶ່ງ ບໍ່ມີລູກນຳກັນຈັກຄົນ, ມື້ໜຶ່ງ ທັງສອງໄປໄຫວ້ຫໍອາຮັກປະຈຳບ້ານ ແລະອະທິດຖານວ່າ :

" ຂໍເທພາອາຮັກ ຈົ່ງທານລູກໃຫ້ພວກຜູ້ຂ້າແດ່ທ້ອນ, ພວກຜູ້ຂ້າສຸດແສນຢາກໄດ້ລູກ." ໃນເວລາກັບເມືອເຮືອນ ທັງສອງໄດ້ຍິນສຽງຮ້ອງໄຫ້ສຽງນ້ອຍໆ ດັງມາຈາກພຸ່ມຫຍ້າ ຈຶ່ງຍ່າງໄປເບິ່ງ ແລະພົບເຫັນແອນ້ອຍຜູ້ຊາຍຕົວນ້ອຍໆ ຢູ່ໃນຫໍ່ຜ້າສີແດງສົດໃສ.

" ນີ້ແມ່ນແອນ້ອຍ ທີ່ເພິ່ນທານໃຫ້ ຕາມຄຳອະທິດຖານ ອີ່ຫລີ." ທັງສອງເວົ້າແລ້ວ ກໍເອົາແອນ້ອຍເມືອເຮືອນ ເພື່ອລ້ຽງເປັນລູກຊາຍ.

ແອນ້ອຍຜູ້ນີ້ ຕົວນ້ອຍອີ່ຫລີ ຄືບໍ່ໃຫຍ່ເທົ່າຫົວໂປ້ມືຊ້ຳ ແລະແມ່ນແຕ່ເມື່ອອາຍຸເພີ່ມຂຶ້ນ ເດັກກໍຍັງມີຂະໜາດສ່ຳເກົ່າ ຄືສູງປະມານໜຶ່ງນິ້ວ. ດັ່ງນີ້ ສອງຜົວເມຍກໍເລີຍຕັ້ງຊື່ວ່າ ນ້ອຍໜຶ່ງນິ້ວ.

ວັນໜຶ່ງ ເມື່ອທ້າວນ້ອຍໜຶ່ງນິ້ວ ເປັນຜູ້ແກ່ແລ້ວ ລາວເວົ້າກັບພໍ່ແມ່ວ່າ : " ລູກຂອບໃຈຫລາຍໆ ທີ່ພໍ່ແມ່ພຽນລ້ຽງມາເປັນຢ່າງດີ, ແຕ່ບັດນີ້ ລູກຕ້ອງອອກໄປສູ່ໂລກກວ້າງ ເພື່ອສະແຫວງໂຊກດ້ວຍຕົນເອງ."

ພໍ່ກັບແມ່ ບໍ່ຢາກໃຫ້ລູກໄປ ໂດຍເວົ້າວ່າ ທ້າວຜູ້ນ້ອຍໂພດທີ່ຈະໄປປະເຊີນໂລກ. ແຕ່ທ້າວນ້ອຍກໍຂໍແລ້ວຂໍອີກ ເພື່ອໃຫ້ພໍ່ແມ່ອະນຸຍາດ, ຈົນໃນທີ່ສຸດ ພໍ່ແມ່ກໍເວົ້າວ່າ : " ເອີ... ໄປກໍໄປ, ພໍ່ກັບແມ່ຊິກຽມເຄື່ອງໃຫ້ສຳລັບເດີນທາງ. "

ດັ່ງນີ້ ພໍ່ກັບແມ່ຈຶ່ງເອົາເຂັມໃຫ້ເພື່ອໃຊ້ເປັນດາບ, ຊາມໄມ້ເພື່ອໃຊ້ເປັນເຮືອ ແລະໄມ້ທູ່ ໃຊ້ເປັນໄມ້ພາຍ.

ນ້ອຍໜຶ່ງນິ້ວ ຂຶ້ນຂີ່ເຮືອແລ້ວໂບກມືລາພໍ່ແມ່ ທັງສັນຍາວ່າຈະຕ່າວຄືນມາເມື່ອໄດ້ໂຊກລາບແລ້ວ. ຕໍ່ມາທ້າວກໍລ່ອງໄປຕາມແມ່ນ້ຳ ໂດຍໄຊ້ໄມ້ທູ່ ພາຍເຮືອຊາມໄມ້ໄປ.

ທ້າວລ່ອງລອຍໄປໄກຫລາຍໂຍດ ແລ້ວໃນທັນໃດ ເຮືອກໍພິກຂວ້ຳ. ມັນແມ່ນກົບທີ່ຢູ່ໃນແມ່ນ້ຳນີ້ເອງທີ່ມາຕຳເຮືອ. ນ້ອຍໜຶ່ງນິ້ວເປັນນັກລອຍນ້ຳເກັ່ງ, ລາວລອຍເຂົ້າຫາຕະຝັ່ງ ແລ້ວກໍພົບວ່າ ຕົນເອງມາຢືນຢູ່ຕໍ່ໜ້າໂຮງຂອງພະຍາອົງໜຶ່ງ.

ນ້ອຍໜຶ່ງນິ້ວ ສ່ອງເຂົ້າໄປໃນໂຮງ ແລະເຫັນວ່າ ນີ້ຕ້ອງແມ່ນໂຮງຂອງພະຍາຜູ້ຮັ່ງມີ. ດັ່ງນີ້ ທ້າວຈຶ່ງຍ່າງກົງໄປທີ່ປະຕູໜ້າ ດ້ວຍທ່າທາງ ອົງອາດ ແລ້ວເອີ້ນຫາຄົນຢູ່ຂ້າງໃນ. ມີຄົນຮັບໃຊ້ຜູ້ຊາຍມາທີ່ປະຕູ ແຕ່ຜູ້ນີ້ ຊ້ຳບໍ່ເຫັນໃຜຈັກຄົນ.

" ພີ້ ຂ້ອຍຢູ່ລຸ່ມພີ້. " ນ້ອຍໜຶ່ງນິ້ວ ຮ້ອງໄປໃສ່

" ເບິ່ງລຸ່ມພີ້ນ່າ. "

ຄົນຮັບໃຊ້ກົ້ມລົງເບິ່ງຕ່ຳໆທີ່ພື້ນ ຊື່ປະຕູດ້ານໜ້າ. ອັນທີ່ເຂົາເຫັນ ກ່ອນສິ່ງອື່ນໃດໝົດກໍແມ່ນເກີບໄມ້ຄູ່ໜຶ່ງ ຊຶ່ງພະຍາສຸບໃສ່ເວລາເພິ່ນອອກໄປຍ່າງຫລິ້ນ. ຕໍ່ມາ ຄົນຮັບໃຊ້ເບິ່ງໃກ້ໆເຂົ້າໄປອີກ ກໍເລີຍເຫັນໃບໜ້າຂອງທ້າວນ້ອຍໜຶ່ງນິ້ວ ທີ່ຢືນຢູ່ຂ້າງເກີບໄມ້. ຄົນຮັບໃຊ້ ຕື່ນຈິນຕາຕື່ຕາລານ ແລ້ວແລ່ນໄປບອກພະຍາ.

ສ່ວນພະຍາກໍຟ້າວອອກມາ ຍັງປະຕູດ້ານໜ້າ ແລະແນມເບິ່ງທ້າວນ້ອຍ ຜູ້ຊຶ່ງຢືນຢູ່ດ້ວຍທ່າທາງທະນົງອົງອາດ ໂດຍມີດາບຂັດແອວ ເຕື່ອຍລົງຮອດກົ້ນ.

" ມີຫຍັງບໍ ! ເປັນຈັ່ງໃດ ທາງນັ້ນນ່າ ອັດສະວິນນ້ອຍ. " ພະຍາວ່າ " ເຈົ້າຕ້ອງການຫຍັງຢູ່ໜີ້ ? "

" ຜູ້ຂ້າອອກມາສູ່ໂລກ ເພື່ອສະແຫວງຫາໂຊກ . " ນ້ອຍໜຶ່ງນິ້ວກ່າວ " ແລະຖ້າທ່ານໃຫ້ຜູ້ຂ້າຢູ່ນຳ ຂໍໃຫ້ຮັບຜູ້ຂ້າໄວ້ເປັນທະຫານຍາມ. ຜູ້ຂ້າອາດຈະໂຕນ້ອຍໆ ແຕ່ກໍສາມາດຕໍ່ສູ້ຢ່າງເກັ່ງກ້າ ໂດຍໃຊ້ດາບທີ່ມີປະຈຳຕົວ."

ພະຍາເຫັນວ່າເປັນຕາຢາກຫົວ ທີ່ໄດ້ຍິນເດັກໂຕນ້ອຍໆ ເວົ້າຈາ ສະຫາວ ຈຶ່ງກ່າວວ່າ : " ໄດ້ເລີຍ ໄດ້ເລີຍ ເຂົ້າມາໄດ້ເລີຍມາເປັນໝູ່ຫລິ້ນກັບເຈົ້າຍິງ ລູກສາວຂອງເຮົາ. "



ດັ່ງນີ້ ຕໍ່ນັ້ນມາ ນ້ອຍໜຶ່ງນິ້ວກໍໄດ້ເປັນເພື່ອນສະໜິດຂອງເຈົ້າຍິງ. ທັງສອງເປັນເພື່ອນທີ່ດີຕໍ່ກັນ, ພາກັນອ່ານປື້ມ ແລະ ຫລິ້ນນຳກັນທຸກມື້. ເຈົ້າຍິງເຮັດຕຽງໃຫ້ນ້ອຍໜຶ່ງນິ້ວນອນຢູ່ໃນແອບມັງນເຄື່ອງແກ້ວມະນີ.

ມື້ໜຶ່ງ ເຈົ້າຍິງກັບນ້ອຍໜຶ່ງນິ້ວ ພາກັນໄປວັດທີ່ຢູ່ໃກ້ໆ. ທັນໃດ ຍັກກັບດານມືຖືຄ້ອນວິເສດ ກໍປາກົດຕົວຕໍ່ໜ້າ. ເມື່ອມັນເຫັນເຈົ້າຍິງ ຍັກສີຂຽວໂຕນີ້ ກໍແລ່ນໄລ່ຄຸບນາງ, ທາງຝ່າຍນ້ອຍໜຶ່ງນິ້ວ ຈຶ່ງຖອດດາບແທງໄປ້ຕີນຂອງມັນ, ແທງຫລາຍບາດ ແຕ່ບໍ່ເຂົ້າ ເພາະຍັກໂຕນີ້ໜັງໜາຫລາຍ, ມັນແລ່ນໄລ່ນາງຕໍ່ໄປ ແລະເກືອບຈະທັນເຈົ້າຍິງຢູ່ແລ້ວ ນ້ອຍໜຶ່ງນິ້ວເລີຍປີນຂຶ້ນໄປຕາມຕີນໂຕຂອງຍັກ ແລະໄຕ່ໄປຮອດແຂນ ແລ້ວກໍກວັດແກວ່ງດາບຢູ່ຊື່ດັງຂອງຍັກ, ເຮັດດັ່ງນີ້ ແຮ່ງພາໃຫ້ຍັກໃຈຮ້າຍ, ມັນຈຶ່ງອ້າປາກກວ້າງໆເພື່ອຈະຮ້ອງແຮງໆ.

ຄ້ອມພໍດີ ນ້ອຍໜຶ່ງນິ້ວ ຖືໂອກາດ ເຕັ້ນຂະໂຍງເຂົ້າໄປໃນປາກຂອງຍັກ ແລ້ວກໍໃຊ້ດາບ ປາດລີ້ນໂຕມານຮ້າຍນີ້. ລີ້ນຂອງຍັກອ່ອນແອດແລດ, ດາບເລີຍເຂົ້າເລິກທັງເຮັດໃຫ້ມັນເຈັບປວດຈົນສະດຸ້ງເຮືອກ. ມັນຖົ່ມນ້ຳລາຍລົງດິນ ໂດຍມີທ້າວນ້ອຍໜຶ່ງນິ້ວພົ້ງອອກມາພ້ອມ, ແລ້ວຍັກກໍແລ່ນ ເປີດໜີອາດຫລາດ ທັງຍັງປະຖິ້ມໄມ້ຄ້ອນວິເສດອີກ.

ເຈົ້າຍິງແລ່ນໄປຈັບເອົາໄມ້ຄ້ອນວິເສດນັ້ນ ແລະກ່າວວ່າ :

" ບາດນີ້ ພວກເຮົາຈະທິດຖານເອົາຕາມໃຈມັກໄດ້ເລີຍ ", ແລ້ວນາງກໍຈັບໄມ້ຄ້ອນຂຶ້ນ ກວັດແກວ່ງ ແລະເວົ້າວ່າ : " ຂໍໃຫ້ນ້ອຍໜຶ່ງນິ້ວ ໃຫຍ່ສູງຂຶ້ນທ້ອນ. "

ແລ້ວກໍເປັນດັ່ງນັ້ນແທ້ໆ, ຄືທຸກຄັ້ງທີ່ ເຈົ້າຍິງກວັດແກວ່ງໄມ້ຄ້ອນນັ້ນ ທ້າວນ້ອຍໜຶ່ງນິ້ວຈະໃຫຍ່ຂຶ້ນນິ້ວໜຶ່ງ. ເຈົ້າຍິງຍົກໄມ້ຄ້ອນຕໍ່ໄປໆຈົນນ້ອຍໜຶ່ງນິ້ວໃຫຍ່ຂຶ້ນສໍາດຽວກັບນາງ. ທັງສອງດີອົກດີໃຈຫລາຍທີ່ໄດ້ສົມມັກສົມປາຖະໜາ, ສ່ວນພະຍາກໍຊື່ນຊົມຍິນດີເມື່ອໄດ້ຍິນເລື່ອງດັ່ງກ່າວ.

ອີກບໍ່ຫລາຍປີ ເມື່ອທັງສອງໃຫຍ່ຂຶ້ນ ທ້າວນ້ອຍໜຶ່ງນິ້ວ ແລະເຈົ້າຍິງ ກໍເຂົ້າສູ່ພິທີສົມລົດ ເປັນຜົວເມຍກັນ ແລະມີຊີວິດຢ່າງຜາສຸກສໍາລານໃນເວລາຕໍ່ມາ.

*ແປໂດຍ : ສຸບັນທາ ກັນລະຍາ*



# ເຫງັນຫາງພວງກັບວິວິເສດ



ຢູ່ ຍີ່ປຸ່ນ ເພິ່ນເອີ້ນຜີວ່າ ເຕັງງຶ. ຜີເຫລົ່ານີ້ ມີດັງງວງທຸກໂຕ. ຄັ້ງໜຶ່ງ ດົນນານມາແລ້ວ ເຕັງງຶສາມໂຕ ທີ່ເປັນຜີເດັກນ້ອຍພວມຫລິ້ນນໍາກັນຢູ່ໃນປ່າ. ພວກເຂົາທັງສາມ ມີວິວິເສດ, ແລະເມື່ອໃຊ້ ດ້ານໜຶ່ງວີດັງຕົນເອງນັ້ນ ດັງກໍຈະຍາວອອກຍາວອອກ. ແຕ່ເມື່ອໃຊ້ອີກດ້ານໜຶ່ງ ດັງຊໍ້າຫົດເຂົ້າເທົ່າເດີມ. ພວກເຂົາພາກັນມ່ວນ ຫົວອຶ໊ກໆແອ໊ກໆ ທັງໃຊ້ວີເຮັດໃຫ້ດັງຍາວອອກແລະຫົດເຂົ້າຢູ່ບໍ່ເຊົາ.

ຄ້ອມພໍດີ ເວລານັ້ນ ມີເຫງັນຫາງພວງກາຍມາ ແລະເຫັນສິ່ງທີ່ພວກເຂົາພວມເຮັດຢູ່. ເຫງັນເວົ້າກັບຕົນເອງວ່າ : " ຄັກເວີ້ຍ! ຢາກໄດ້ວິແບບນີ້ເດ້ ! " ວ່າແລ້ວມັນກໍຄິດຫາອຸບາຍອັນແນບນຽນ. ພວກເຮົາຮູ້ວ່າ ເຫງັນທັງຫລາຍນັ້ນມັກໃຊ້ກົນອຸບາຍເລື້ອຍໆ ທັງສາມາດແປງເພດເປັນຮູບຕ່າງໆ ຕາມໃຈມັກ. ດັ່ງນັ້ນ ເຫງັນໂຕນີ້ຈຶ່ງແປງເພດເປັນນາງນ້ອຍ ແລ້ວເອົາເຂົ້າໜົມຖົ່ວຂຽວໃສ່ຈານຖືໄປໃຫ້ ຜີເດັກນ້ອຍທັງສາມ.

" ສະບາຍດີ ເຕັ່ງງືນ້ອຍ." ເຫງັນກ່າວ " ຂ້ອຍເອົາເຂົ້າໜົມຖົ່ວຂຽວມາຕ້ອນ, ແລ້ວໃຫ້ຂ້ອຍຫລິ້ນນຳພວກເຈົ້າແດ່ເດີ."

ພວກເຕັ່ງງືນ້ອຍ ພາກັນດີໃຈ ເພາະພວກເຂົາ ມັກກິນເຂົ້າໜົມຖົ່ວຂຽວ. ແຕ່ວ່າມີເຂົ້າໜົມເຖິງສີ່ກ້ອນ ສຳລັບແບ່ງໃຫ້ເຕັ່ງງືນ້ອຍພຽງສາມໂຕ. ດັ່ງນີ້ ໃນທັນທີໂລດ ພວກເຂົາກໍຖຽງກັນວ່າ ຜູ້ໃດຄວນຈະເປັນຜູ້ໄດ້ກ້ອນທີສີ່.

ໃນທີ່ສຸດ ເຫງັນ ກໍເວົ້າຂຶ້ນວ່າ : " ຂ້ອຍຊິບອກດອກວ່າເຮັດຈັ່ງໃດ ໃຫ້ພວກເຈົ້າທັງໝົດຫລັບຕາໄວ້ ແລະຜູ້ໃດ ຫລັບຕາໄວ້ໄດ້ດົນ ກວ່າໝູ່ ທັງກັ້ນລົມຫັນໃຈໄວ້ໄດ້ດົນກວ່າໝູ່ ຜູ້ນັ້ນຈະໄດ້ກ້ອນທີສີ່. "

ພວກເຕັ່ງງືນ້ອຍ ຕົກລົງ ຈະເຮັດຕາມທີ່ວ່ານັ້ນ, ຝ່າຍເຫງັນຈຶ່ງນັບ : " ໜຶ່ງ ! ສອງ ! ສາມ ! " ແລ້ວພວກເຕັ່ງງືນ້ອຍກໍຫລັບຕາເຂົ້າໄວ້ແຈບໆ. ທັນທີທີ່ພວກເຂົາຫລັບຕາ ເຫງັນກໍຄວ້າຈັບເອົາວີວີເສດ ແລ້ວແລ່ນໜີໄປໄວໆຈົນສຸດແຮງເກີດ, ປ່ອຍໃຫ້ເຕັ່ງງືນ້ອຍຫລັບຕາທັງກັ້ນໃຈຢູ່ຕໍ່ໄປ.

" ຮະ ຮະ ຮາ ! " ເຫງັນຫົວແຮງໆ " ເຮົາຕົມເດັກໆ ນ້ອຍທັງສາມໄດ້ຄັກອີ່ຫລີ ! "

ຕໍ່ມາ ເຫງັນທາງພວງກໍຍ່າງມຸ່ງໜ້າໄປຍັງຕົວເມືອງ. ຕອນນີ້ ມັນມາຮອດວັດແຫ່ງໜຶ່ງ ມັນເຫັນສາວງາມຄົນໜຶ່ງ ທີ່ແຕ່ງຕົວດ້ວຍເຄື່ອງນຸ່ງລາຄາແພງຫລາຍຢູ່ວັດນີ້. ເຫງັນເຊື່ອຄັກແນ່ວ່າແມ່ນລູກສາວຂອງຄົນຮັ່ງມີ, ແລະກໍເປັນຄວາມຈິງແທ້ ຄືພໍ່ຂອງນາງເປັນເສດຖີທີ່ຮັ່ງມີກວ່າໝູ່ໃນປະເທດ. ດັ່ງນີ້ ເຫງັນທາງພວງຈຶ່ງຄ່ອຍຍ່ອງໝອບນຳຫລັງນາງໄປ, ແລະຢ່າງໄວວາປານແສງຟ້າແມບເຫງັນໃຊ້ວິວີເສດວີດັງຂອງສາວງາມຄົນນີ້ ແລ້ວທັນໃດນັ້ນ ດັງຂອງນາງກໍຍາວອອກໜຶ່ງວາ ຢ່າງປຸ໊ບປັ໊ບໂລດ!

ຈັ່ງແມ່ນມັນເປັນຕາໜ່າຍ ! ຄືຈັ່ງຊີ້ນ່າ ! ສາວນ້ອຍທັງງາມທັງຮັ່ງຜູ້ນີ້ ຊ້ຳມີດັງຍາວຄ່າວາ ... ພໍ່ຂອງນາງຫ່ງວຫາໝໍຫລວງທຸກໆຄົນໃນປະເທດ, ແຕ່ບໍ່ມີໃຜຈັກຄົນທີ່ສາມາດເຮັດໃຫ້ດັງຂອງນາງສັ້ນເຂົ້າ. ພໍ່ຂອງນາງໄດ້ໃຊ້ຈ່າຍເງິນຄຳໄປຢ່າງຫລວງຫລາຍເພື່ອເປັນຄ່າຢາ, ແຕ່ກໍບໍ່ມີຫຍັງດີຂຶ້ນເລີຍ. ໃນທີ່ສຸດ ຜູ້ພໍ່ກໍກ່າວຢ່າງຄົນຈົນປັນຍາວ່າ : " ຜູ້ຂ້ານີ້ ຊິມອບລູກສາວໃຫ້ເປັນເມຍລວມທັງຊັບສົມບັດເຄິ່ງໜຶ່ງໃຫ້ຜູ້ໃດກໍໄດ້ ທີ່ສາມາດເຮັດໃຫ້ດັງລູກສາວສັ້ນຄືເກົ່າຄືຫລັງ. "

ເມື່ອເຫງັນໄດ້ຍິນດັ່ງນັ້ນ ມັນກໍເວົ້າຂຶ້ນວ່າ: " ແນວນັ້ນແຫລະອັນທີ່ເຮົາຄອງຖ້າຟັງຢູ່ຫັ້ນນ່າ. " ແລ້ວມັນກໍຟ້າວໄປທີ່ເຮືອນນາງຢ່າງໄວວາ ແລະບອກວ່າ ມັນເອງມາຈັດການເລື່ອງດັງຂອງນາງໃຫ້ເປັນປົກກະຕິ. ດັ່ງນີ້ ຜູ້ພໍ່ເລີຍພາເຫງັນເຂົ້າໄປເຖິງຫ້ອງລູກສາວ.



ເຫງັນຈຶ່ງເອົາວີວິເສດອອກມາ ແລ້ວໃຊ້ອີກດ້ານໜຶ່ງ ວີດັງຂອງນາງ. ພຽງພິບຕາດຽວ ດັງຂອງນາງກໍຫົດຄືນ !

ພໍ່ຂອງນາງດີອົກດີໃຈເປັນຢ່າງຍິ່ງ ແລະເລີ່ມຕົ້ນກະກຽມພິທີແຕ່ງດອງໃຫ້ລູກສາວ. ຝ່າຍເຫງັນກໍດີອົກດີໃຈເຊັ່ນດຽວກັນ ເພາະມັນບໍ່ພຽງແຕ່ຈະໄດ້ເມຍງາມເທົ່ານັ້ນ ຫາກຍັງຈະໄດ້ຊັບສິນບັດມະຫາສານນຳອີກ. ໃນມື້ພິທີແຕ່ງດອງ ມີອາຫານລ້ຽງກັນຢ່າງຫລວງຫລາຍ ທ້າວເຫງັນດີໃຈແຮງ ທັງກິນທັງດື່ມຫລາຍເກີນຂອບເຂດ ຈົນຕົວເອງຮ້ອນເຫື່ອຊຶມ ແລ້ວກໍງ່ວງນອນ.

ແລະໂດຍບໍ່ຄິດໜ້າຄິດຫລັງວ່າ ຕົນເອງຈະເປັນຢ່າງໃດ ທ້າວເຫງັນນອນຫງາຍລົງເທິງໝອນ ຫລັບຕາ ແລະເລີ່ມຕົ້ນໃຊ້ວີວິເສດວີໄປມາ ເພື່ອໃຫ້ຕົນເອງເຊົາຮ້ອນ. ທັນໃດນັ້ນ ດັງຂອງມັນກໍຍາວອອກ ຍາວອອກ. ແຕ່ວ່າຂະນະນັ້ນມັນຢູ່ໃນອາການເຄິ່ງຫລັບເຄິ່ງຕື່ນ ເລີຍບໍ່ຮູ້ວ່າເກີດຫຍັງຂຶ້ນ. ດັ່ງນີ້ ມັນຈຶ່ງເອົາແຕ່ວີຢູ່ບໍ່ເຊົາ, ສ່ວນດັງຂອງມັນກໍຍາວອອກ ຍາວອອກໄປເລື້ອຍໆ, ມັນຍາວຂຶ້ນໄປທະລຸເພດານ ແລະສູງຂຶ້ນໄປຮອດທ້ອງຟ້າ ຈົນແທງຊອດກ້ອນເມກ.

ເວລານັ້ນ ຢູ່ເທິງກ້ອນເມກພຸ້ນ ມີຄົນງານເມືອງສະຫວັນພວມສ້າງຂົວຂ້າມຄອງໝູສີສ່ອງ ( ທາງຊ້າງເຜືອກ ) ຢູ່. ຄົນງານພາກັນທ້ວງແຮງໆ ທັງຊີ້ໄປທີ່ດັງຍາວຂອງເຫງັນວ່າ :

" ເບິ່ງຫັ້ນແມ້! ທ່ອນໄມ້ຂະໜາດພໍດີກັບຂົວຂອງເຮົາເລີຍ. ເອົາ! ດຶງຂຶ້ນມາໂລດ ! "

ແລ້ວໝົດທຸກຄົນກໍຕັ້ງຕົ້ນ ດຶງດັງຂອງເຫງັນຫາງພວງຂຶ້ນດັ່ງນີ້ເຮັດໃຫ້ເຫງັນຕື່ນຜະຫວາ. ມັນສະເດີດຕື່ນ ຈາກຫລັບໄຫລ

ທັງຮ້ອງ : " ໂອ້ຍຕາຍ ! ຕາຍແລ້ວ ! ຊ່ອຍແດ່ ! ຊ່ອຍແດ່ !" ແລ້ວມັນກໍໃຊ້ວີອີກດ້ານໜຶ່ງວີດັງຕົນເອງຢູ່ວັບໆ.

ແຕ່ບໍ່ທັນສາແລ້ວ, ພວກຄົນງານເມືອງສະຫວັນ ພາກັນດຶງເຫງົ້ນຫາງພວງຂຶ້ນໄປເທິງຟ້າ ແລະແລ້ວກໍບໍ່ມີໃຜເຫັນມັນອີກຈັກເທື່ອເລີຍ.

*ແປໂດຍ : ອຸທິນ ບຸນຍາວົງ*



# ແມງກະພຸນດູກມຸ່ນ



ດິນ ແສນດົນແລ້ວ ເວລານັ້ນ ສັດນ້ຳທັງຫລາຍ ໃນທະເລ ຢູ່ຮ່ວມກັນຢ່າງມີຄວາມສຸກສຳລານໃນຜາສາດຂອງພະຍານາກ ທີ່ພື້ນຂອງທະເລເລິກ. ເອີເວົ້າວ່າ ມີຄວາມສຸກ ແຕ່ບໍ່ສຳລານປານໃດ. ສັດທີ່ເປັນສັດຕູກັນນັ້ນ ກໍແມ່ນປາໝຶກ ຜູ້ຊຶ່ງເປັນທ່ານໝໍປະຈຳຜາສາດ ແລະແມງກະພຸນ ຜູ້ຊຶ່ງຕອນນັ້ນຍັງມີກະດູກ ຫລືກ້າງຄືດັ່ງສັດທະເລອື່ນໆ.

ມື້ໜຶ່ງ ລູກສາວຂອງພະຍານາກ ເຈັບປ່ວຍ, ປາໝຶກຈຶ່ງມາເບິ່ງແຍງ ແລະບອກວ່ານາງຈະຕ້ອງຕາຍ ຖ້າບໍ່ໄດ້ກິນຢາທີ່ເຮັດດ້ວຍຕັບລີງ.

" ແມງກະພຸນລອຍໄດ້ໄວ. " ປາໝຶກທູນບອກພະຍານາກ. " ດັ່ງນັ້ນເປັນຫຍັງບໍ່ ພະອົງຈຶ່ງບໍ່ສັ່ງໃຫ້ແມງກະພຸນໄປເອົາຕັບລີງມາໃຫ້ ຂ້ານ້ອຍ. "

ດັ່ງນັ້ນ ພະຍານາກຈຶ່ງມີຄຳສັ່ງໃຫ້ແມງກະພຸນມາຫາແລ້ວບອກໃຫ້ມັນ ໄປເອົາຢາ.

ແຕ່ການໄປເອົາຕັບລີງນັ້ນ ບໍ່ແມ່ນເລື່ອງງ່າຍ, ແມ່ນແຕ່ໄປຊອກໃຫ້ເຫັນໂຕລີງ ກໍຍັງຍາກພໍແຮງແລ້ວ. ແມງກະພຸນຈຶ່ງລອຍໄປລອຍໄປຍັງມື້. ໃນທີ່ສຸດ ມື້ໜຶ່ງມັນກໍເລີຍເຫັນລີງຜູ່ໃກ້ດອນນ້ອຍໆແຫ່ງໜຶ່ງ. ລີງພວມຕົກນ້ຳ, ມັນລອຍບໍ່ເປັນ ຈຶ່ງຮ້ອງຂຶ້ນ " ຊ່ອຍແດ່! ຊ່ອຍແດ່ ! "

" ຂ້ອຍຊິຊ່ອຍ. " ແມງກະພຸນວ່າ " ແຕ່ເຈົ້າຕ້ອງສັນຍາວ່າຊິເອົາຕັບໃຫ້ຂ້ອຍ ເພື່ອໄປເຮັດຢາປົວລູກສາວພະຍານາກ. "

ລີງສັນຍາວ່າຈະໃຫ້. ດັ່ງນີ້ ແມງກະພຸນຈຶ່ງເອົາມັນຂຶ້ນຂີ່ຫລັງ ແລ້ວພາລອຍໄປຢ່າງໄວ ມຸ່ງໜ້າໄປຫາຜາສາດ.

ລີງມັກໃຫ້ສັນຍາທຸກຢ່າງສະເໝີ ເວລາມັນພວມຈົມນ້ຳ, ແຕ່ວ່າບັດນີ້ ມັນປອດໄພແລ້ວ ມັນຈຶ່ງເລີ່ມຄິດທົບທວນ ເລື່ອງນີ້ຢູ່ໄປມາ. ແລະເມື່ອແຮ່ງຄິດ ມັນກໍແຮ່ງບໍ່ມັກເລື່ອງທີ່ຈະເອົາຕັບໃຫ້ຜູ້ອື່ນ, ເຖິງແມ່ນວ່າ ຈະເອົາໃຫ້ລູກສາວພະຍານາກກໍ່ຕາມ. ບໍ່ໃຫ້ລະ, ມັນຕັດສິນໃຈ, ມັນບໍ່ມັກຄວາມຄິດແນວນີ້ຈັກດີ້.

ເມື່ອເປັນລີງທີ່ຫລັກແຫລມ ມັນຈຶ່ງເວົ້າວ່າ : " ບຶດຽວ! ບຶດຽວ! ຂ້ອຍຫາກໍ່ຄຶດພໍ້ວ່າຕົນເອງລືມຕັບ, ຂ້ອຍຫ້ອຍມັນໄວ້ ຕົ້ນແປກທີ່ດອນພຸ້ນ, ພາຂ້ອຍກັບຄືນໄປເອົາແດ່. "

ດັ່ງນັ້ນ ທັງສອງກໍພາກັນຕ່າວຄືນໄປທີ່ດອນ, ແລ້ວລີງກໍປີນຂຶ້ນໄປເທິງຕົ້ນແປກສູງໆ. ຕໍ່ມາມັນກໍຮ້ອງໃສ່ແມງກະພຸນວ່າ:

" ຂອບໃຈເດີ້ທີ່ກອບກູ້ເອົາຊີວິດຂ້ອຍໄວ້, ຂ້ອຍຫາຕັບບ່ອນໃດກໍບໍ່ເຫັນ, ດັ່ງນີ້ຂ້ອຍຈຶ່ງຊິຢູ່ໜີ້ສາກ່ອນ, ຂອບໃຈເດີ້! "

ແມງກະພຸນຮູ້ຄັກວ່າ ຕົນເອງຖືກຕົ້ມ ແຕ່ມັນກໍເຮັດຫຍັງບໍ່ໄດ້. ມັນລອຍກັບຄືນສູ່ຜາສາດ ທີ່ພື້ນທະເລ ແລະເລົ່າເລື່ອງທີ່ເກີດຂຶ້ນທັງໝົດ. ພະຍານາກໄດ້ຟັງກໍໃຈຮ້າຍຂຶ້ນວື້ງ.

" ໃຫ້ຂ້ານ້ອຍ ແລະປາໂຕອື່ນໆ ຟາດຫົວມັນສາ ແນວພັກພວກບໍ່ດີຈັ່ງຊີ້! " ປາໝຶກທູນບອກ.

" ເອົາເລີຍ! ຟາດມັນແຮງໆ " ພະຍານາກເວົ້າບໍ່ຈິງ.

ວ່າແລ້ວ ພວກເຂົາກໍຫຸ້ມຕີແມງກະພຸນຈົນກະດູກກະດ້ງວແຕກມຸ່ນໝົດ. ແມງກະພຸນຮ້ອງແທ້ຮ້ອງວ່າ ດ້ວຍຄວາມເຈັບປວດ, ສ່ວນປາໝຶກຖ່ອຍ ເອົາແຕ່ຫົວກັບຫົວຢູ່ບໍ່ເຊົາ.

ຂະນະນັ້ນ ເຈົ້າຍິງແລ່ນມາພໍດີ. " ເບິ່ງແມ້! " ເຈົ້າຍິງອຸທານ " ຂ້ານ້ອຍບໍ່ເຈັບເປັນຫຍັງນ່າ. ພຽງແຕ່ສືປວດໆທ້ອງຊື່ໆ."

ແມ່ນປາໝຶກເອງທີ່ໄດ້ວາງແຜນ ກ່ຽວກັບເລື່ອງນີ້ໄວ້ທັງໝົດເພື່ອຈະແກ້ແຄ້ນສັດຕູຂອງມັນ ນັ້ນຄືແມງກະພຸນ. ພະຍານາກໂມໂຫແຮງ, ພະອົງຈຶ່ງໄລ່ປາໝຶກໜີຈາກຜາສາດໄປເລີຍຕະຫລອດການ ແລະຍົກຍໍເອົາແມງກະພຸນຂຶ້ນເປັນຜູ້ໃກ້ຊິດ. ດັ່ງນີ້ແຫລະເປັນຫຍັງ ປາໝຶກຈຶ່ງຕ້ອງຢູ່ຕາມລຳພັງ, ຜູ້ໃດກໍຊັງໜັງໜ້າມັນ ເພາະ

ມັນສ້າງຄວາມສະທ້ານຢ້ານກົວແກ່ທຸກຊີວິດທີ່ຢູ່ໃນທະເລ. ແລະກໍເຫດນີ້ແຫລະ ເປັນຫຍັງແມງກະພຸນຈຶ່ງບໍ່ຖືກລົບກວນຈັກເທື່ອໂດຍສັດທະເລອື່ນໆ ທັງທີ່ມັນບໍ່ມີກະດູກ ແລະບໍ່ສາມາດລອຍໄດ້ໄວເລີຍ.

*ແປໂດຍ : ອຸທິນ ບຸນຍາວົງ*



# ເຟືອງພາໂຊກ



ຄັ້ງໜຶ່ງ ດົນນານມາແລ້ວ, ມີບ່າວນ້ອຍຄົນໜຶ່ງ ຊື່ໄຊເບອິ ຢູ່ ບ້ານຊາວໄຮ່ນາ ໃນປະເທດຍີ່ປຸ່ນ.

ມື້ໜຶ່ງ ເວລາກັບຕ່າວມາແຕ່ເຮັດວຽກຢູ່ທົ່ງນາ ລາວສະດຸດກ້ອນຫີນ ແລ້ວລົ້ມກະພຸບກະພາບ ນອນຂວ້ຳລົງພື້ນດິນ. ເມື່ອຕັ້ງສະຕິໄດ້ ລາວກໍພົບວ່າມີເຟືອງເສັ້ນໜຶ່ງຄາມືຕົນເອງຢູ່.

" ບະເວີຍ ! " ລາວຈົ່ມ "ເຟືອງເສັ້ນດຽວ ບໍ່ແມ່ນຂອງມີຄ່າຫຍັງ, ເອີ ແຕ່ວ່າ ມີແນວເຮັດໃຫ້ເຮົາຕ້ອງຄວ້າຈັບມັນໄວ້ ດັ່ງນີ້ເຮົາຈະບໍ່ຖິ້ມມັນ. "

ຂະນະທີ່ໄຊເບອີ ຍ່າງຕໍ່ໄປຕາມທາງ ທັງມືກໍຖືເສັ້ນເຟືອງນັ້ນ ແມງບໍ້ໂຕໜຶ່ງ ບິນມາວິນວຽນອ້ອມຫົວຂອງລາວຢູ່.

" ແມງຈັງໄຮ! " ລາວຮ້ອງໃສ່ " ຖ້າເບິ່ງ! ກູຊິຈັດການບໍ່ໃຫ້ມຶງມາລົບກວນໄດ້ອີກ! " ເວົ້າແລ້ວລາວກໍຄວ້າຈັບເອົາແມງບໍ້ ແລະມັດຫາງມັນຕິດກັບເສັ້ນເຟືອງໄວ້.

ລາວຍ່າງຕໍ່ໄປ ມືຖືເສັ້ນເຟືອງທີ່ມີແມງບໍ້ມັດຕິດຢູ່, ມາບາດນີ້ລາວພົບກັບແມ່ຍິງຄົນໜຶ່ງ ທີ່ພວມຍ່າງໄປກັບລູກຊາຍນ້ອຍ. ເມື່ອທ້າວນ້ອຍເຫັນແມງບໍ້ ກໍປວດຢາກໄດ້ມັນເປັນດິ້ນເປັນດັ່ນ.

" ແມ່ເອົາແມງບໍ້ໃຫ້ລູກແດ່ " ທ້າວນ້ອຍວ່າ " ເອົາໃຫ້ແດ່ ເດີແມ່ເດີ້! "

" ເອົາແມະນ້ອຍ ນີ້ແມງບໍ້ອ້າຍເອົາໃຫ້. " ໄຊເບອີກ່າວທັງຍື່ນເສັ້ນເຟືອງໃຫ້ທ້າວນ້ອຍຈັບເອົາ.

ເພື່ອຕອບແທນ ແລະຂອບໃຈ, ແມ່ຂອງເດັກນ້ອຍ ເອົາໝາກກ້ຽງທີ່ນາງຖືມານຳນັ້ນໃຫ້ໄຊເບອີສາມໜ່ວຍ.

ໄຊເບອີຂອບໃຈແລ້ວກໍຍ່າງຕໍ່ໄປ. ບໍ່ດົນລາວກໍໄປພໍ້ພໍ່ຄ້າເລາະຂາຍເຄື່ອງຄົນໜຶ່ງ ຊຶ່ງຫິວນ້ຳຫລາຍຈົນຊິເປັນລົມ. ຢູ່ອ້ອມແອ້ມນັ້ນ ກໍບໍ່ມີນ້ຳຈັກແຫ່ງເລີຍ. ໄຊເບອີຮູ້ສຶກສົງສານພໍ່ຄ້າຜູ້ນີ້ຫລາຍ ຈຶ່ງເອົາໝາກກ້ຽງທັງສາມໜ່ວຍໃຫ້ລາວກິນແທນນ້ຳ.

ພໍ່ຄ້າຮູ້ສຶກເປັນໜີ້ບຸນຄຸນຫລາຍ ແລະເພື່ອຕອບແທນຄວາມດີອັນນັ້ນ ລາວຈຶ່ງເອົາຜ້າແພສາມຜືນໃຫ້ໄຊເບອີ.



ໄຊເບອີຮັບເອົາຜ້າແພ ແລ້ວຍ່າງຕໍ່ໄປ, ແລະບັດນີ້ລາວພໍ້ເຈົ້າຍິງຢູ່ໃນລາຊະລົດທີ່ແວດລ້ອມດ້ວຍມະຫາດເລັກຮັບໃຊ້.

ເຈົ້າຍິງສ່ອງອອກມາເຫັນໄຊເບອີ ແລ້ວກໍກ່າວວ່າ :

" ໂຫ! ຈັ່ງແມ່ນເຈົ້າມີແພງາມເນາະ, ໃຫ້ຂ້ອຍຂໍແດ່ໄດ້ບໍ່ນໍ້. "

ໄຊເບອີມອບແພໃຫ້ເຈົ້າຍິງ ແລະເພື່ອຕອບແທນບຸນຄຸນເຈົ້າຍິງເອົາເງິນໃຫ້ລາວຈຳນວນຫລວງຫລາຍ.

ໄຊເບອີ ໄດ້ເງິນແລ້ວກໍຊື້ດິນມາໄວ້ຫລາຍໆ. ຕໍ່ມາລາວກໍແບ່ງນາໃຫ້ປະຊາຊົນພາຍໃນບ້ານຂອງຕົນ. ດັ່ງນີ້ ທຸກຄົນຈຶ່ງມີນາເປັນຂອງຕົນເອງ, ເຂົາເຈົ້າພາກັນເຮັດນາ ຢ່າງຂະຫຍັນໝັ່ນພຽນ, ບ້ານນີ້ເລີຍກາຍເປັນບ້ານອຸດົມຮັ່ງມີ ຊາວບ້ານພາກັນປຸກເລົ້າປຸກສາງຂຶ້ນໃໝ່ຈຳນວນຫລາຍ ເພື່ອເກັບມ້ຽນຊັບສົມບັດ. ຜູ້ໃດກໍຕື້ນຕັນໃຈ ເມື່ອນຶກຂຶ້ນໄດ້ວ່າ ຊັບສົມບັດເຫລົ່ານີ້ ເກີດຂຶ້ນມາຍ້ອນເສັ້ນເຟືອງເສັ້ນນ້ອຍໆທີ່ໄຊເບອີບັງເອີນຈັບຕິດຄາມືຂຶ້ນມາ.

ໄຊເບອີກາຍເປັນຄົນສຳຄັນທີ່ສຸດໃນບ້ານ. ທຸກໆຄົນພາກັນເຄົາລົບນັບຖືລາວເປັນຢ່າງສູງ, ແລະຕະຫລອດເວລາທີ່ລາວມີຊີວິດຢູ່ນັ້ນ ເຂົາເຈົ້າເອີ້ນລາວວ່າ : " ເຟືອງພາໂຊກ. "

*ແປໂດຍ : ອຸທິນ ບຸນຍາວົງ*



# ຜູ້ບັນດານຕົ້ນໄມ້ບານດອກ



**ປາງ** ກ່ອນກີ້ ທີ່ບ້ານແຫ່ງໜຶ່ງມີພໍ່ເຖົ້າໃຈບຸນກັບເມຍຢູ່ເຮືອນຫລັງໜຶ່ງ, ຖັດກັນນັ້ນ ຍັງມີພໍ່ເຖົ້າໃຈແຄບກັບເມຍອາໄສຢູ່. ຄູ່ຜູ້ເຖົ້າໃຈບຸນມີໝາຂາວຊື່ວ່າຊິໂຣ. ເຂົາເຈົ້າຮັກຊິໂຣຫລາຍ ແລະເອົາຂອງກິນແຊບໆໃຫ້ມັນກິນສະເໝີ. ແຕ່ພໍ່ເຖົ້າໃຈແຄບຊ້ຳພັດຊັງໝາທີ່ສຸດ, ຍາມໃດເຫັນຊິໂຣລາວກໍແກ່ວງກ້ອນຫີນໃສ່ໂລດ.

ມື້ໜຶ່ງ ຊີໂຣເຫົ່າສຽງດັງແຮງໆ ຢູ່ພາຍໃນສວນ, ພໍ່ເຖົ້າໃຈບຸນຈຶ່ງອອກໄປເບິ່ງວ່າມີເລື່ອງຫຍັງ. ລາວເຫັນຊີໂຣເຫົ່າຢູ່ບໍ່ເຊົາທັງຄວັດດິນເປັນຮູ. " ຈັ່ງໃດ ! ມຶງຢາກໃຫ້ຄວັດຊ່ອຍຊັ້ນຫວະ?" ພໍ່ເຖົ້າເວົ້າກັບໝາ ແລ້ວລາວກໍໄປເອົາຈິກມາ ແລະຕັ້ງຕົ້ນຂຸດດິນ. ລາວຂຸດໄປຂຸດໄປ, ທັນໃດນັ້ນ ຈິກກໍໄປສັບເອົາຂອງແຂງໆ, ພໍ່ເຖົ້າຂຸດຕໍ່ໄປອີກ ແລ້ວກໍພົບໄຫເຕັມໄປດ້ວຍ ຕ່ອນຄຳ. ລາວຕື່ນເຕັ້ນດີໃຈ ແລະຂອບອົກຂອບໃຈຊີໂຣ ຢ່າງລົ້ນເຫລືອ ທີ່ພາໃຫ້ລາວໄປພໍ້ໄຫຄຳ, ແລ້ວລາວກໍເອົາຄຳທັງໝົດເມື່ອມ້ຽນໄວ້ເຮືອນ.

ຂະນະດຽວກັນນັ້ນພໍ່ເຖົ້າໃຈແຄບພວມຈອບເບິ່ງຢູ່ ແລະເຫັນເຫດການທັງໝົດ. ພໍ່ເຖົ້າໃຈແຄບຢາກໄດ້ຄຳຄືກັນ. ດັ່ງນັ້ນ ມື້ຕໍ່ມາ ລາວຈຶ່ງໄປຂໍຢືມຊີໂຣ ນຳພໍ່ເຖົ້າໃຈບຸນ ວ່າພໍໄດ້ແດ່ບໍ່ ຈັກຫວ່າງຈັກຄາວ.

" ຊິເປັນຫຍັງ ມາຢືມໂລດ ຄັນມັນພໍຊ່ອຍຫຍັງເຈົ້າໄດ້" ພໍ່ເຖົ້າໃຈບຸນວ່າ.

ພໍ່ເຖົ້າໃຈແຄບເອົາຊີໂຣເມືອເຮືອນ ແລ້ວກໍພາອອກໄປແຄມທົ່ງ. " ເອົາລະ! ບາດນີ້ຄວັດຫາຄຳເບິ່ງດູ! " ລາວບອກໝາ " ຄັນບໍ່ຊັ້ນ ກູຊິຕີມຶງໂລດ."

ດັ່ງນີ້ ຊີໂຣຈຶ່ງລົງມື ເອີ! ລົງຕີນຄວັດດິນເປັນກຸ່ນໆ. ຕໍ່ມາພໍ່ເຖົ້າໃຈແຄບ ເອົາຊີໂຣມັດຕິດກົກໄມ້ໄວ້ ແລ້ວລາວກໍລົງມືຂຸດຕໍ່ເອງ. ແຕ່ສິ່ງທີ່ລາວພົບພໍ້ຢູ່ໃນຂຸມນັ້ນລ້ວນແຕ່ແມ່ນຂອງເນົ່າເໝັນທັງໝົດ, ບໍ່ມີຄຳຈັກເມັດເລີຍ. ອັນນີ້ເຮັດໃຫ້ລາວໃຈຮ້າຍແຮງ, ລາວຈຶ່ງເອົາຈິກຟາດຫົວຊີໂຣ ຕາຍຄາມື.

ຝ່າຍຜູ້ເຖົ້າໃຈບຸນຊຶ່ງເປັນເຈົ້າຂອງໝາ ໂສກເສົ້າປານີໂຮ ຫລາຍ . ລາວກັບເມຍພາກັນຝັງຄາບໝາໄວ້ທີ່ບໍລິເວນສວນ ແລ້ວ ປູກຕົ້ນແປກນ້ອຍ ໄວ້ເທິງຂຸມແຫ່ງນັ້ນ. ທຸກໆມື້ ສອງເຖົ້າພາກັນ ໄປຫົດນ້ຳຕົ້ນແປກ ດ້ວຍຄວາມທະນຸຖະໜອມ. ຕົ້ນແປກໃຫຍ່ ຂຶ້ນໄວ ແລະພຽງບໍ່ເທົ່າໃດປີ ມັນກໍໃຫຍ່ສູງພົ້ນຕົ້ນໄມ້ອື່ນໆ.

ແມ່ເຖົ້າໃຈບຸນເວົ້າວ່າ: " ຈື່ຕວ່າ ວ່າຊີໂຮ ມັກກິນເຂົ້າໜົມ ແຜ່ນ, ເຮົາພາກັນປ້ຳຕົ້ນແປກນີ້ ແລ້ວເຮັດຄົກເທາະ, ແລະໃຊ້ຄົກ ຕຳເຂົ້າໜົມ ເພື່ອທານຫາຊີໂຮ. "

ແລ້ວພໍ່ເຖົ້າກໍປ້ຳຕົ້ນແປກ ແລະຕັດມາເຮັດຄົກ. ສອງເຖົ້າເອົາ ເຂົ້າໜຽວໜຶ້ງໃສ່ຄົກ ແລ້ວກໍເລີ່ມຕົ້ນຕຳ ເພື່ອຈະເຮັດເປັນເຂົ້າໜົມ ແຜ່ນ. ແຕ່ເມື່ອພໍ່ເຖົ້າ ຕຳໄປບໍ່ດົນ ເຂົ້າທັງໝົດກໍກາຍເປັນຄຳ ເຫລື້ອມຍຸບໆ. ມາບັດນີ້ ຄູ່ຜົວເມຍຜູ້ເຖົ້າໃຈບຸນເລີຍຮັ່ງມີສີສຸກຂຶ້ນ ກວ່າແຕ່ເກົ່າແຕ່ຫລັງ.

ຝ່າຍຜູ້ເຖົ້າໃຈແຄບນັ້ນຈອບເບິ່ງທາງປ່ອງຢ້ຽມຢູ່ ແລະເຫັນ ເຫດການທັງໝົດ ທີ່ເຂົ້າກາຍເປັນຄຳ, ແລ້ວລາວກໍຄິດຢາກໄດ້ ຄຳມາເປັນຂອງໂຕ ເປັນດັ່ນເປັນດົ້ນ. ດັ່ງນີ້ ມື້ຕໍ່ມາ ລາວຈຶ່ງ ໄປຂໍຢືມຄົກ.

" ຊິເປັນຫຍັງ, ກໍຢືມໄດ້ແທ້ລະບໍ ອັນສ່ຳຄົກຫັ້ນ " ພໍ່ເຖົ້າ ໃຈບຸນວ່າ.

ພໍ່ເຖົ້າໃຈແຄບ ໄດ້ຄົກແລ້ວກໍເອົາເມືອເຮືອນ ຈັດການເອົາ ເຂົ້າໜຶ້ງໃສ່ ແລະບອກເມຍວ່າ: " ໃຫ້ເບິ່ງເດີ້, ບາດຂ້ອຍເລີ່ມຕຳ ເຂົ້ານີ້ ຊິກາຍເປັນຄຳໂລດ. " ແຕ່ວ່າເມື່ອລາວຕຳໄປສອງສາມ ບາດ ເຂົ້າໜຶ້ງຊ້ຳກາຍເປັນຂອງບູດເນົ່າ, ບໍ່ເປັນຄຳຈັກດີ້ເລີຍ. ອັນນີ້



ห้ามจำหน่าย

ເຮັດໃຫ້ລາວໃຈຮ້າຍແຮງ ລາວຈຶ່ງຄວ້າເອົາຂວານມາຟັນຄົກ ເປັນຕ່ອນເລັກ ຕ່ອນນ້ອຍ ແລ້ວຍັດໃສ່ເຕົາສຸມໄຟ.

ເວລາພໍ່ເຖົ້າໃຈບຸນໄປຂໍເອົາຄົກຄືນ ກໍປາກົດວ່າ ຄົກເປັນຂີ້ເຖົ່າໄປແລ້ວ. ພໍ່ເຖົ້າໃຈບຸນໂສກເສົ້າເສຍໃຈທີ່ສຸດ ເພາະວ່າ ຄົກເປັນອະນຸສອນໃຫ້ລະນຶກຫາ ຊີໂຣ. ດັ່ງນີ້ ພໍ່ເຖົ້າຈຶ່ງຂໍເອົາຂີ້ເຖົ່າສ່ວນໜຶ່ງກັບຄືນເມືອເຮືອນ.

ຍາມນັ້ນເປັນກາງລະດູໜາວ, ຕົ້ນໄມ້ທັງໝົດປາສະຈາກໃບ. ພໍ່ເຖົ້າໃຈບຸນກະວ່າ ຈະເອົາຂີ້ເຖົ່າໄປໂຮຍລົງໃນສວນ. ພໍລາວເອົາໄປໂຮຍລົງແທ້ໆ ຕົ້ນຊາກຸຣະທັງໝົດໃນສວນນັ້ນ ກໍເລີ່ມບານເຮືອງເຮື່ອຂຶ້ນມາທັນໃດ ໃນກາງລະດູໜາວນັ້ນໂລດ. ຜູ້ຄົນພາກັນຫລັ່ງມາເບິ່ງດອກໄມ້ມະຫັດສະຈັນນີ້ ບໍ່ມີຍາມເຊົາ. ເຈົ້າຊາຍອົງໜຶ່ງຊຶ່ງຜາສາດຕັ້ງຢູ່ບໍ່ໄກຈາກບ່ອນນີ້ ກໍໄດ້ຍິນຂ່າວເຊັ່ນດຽວກັນ.

ເຈົ້າຊາຍເອງກໍມີຕົ້ນຊາກຸຣະຢູ່ໃນສວນ ຊຶ່ງພະອົງທະນຸຖະໜອມມັນທີ່ສຸດ. ພະອົງຄອງຖ້າໃຫ້ລະດູບານໃໝ່ມາຮອດເກືອບໃຈຂາດເພື່ອຈະເບິ່ງດອກຊາກຸຣະບານ. ແຕ່ພໍຮອດລະດູບານໃໝ່ເຈົ້າຊາຍກໍ່ພົບວ່າ ຕົ້ນຊາກຸຣະນັ້ນຕາຍເສຍແລ້ວ. ພະອົງຮູ້ສຶກໂສກເສົ້າຫລາຍ, ດັ່ງນີ້ຈຶ່ງສົ່ງຄົນໄປບອກພໍ່ເຖົ້າໃຈບຸນທັງຂໍຮ້ອງໃຫ້ລາວຊ່ວຍກອບກູ້ເອົາຕົ້ນໄມ້ໃຫ້ມີຊີວິດຄືນ. ພໍ່ເຖົ້າກໍາເອົາຂີ້ເຖົ່າໜ້ອຍໜຶ່ງ ແລ້ວກໍຂຶ້ນໄປເທິງຕົ້ນໄມ້. ລາວເອົາຂີ້ເຖົ່າໂຮຍໃສ່ງ່າໄມ້ທີ່ຕາຍນັ້ນ ແລະຕໍ່ມາເກືອບວ່າປຸ໊ບປັ໊ບທັນໃດໂລດ ຕົ້ນຊາກຸຣະ ກໍອອກດອກບານ ເຮືອງເຮື່ອ ງາມອາດຕາກວ່າທີ່ເຄີຍເປັນມາ.

ເຈົ້າຊາຍຂີ່ມ້າມາເບິ່ງ ແລະມີຄວາມຊົມຊື່ນຍິນດີທີ່ສຸດ. ພະອົງເອົາຄໍາ ແລະຂອງຂວັນ ໃຫ້ພໍ່ເຖົ້າໃຈບຸນຢ່າງຫລວງຫລາຍ

ແລະພິເສດເໜືອສິ່ງອື່ນໃດ ເຈົ້າຊາຍໄດ້ຕັ້ງນາມມະຍົດໃຫ້ພໍ່ເຖົ້າວ່າ " ອັດສະວິນອາວຸໂສ ຜູ້ບັນດານຕົ້ນໄມ້ບານດອກ "

ບັດນີ້ ອັດສະວິນອາວຸໂສ ຜູ້ບັນດານຕົ້ນໄມ້ບານດອກ ພ້ອມກັບເມຍ ພາກັນຮັ່ງມີເປັນເສດຖີ ມີຊີວິດຢູ່ຢ່າງຜາສຸກສຳລານ ຍືນນານອີກຫລາຍປີ.

*ແປໂດຍ : ອຸທິນ ບຸນຍາວົງ*



# ປູກັບລີງ



ຄັ້ງໜຶ່ງ ປູກັບລີງຍ່າງໄປນຳກັນ. ຂະນະໄປຕາມທາງລີງພໍ້ແກ່ນໝາກກາກີ, ສ່ວນປູພໍ້ກ້ອນເຂົ້າ. ລີງຢາກໄດ້ກ້ອນເຂົ້າຫລາຍ ແລະຍ້ອນມັນເວົ້າເກັ່ງ ມັນຈຶ່ງເວົ້າຊວນເຊື່ອ ໃຫ້ປູຕົກລົງແລກປ່ຽນກ້ອນເຂົ້າກັບແກ່ນໝາກກາກີ. ເມື່ອໄດ້ກ້ອນເຂົ້າມາ ລີງກໍຟ້າວໂມ່ມເຂົ້າປາກໂລດ.

ສ່ວນປູກິນແກ່ນໝາກກາກິບໍ່ໄດ້ ມັນຈຶ່ງເອົາເມືອເຮືອນ ແລ້ວປູກໄວ້ໃນສວນ, ຕໍ່ມາແກ່ນກໍອອກໜໍ່ເປັນຕົ້ນ. ປູເອົາໃຈໃສ່ບົວລະບັດເປັນປະຈຳທຸກມື້ ຕົ້ນໄມ້ຈຶ່ງໃຫຍ່ຂຶ້ນ ໃຫຍ່ຂຶ້ນຢ່າງທັນຕາ.

ຈາກແກ່ນນ້ອຍໆ ມັນກາຍເປັນຕົ້ນໄມ້ໃຫຍ່, ແລະແລ້ວຍາມລະດູໃບໄມ້ຫລົ່ນປີໜຶ່ງ ປູກໍພົບວ່າຕົ້ນກາກິຕົ້ນນີ້ເຕັມໄປດ້ວຍໜ່ວຍງາມດົກໜາ. ປູຢາກກິນໝາກກາກິ ແຕ່ເຖິງແມ່ນວ່າມັນຈະພາຍະຍາມປີນປານໃດກໍຕາມ ມັນກໍຂຶ້ນຕົ້ນກາກິບໍ່ໄດ້. ດັ່ງນີ້ປູຈຶ່ງຂໍໃຫ້ລີງຂຶ້ນເອົາໝາກກາກິມາໃຫ້. ແຕ່ວ່າ ດຽວນີ້ລີງຊ້ຳມັກກິນໝາກກາກິຫລາຍກວ່າກ້ອນເຂົ້າ. ເມື່ອລີງຂຶ້ນໄປເທິງຕົ້ນໄມ້ແລ້ວ ມັນກໍກິນໝາກກາກິສຸກທັງໝົດ ແລະຖິ້ມແຕ່ໜ່ວຍດິບໆແຂງໆລົງມາໃຫ້ປູ. ໝາກກາກິໜ່ວຍໜຶ່ງຕົກຖືກຫົວປູ ຈົນປູເຈັບສາຫັດ.

ກໍແທ້ລະ, ປູບໍ່ດີໃຈຕໍ່ການກະທຳຂອງລີງ, ປູຈຶ່ງຂໍຮ້ອງປາໝູ່ຄື: ຄົກ, ແຕນ ແລະໝາກກໍ່ ໃຫ້ມາຊ່ອຍລົງໂທດລີງ. ວັນໜຶ່ງໝູ່ທັງສາມນີ້ມາລີ້ຢູ່ພາຍໃນເຮືອນຂອງປູ ແລ້ວປູກໍເຊີນລີງມາດື່ມນ້ຳຊາ.

ເມື່ອລີງມາຮອດ ປູກໍພາໄປນັ່ງຢູ່ໃກ້ເຕົາໄຟ. ສ່ວນໝາກກໍ່ຊຶ່ງເອົາຕົວໝົ້ນຢູ່ໃນກອງຂີ້ເຖົ່າ ເພື່ອໝົກຕົວເອງໃຫ້ຮ້ອນໆນັ້ນມາຮອດຕອນນີ້ກໍແຕກຕຸ໊ບຂຶ້ນທັນໃດໄພຟົ້ງໄປໄໝ້ຄໍລີງ. ລີງຮ້ອງເຫລີເຫລີດເພາະທັງເຈັບທັງຮ້ອນ, ມັນເຕັ້ນເດາະເຕັ້ນດ່ອງ, ພ້ອມດຽວກັນ ຝ່າຍແຕນກໍບິນສັກລີງໃສ່ ແລະຕອດຕາມຕົນໂຕລີງ. ລີງທົນບໍ່ໄຫວ ຈຶ່ງແລ່ນຕະເຫລີດອອກຈາກເຮືອນ, ແຕ່ວ່າຄົກທີ່ນັ່ງຢູ່ເທິງປະຕູທັນກິ້ງຕົກລົງມາທັບລີງເກືອບລີງຫລັງຫັກ.

ລີງເຫັນວ່າຕົວເອງຈະໜີໄປບໍ່ພົ້ນ ມັນຈຶ່ງຂາບລົງຕໍ່ໜ້າປູກັບໝູ່ທັງສາມ ແລະເວົ້າວ່າ : " ຂ້ອຍເຮັດແນວຈັ່ງໄຮຫລາຍ, ຕອນ

ຂ້ອຍຂຶ້ນກິນໝາກກາກີ ຂ້ອຍໂຍນໜ່ວຍດິບໆແຂງໆລົງໃສ່ຫລັງປູ. ບັດນີ້ຂ້ອຍສັນຍາວ່າຈະບໍ່ເຮັດແນວຊິ່ວຈັ່ງຊັ້ນອີກຈັກເທື່ອ. ອະໄພໃຫ້ຂ້ອຍແດ່ ສາທຸ."

ປູຍົກໂທດໃຫ້ລີງ, ແລ້ວທັງໝົດກໍເປັນໝູ່ທີ່ດີຕໍ່ກັນອີກ. ລີງຈື່ຈຳເອົາບົດຮຽນນີ້ ແລະບໍ່ຄິດສໍ້ໂກງຜູ້ໃດອີກຈັກເທື່ອ.

( ໝາກກາກີ : ໝາກໄມ້ມີລົດຫວານ, ສຸກມາເປັນສີເຫລືອງ, ໜ່ວຍສຳໝາກເຂືອ. )

*ແປໂດຍ : ອຸທິນ ບຸນຍາວົງ*



# ຍັກກັບໄກ່



ມີພູແຫ່ງໜຶ່ງ ທັງສູງທັງຊັນ ປານວ່າຈອມຂອງມັນໄປຈຸຟ້າ. ທີ່ຈອມພູນີ້ມີຍັກກັນດານໂຕໜຶ່ງອາໄສຢູ່, ເປັນຍັກໜັງຂຽວ ແລະມີເຂົາໜຶ່ງເຂົາດຽວປົ່ງອອກມາຈາກຫົວ. ຍັກໂຕນີ້ເຮັດແນວຖ່ອຍຮ້າຍຢູ່ສະເໝີ.

ເຊົ້າມື້ໜຶ່ງ ຊາວນາທີ່ອາໄສຢູ່ອ້ອມແອ້ມພູແຫ່ງນີ້ ພາກັນອອກໄປເຮັດວຽກຢູ່ກາງທົ່ງ. ເຂົາເຈົ້າພົບວ່າ ຜັກຊະນິດຕ່າງໆໃນ

ສວນຖືກທຳລາຍໝົດ, ຄືງມີຜູ້ໃດຜູ້ໜຶ່ງມາຫລົກຜັກແລ້ວຢຽບຢ່ຳ ມັນຈົນບໍ່ເຫລືອອັນດີຈັກໜ້ອຍ. ແມ່ນຜູ້ໃດນໍ້ ບັງອາດມາເຮັດແນວ ຈັ່ງຊີ້ ? ຊາວນາພາກັນພິຈາລະນາເບິ່ງຢ່າງຖີ່ຖ້ວນ ແລ້ວກໍພໍເຊື່ອ ໄດ້ວ່າ ມັນແມ່ນຍັກກັນດານໂຕນັ້ນເອງ. ເຂົາເຈົ້າສັງເກດເຫັນຮອຍ ຕີນຂະໜາດໃຫຍ່ຂອງມັນ ຢຽບຢ່ຳໄປທົ່ວ .

ອັນນີ້ເຮັດໃຫ້ພວກຊາວນາໃຈຮ້າຍແຮງ. ເຂົາເຈົ້າຄຽດແຄ້ນ ທີ່ຍັກໂຕນີ້ມາພາໂລ, ເມື່ອແນມເບິ່ງຜັກທີ່ມຸ່ນອັບຍັບແລ້ວ ເຂົາເຈົ້າ ກໍແຮ່ງໃຈຮ້າຍຂຶ້ນວິ້ງ. ຕໍ່ມາເຂົາເຈົ້າພາກັນຫລຽວຂຶ້ນໄປເທິງພູ ແລະພ້ອມກັນຮ້ອງດ່າຍັກ : " ບັກຍັກຖ່ອຍ ! ປານໃດຊິເຊົາເຮັດ ແນວຊິ່ວໆນີ້ເວີ້ຍ ! "

ຍັກແນມລົງມາແຕ່ຈອມພູ ເບິ່ງຊາວນາ ແລ້ວກໍຮ້ອງຕອບ ດ້ວຍສຽງສະນັ່ນຟ້າວ່າ: " ສູຕ້ອງເອົາມະນຸດມາໃຫ້ຂ້າກິນມື້ລະຄົນ, ແລ້ວຂ້າຈຶ່ງຊິເລີກບັງບຽດສູ ! "

ຊາວນາເຫລົ່ານີ້ບໍ່ເຄີຍໄດ້ຍິນຍັກເວົ້າສະຫາວແນວນີ້ຈັກເທື່ອ. ເຂົາເຈົ້າຍິກຈິກຍິກຊ້ວນຂູຂຶ້ນ ທັງຮ້ອງທັ່ງໄປໃສ່ວ່າ: "ມຶງຄຶດວ່າມຶງ ແມ່ນໃຜ ຫັ້ນ ຈຶ່ງບັງອາດ ຊິເອົາມະນຸດໄປກິນມື້ລະຄົນໄດ້ງ່າຍໆ!"

" ຂ້າເປັນຈອມຍັກໃນທົ່ວແຜ່ນດິນນີ້ " ຍັກຮ້ອງຂຶ້ນເຟັ້ງໆ " ຜູ້ນັ້ນລະ ຄືຂ້າເອງ, ບໍ່ແມ່ນຜູ້ອື່ນໃດ ເດັດຂາດ ! ບໍ່ມີອັນໃດ ທີ່ຂ້າເຮັດບໍ່ໄດ້ ຮະ ຮາ ຮາ ! " ສຽງຍັກດັງກ້ອງສະນັ່ນພູ ຈົນ ຕົ້ນໄມ້ໃບຫຍ້າ ໂອນເອນຫວັ່ນໄຫວ .

" ເອົາລະ ! ຄັນຈັ່ງຊັ້ນ " ຊາວນາຮ້ອງໄປໃສ່ " ລອງເບິ່ງ ດູ ວ່າມຶງຊິເກັ່ງສໍາໃດ. ເພື່ອພິສູດ ມຶງຕ້ອງສ້າງຂັ້ນໄດຫີນຮ້ອຍຂັ້ນ ພາຍໃນຄືນດຽວ ແຕ່ທົ່ງນີ້ຂຶ້ນໄປຮອດຈອມພູ. ຖ້າມຶງເຮັດອັນນີ້ໄດ້



ກໍແປວ່າມຶງເຮັດໄດ້ຫມົດທຸກຢ່າງ, ແລ້ວຕູຂ້າຊິເຮັດທຸກຢ່າງທີ່ມຶງຕ້ອງການ. "

" ຂ້າຊິເຮັດໃຫ້ເບິ່ງ ! " ຍັກຮ້ອງຕອບຄືນມາ. " ຖ້າວ່າຂ້າເຮັດຂັ້ນໃດບໍ່ແລ້ວ ກ່ອນໄກ່ຂັນກົກ ຂ້າສັນຍາວ່າ ຊິຫນີໄປໄກໆ ແລະຈະບໍ່ມາກວນພວກສູອີກຈັກເທື່ອ. "

ທັນທີ ທີ່ຄໍ່າມືດລົງ ຄືນນັ້ນຍັກກໍຄ່ອຍຈອບໄປທີ່ບ້ານຊາວນາ ແລ້ວເອົາສຸ່ມ ທີ່ເຮັດດ້ວຍເຝືອງງຸມທົວໄກ່ໄວ້ທຸກໂຕ ເພື່ອບໍ່ໃຫ້ໄກ່ເຫັນຕາເວັນຂຶ້ນຕອນເຊົ້າ. ຕໍ່ມາ ຍັກກໍເວົ້າກັບໂຕເອງວ່າ: " ບາດນີ້ ຂ້າຊິເຮັດຂັ້ນໃດລະ ! " ວ່າແລ້ວມັນກໍຕັ້ງຫນ້າເຮັດວຽກຫນັກ, ສ້າງຂັ້ນໃດຫີນຂຶ້ນໄປເທິງຈອມພູ.

ຍັກບຸກບືນສຸດຂີດ ແລະຢ່າງຮີບຮ້ອນ ຈົນເຮັດຂັ້ນໄດແລ້ວໄປເກົ້າສິບເກົ້າຂັ້ນ. ແລ້ວຕໍ່ມາຕາເວັນກໍເລີ່ມພົ້ນຂຶ້ນທາງດ້ານຕາເວັນອອກ. ຍັກໄດ້ແຕ່ຍິ້ມຢູ່ຜູ້ດຽວ ທັງຄິດວ່າໄກ່ຈະບໍ່ຂັນເລີຍ, ແລະຍັງຄິດວ່າມີເວລາຫລາຍຢູ່ ເພື່ອຈະເອົາຫີນໃສ່ຂັ້ນໄດຂັ້ນສຸດທ້າຍ.

ແຕ່ວ່າຢູ່ເທິງພູແຫ່ງນີ້ ຊໍ້າມີເທວະດາໃຈດີເຝົ້າເບິ່ງຢູ່. ເທວະດາສ່ອງເຫັນວ່າ ຍັກພວມໃຊ້ເລ່ລ່ຽມອັນຖ່ອຍຮ້າຍ, ດັ່ງນີ້ ຕອນທີ່ຍັກລົງໄປເອົາຫີນກ້ອນສຸດທ້າຍ ເທວະດາເລີຍເຫາະລົງໄປເອົາສຸ່ມອອກຈາກທົວໄກ່ໂຕຫນຶ່ງ.

ໄກ່ໂຕນີ້ພໍເຫັນຕາເວັນຂຶ້ນ ກໍສົ່ງສຽງຂັນດັງໆ: ເອີ-ອີ-ເອີ໊ກ-ເອີກ ! ສຽງນີ້ປຸກໄກ່ໂຕອື່ນທັງຫມົດ ຊຶ່ງຄິດວ່າຍັງເປັນກາງຄືນຢູ່ເພາະມີສຸ່ມງຸມທົວພວກມັນໄວ້, ແລ້ວໄກ່ທັງຫມົດກໍເລີຍພາກັນຂັນ.

ຍັກຕື່ນຕົກໃຈ ເມື່ອໄດ້ຍິນສຽງໄກ່ຂັນ " ຂ້າປະລາໄຊແລ້ວ!" ມັນຮ້ອງຂຶ້ນ " ຍັງພຽງແຕ່ຫີນກ້ອນດຽວໜຶ່ງນ່າ "

ແຕ່ຍັກຕ້ອງເຮັດຕາມຄຳສັນຍາ, ດັ່ງນີ້ ມັນກໍເລີຍທຸບຕີເຂົາຂອງມັນດ້ວຍຄວາມໂສກເສົ້າເສຍໃຈ ແລ້ວໜີເຂົ້າປ່າໄປສຸດແສນໄກ.

ບໍ່ມີໃຜພົບເຫັນຍັກໂຕນີ້ອີກຈັກເທື່ອເລີຍ, ສ່ວນຊາວນາກໍພາກັນຢູ່ຢ່າງມີຄວາມຜາສຸກທີ່ຕີນພູແຫ່ງນີ້ອີກຕໍ່ໄປ. ເຂົາເຈົ້າພາກັນເຮັດຂັ້ນໄດຂຶ້ນຈອມພູໃຫ້ສຳເລັດ ແລະພາກັນຂຶ້ນໄປເທິງພູເລື້ອຍໆ ເພື່ອຊື່ນຊົມທິວທັດ ອັນໜ້າອອນຊອນ ຍາມແລງຂອງລະດູຮ້ອນ.

*ແປໂດຍ : ອຸທິນ ບຸນຍາວົງ*



# ກະຕ່າຍຂ້າມທະເລ



ຄັ້ງໜຶ່ງ ກະຕ່າຍຂາວໂຕໜຶ່ງຄຶດຢາກເດີນທາງຂ້າມທະເລ. ມັນແນມເຫັນດອນອັນສວຍງາມ ແລະໂອ້ອ່າວຢາກໄປໃຫ້ເຖິງ ເປັນດັ່ນດົ້ນ, ແຕ່ມັນຊໍ້າລອຍນໍ້າບໍ່ເປັນ ທັງບໍ່ມີເຮືອຈະຂີ່. ຄັນຕໍ່ມາ ມັນກໍຄິດອອກໄດ້.

ມັນຮ້ອງໃສ່ປາສະຫລາມໃນທະເລ ແລະເວົ້າວ່າ: " ປາສະຫລາມ, ລະຫວ່າງເຮົາທັງສອງນີ້ ແມ່ນໃຜຊິມີໝູ່ຫລາຍກວ່າກັນ, ເຈົ້າຫລືຂ້ອຍ ? "

" ຂ້ອຍແນ່ໃຈວ່າ ຂ້ອຍມີໝູ່ຫລາຍກວ່າ." ປາສະຫລາມວ່າ "ຄັນຊັ້ນກໍລອງນັບເບິ່ງ ເພື່ອໃຫ້ມັນຄັກ." ກະຕ່າຍວ່າ " ເອີເປັນຫຍັງ ເຈົ້າບໍ່ເອົາໝູ່ມາລຽນເປັນແຖວໃນທະເລແຕ່ໜີ້ໄປຫາດອນພຸ້ນ ? ເຮັດ ຈັ່ງຊັ້ນຂ້ອຍຈຶ່ງຊິນັບໄດ້. "

ດັ່ງນີ້ ປາສະຫລາມທັງຫລາຍກໍເລີຍພາກັນລຽນເປັນແຖວຢູ່ ໃນທະເລ, ແລ້ວກະຕ່າຍກໍເຕັ້ນດ່ອງໆໄຕ່ຫລັງປາສະຫລາມໄປເທື່ອ ລະໂຕ ທັງນັບວ່າ : " ໜຶ່ງ, ສອງ, ສາມ, ສີ່ " ນັບຮອດປາໂຕ ສຸດທ້າຍ ກະຕ່າຍກໍເລີຍໄປຮອດດອນ.

ແລ້ວກະຕ່າຍກໍອ່ວຍໜ້າໄປຫາປາສະຫລາມ ແລະເວົ້າວ່າ: " ແຮະແຮ ! ພວກສະຫລາມຈ້າ. ຂ້ອຍຕົ້ມພວກເຈົ້າຄັກແທ້ຄັກ ວ່າ, ຂ້ອຍຍົວະມາເປັນຂົວຕໍ່ໃຫ້ ໂດຍບໍ່ຮູ້ສຶກໂຕເລີຍເນາະ."

ປາສະຫລາມພາກັນໃຈຮ້າຍຢ່າງໃຫຍ່. ປາໂຕໜຶ່ງຄະລາດ ຂຶ້ນສວາບທົ້ນເອົາຂົນກະຕ່າຍໄປໄດ້ປອຍໜຶ່ງ.

" ໂອ້ຍ! ເຈັບໆ." ກະຕ່າຍຈົ່ມ ແລະເລີ່ມຮ້ອງໄຫ້.

ຄ້ອມພໍດີເວລານັ້ນ ພະຍາຜູ້ເປັນເຈົ້າແຫ່ງດອນນີ້ກາຍມາເຫັນ ຈຶ່ງຖາມກະຕ່າຍວ່າເກີດເລື່ອງຫຍັງ, ແລະເມື່ອພະຍາຮູ້ເລື່ອງທັງໝົດ ພະອົງກໍເວົ້າວ່າ : " ໂຕເຈົ້າຕ້ອງບໍ່ຫລອກຕົ້ມຜູ້ອື່ນ ແລະບໍ່ຕົວະຜູ້ ອື່ນອີກຈັກເທື່ອ. ຖ້າໂຕເຈົ້າສັນຍາວ່າ ຈະເປັນຜູ້ຄຳຮູ້ຜູ້ດີ ເຮົາຊິບອກ ວິທີໃຫ້ເພື່ອເອົາຂົນຄືນມາ. "

" ໂດຍ, ຂ້ານ້ອຍຂໍສັນຍາ ຂໍສັນຍາອີ່ຫລີ." ກະຕ່າຍວ່າ.

ດັ່ງນັ້ນ ຕໍ່ມາພະຍາຈຶ່ງເກັບເອົາຫຍ້າແຝກ ມາເຮັດເປັນ ໝ້ອງນອນແລ້ວບອກວ່າ : " ບາດນີ້ ໂຕເຈົ້ານອນຢູ່ໃນໝ້ອງນີ້ ຕະຫລອດຄືນເດີ້, ແລ້ວຂົນຈຶ່ງຊິປົ່ງຄືນ. "

ກະຕ່າຍເຮັດຕາມຄຳບອກທຸກປະການ. ເຊົ້າມື້ຕໍ່ມາ ກະຕ່າຍກໍໄປຫາພະຍາ ແລະເວົ້າວ່າ : " ຂ້ານ້ອຍຂອບໃຈຢ່າງລົ້ນເຫລືອ. ຂົນຂອງຂ້ານ້ອຍປົ່ງຄືນມາໝົດແລ້ວ ແລະຂ້ານ້ອຍກໍສະບາຍດີຄືເກົ່າ, ຂ້ານ້ອຍຂໍຂອບອີກຂອບໃຈເປັນທີ່ສຸດ."

ເວົ້າແລ້ວ ກະຕ່າຍກໍເຕັ້ນດ່ອງໆໄປຕາມແຄມທະເລທັງຟ້ອນຮ້ອງເພງໄປພ້ອມ. ມັນບໍ່ຄິດຫລອກຕົ້ມຜູ້ໃດອີກຈັກເທື່ອ.

*ແປໂດຍ : ອຸທິນ ບຸນຍາວົງ*



# ຮູບປັ້ນກະຕັນຍູ



ປາງກ່ອນກີ້ ທີ່ປະເທດຍີ່ປຸ່ນ ມີພໍ່ເຖົ້າ ແລະ ແມ່ເຖົ້າຄູ່ໜຶ່ງ ອາໄສຢູ່ຊົນນະບົດ. ເຂົາເຈົ້າເປັນຄົນທຸກຍາກ, ທຸກມື້ສອງເຖົ້າພາກັນ ສານໝວກເຟືອງໃບໃຫຍ່ໆ, ເມື່ອສານໝວກໄດ້ຈຳນວນໜຶ່ງແລ້ວ ພໍ່ເຖົ້າກໍຈະເອົາໄປຂາຍຢູ່ໃນຕົວເມືອງໃກ້ໆ.

ມື້ໜຶ່ງ ພໍ່ເຖົ້າເວົ້າກັບແມ່ເຖົ້າວ່າ: " ມື້ອື່ນນີ້ກໍຊິແມ່ນປີໃໝ່ແລ້ວ. ຂ້ອຍຢາກໄດ້ເຂົ້າປາດໄວ້ກິນມື້ບຸນປີໃໝ່ອີ່ຫລີ. ພຽງແຕ່ມີເຂົ້າປາດ

ຈັກໜຶ່ງຫລືສອງກ້ອນກໍພໍແລ້ວ, ຖ້າບໍ່ມີພວກເຮົາກໍບໍ່ອາດສະຫລອງປີໃໝ່ໄດ້ເລີຍ. "

ຝ່າຍແມ່ເຖົ້າເວົ້າວ່າ : " ເອີຄັນຊັ້ນ ຖ້າເຈົ້າຂາຍໝວກເຫລົ່ານີ້ແລ້ວ ກໍຊື້ເຂົ້າປາດມາໂລດ, ເອົາຈັ່ງຊັ້ນສາເນາະ ? "

ດັ່ງນີ້ ແຕ່ເຊົ້າໆຂອງມື້ຕໍ່ມາ ພໍ່ເຖົ້າກໍເອົາໝວກຫ້າໃບສານແລ້ວໃໝ່ໆ ໄປຂາຍຢູ່ໃນເມືອງ. ແຕ່ວ່າຄັນໄປຮອດໃນເມືອງແລ້ວລາວຊ້ຳຂາຍໝວກບໍ່ໄດ້ແມ່ນແຕ່ໃບດຽວ, ແລະແຮ່ງເຕັກໄປກວ່ານັ້ນ ກໍຄືຫິມະເລີ່ມຕົກຢ່າງໜັກ.

ພໍ່ເຖົ້າຮູ້ສຶກອຸກໃຈຫລາຍ ຂະນະທີ່ລາວຍ່າງເຍີບໆກັບເມືອບ້ານ. ລາວໄຕ່ໄປຕາມທາງອັນເປົ່າປ່ຽວ ເລາະລຽບໄປຕາມພູ, ແລະໂດຍບໍ່ຄາດຝັນ ລາວກໍໄປພໍ້ຮູບປັ້ນດ້ວຍຫີນທີ່ຕັ້ງເປັນແຖວຢູ່ທາງອີງເປັນຮູບປັ້ນຈີໄຊ ເທວະດາ ຜູ້ປົກປ້ອງເດັກນ້ອຍ. ຫິມະປົກຫຸ້ມຮູບປັ້ນເຫລົ່ານີ້ ເປັນສີຂາວຈ່ານພ່ານຢູ່.

" ໂອ ! ຟ້າເອີຍ, ມາເປັນຕາອີ່ຕົນແທ້. " ພໍ່ເຖົ້າຈົ່ມ.

" ເຖິງແມ່ນວ່າຮູບປັ້ນຈີໄຊນີ້ເຮັດດ້ວຍຫີນກໍຕາມ ແຕ່ເພິ່ນກໍຕ້ອງໜາວທີ່ມາຢືນຢູ່ບ່ອນນີ້ທ່າມກາງຫິມະ. " ແລ້ວທັນໃດພໍ່ເຖົ້າກໍເວົ້າກັບຕົນເອງວ່າ : " ເອີ ຄຶດອອກແລ້ວວ່າຊິເຮັດແນວໃດ. "

ເວົ້າແລ້ວ ພໍ່ເຖົ້າກໍແກ້ໝວກເທື່ອລະໃບທີ່ເປັຢູ່ຫລັງອອກ ແລະເອົາມັດສຸບຫົວຮູບປັ້ນຈີໄຊໄປແຕ່ລະອົງ. ເມື່ອມາຮອດອົງສຸດທ້າຍພໍ່ເຖົ້າກໍຮູ້ແຈ້ງວ່າໝວກບໍ່ພໍກັບຮູບປັ້ນ. " ໂອ ຟ້າເອີຍ! " ຜູ້ເຖົ້າຈົ່ມ" ໝວກບໍ່ໄຄວ່ກັນຊ້ຳ." ແຕ່ໃນຂະນະນັ້ນລາວກໍຄຶດຊວາດຫາໝວກຂອງຕົນເອງ. ດັ່ງນີ້ ພໍ່ເຖົ້າຈຶ່ງຖອດໝວກຕົນເອງອອກ ແລະເອົາ



ມັດສຸບໃສ່ຫົວຮູບປັ້ນຈີໄຊອີງສຸດທ້າຍ. ແລ້ວລາວກໍຍ່າງຕໍ່ ມຸ່ງໜ້າກັບເມືອເຮືອນ.

ເວລາ ພໍ່ເຖົ້າມາຮອດເຮືອນນັ້ນ ແມ່ເຖົ້າພວມນັ່ງຖ້າຢູ່ຂ້າງເຕົາໄຟ. ພໍແຕ່ມາບເຫັນ ແມ່ເຖົ້າ ກໍຮ້ອງຂຶ້ນວ່າ :

" ໂຕເຈົ້າແຂງກະດ້າງ ຕາຍໄປແລ້ວຕັ້ງເຄິ່ງຕື້ັ້ນ ! ຮີບມາຜີງໄຟໄວໆ ໝວກເຈົ້າເດ້ລະ ເອົາໄປໃສ ?"

ພໍ່ເຖົ້າຊັ່ນຫິມະອອກຈາກຜົມ ແລ້ວຍ່າງໄປຫາເຕົາໄຟ. ລາວບອກແມ່ເຖົ້າເຖິງເລື່ອງທີ່ໄດ້ເອົາໝວກທັງໝົດສຸບໃສ່ຫົວຮູບປັ້ນເທວະດາຈີໄຊ ແລະແມ່ນແຕ່ໝວກລາວເອງກໍຍັງສະຫລະໃຫ້ໄປ. ລາວບອກແມ່ເຖົ້າວ່າເສຍໃຈຫລາຍ ທີ່ບໍ່ໄດ້ເຂົ້າປາດມາຕ້ອນ.

"ໂອຍພໍ່ເຖົ້າ ນັ້ນແມ່ນເຮັດບຸນແລ້ວທີ່ເຈົ້າໄປບົວລະບັດເທວະດາຈີໄຊ." ແມ່ເຖົ້າເວົ້າໃຫ້ກຳລັງໃຈພໍ່ເຖົ້າ, ລາວຮູ້ສຶກພູມໃຈໃນຕົວພໍ່ເຖົ້າຫລາຍ ແລະເວົ້າຕໍ່ໄປວ່າ : " ເປັນເລື່ອງປະເສີດທີ່ເຮັດບຸນຈັ່ງຊັ້ນ, ປະເສີດກວ່າໄປຫາເອົາເຂົ້າປາດທັງໝົດໃນໂລກມາ. ພວກເຮົາຄົງຊິບໍ່ເປັນຫຍັງດອກ ທີ່ບໍ່ມີເຂົ້າປາດກິນຕອນປີໃໝ່."

ມາຮອດຕອນນີ້ ກໍເປັນເວລາເດິກແລ້ວ, ດັ່ງນັ້ນສອງເຖົ້າກໍເລີຍເຂົ້ານອນ. ກ່ອນຟ້າຊິຮຸ່ງ ຂະນະທີ່ທັງສອງຍັງຫລັບປິ້ງຢູ່ ກໍມີສິ່ງໜ້າອັດສະຈັນເກີດຂຶ້ນ ຄືປຸ໊ບປັ໊ບທັນໃດ ມີສຽງດັງມາແຕ່ໄກໆເປັນສຽງຮ້ອງລຳວ່າ :

ພໍ່ເຖົ້າໃຈບຸນຍ່າງໄປຕາມຫິມະ
ແລ້ວເສຍສະຫລະໝວກໃຫ້ຮູບປັ້ນຈີໄຊ
ພວກເຮົາຈຶ່ງ ຮ້ອງໂຮດ້ວຍຄວາມສຸກໃຈ
ພາກັນໄວໆ ເອົາຂອງຂວັນມອບໃຫ້ລາວ.

ສຽງນັ້ນດັງໃກ້ເຂົ້າມາໃກ້ເຂົ້າມາ, ແລ້ວກໍໄດ້ຍິນສຽງບາດຕີນຍ່ຳມາກາງຫິມະ.

ສຽງບາດຕີນກົງມາທີ່ເຮືອນ ບ່ອນທີ່ພໍ່ເຖົ້າ ແລະແມ່ເຖົ້າພວມນອນຫລັບຢູ່. ແລະຕໍ່ມາທັນທີທັນໃດ ກໍມີສຽງດັງກ້ອງສະນັ່ນຂຶ້ນ ຄືດັ່ງມີສິ່ງໃດສິ່ງໜຶ່ງຖືກຟາດລົງຕໍ່ໜ້າເຮືອນ.

ສອງເຖົ້າພາກັນຕື່ນສະເດີດ ໂດດລົງຈາກຕຽງແລ້ວແລ່ນໄປທີ່ປະຕູໜ້າ. ເມື່ອເຂົາເຈົ້າໄຂຕູອອກ... ທວາຍເບິ່ງດູວ່າ ເຂົາເຈົ້າເຫັນຫຍັງ ? ປັດໂທ ! ຢູ່ຊື່ປະຕູຫັ້ນໂລດ ມີສາດປູໄວ້ຮຽບຮ້ອຍ ແລະຢອງຢູ່ເທິງສາດນັ້ນ ມີເຂົ້າປາດກ້ອນຂະໜາດໃຫຍ່, ກ້ອນງາມແທ້ງາມວ່າ ທັງໃໝ່ທັງຫອມທີ່ສຸດ ເທົ່າທີ່ສອງເຖົ້າເຄີຍພົບເຫັນມາ.

" ຜູ້ໃດນໍາເອົາຂອງຂວັນພິລຶກປານນີ້ມາໃຫ້ພວກເຮົາ. " ສອງເຖົ້າວ່າ ແລ້ວກໍ່ງວາກຊ້າຍງວາກຂວາດ້ວຍຄວາມປະຫລາດໃຈ.

ເຂົາເຈົ້າເຫັນຮອຍຕີນປາກົດຕາມຫິມະ ຍ່າງຈາກເຮືອນໄປ ແສງສີຂອງອະລຸນຍາມເຊົ້າອາບລົງເທິງຫິມະ, ແລະໄກອອກໄປພຸ້ນ ເຂົາເຈົ້າເຫັນຮູບປັ້ນເທວະດາຈິໄຊທີ່ກອິງພວມຍ່າງໄປທ່າມກາງຫິມະ ທັງທີ່ກອິງໃສ່ໝວກ ຊຶ່ງພໍ່ເຖົ້າສະຫລະໃຫ້ໄປຫວ່າງກ່ອນນັ້ນ. ພໍ່ເຖົ້າເວົ້າຂຶ້ນວ່າ : " ແມ່ນຮູບປັ້ນເທວະດາຈິໄຊນີ້ເອງ ທີ່ເອົາເຂົ້າປາດມາໃຫ້ພວກເຮົາ. "

ສ່ວນແມ່ເຖົ້າເວົ້າຂຶ້ນວ່າ: " ເຈົ້າເຮັດຄຸນງາມຄວາມດີຕໍ່ເພິ່ນ ໂດຍເອົາໝວກສຸບໃຫ້ເພິ່ນ ນັ້ນແລ້ວ, ດັ່ງນັ້ນເທວະດາຈຶ່ງເອົາເຂົ້າປາດມາໃຫ້ ເພື່ອສະແດງຄວາມກະຕັນຍູຮູ້ຄຸນ. "

ແລ້ວສອງເຖົ້າຜົວເມຍກໍໄດ້ສະຫລອງວັນປີໃໝ່ຢ່າງມ່ວນຊື່ນ ເພາະບັດນີ້ເຂົາເຈົ້າມີເຂົ້າປາດອັນວິເສດກິນຢ່າງບໍ່ອັ້ນ.

*ແປໂດຍ : ສຸບັນທາ ກັນລະຍາ*

# ລີງຫາງກົ້ນ



ປາງກ່ອນກີ້ ມີລີງໂຕໜຶ່ງ, ເປັນລີງນ້ອຍ ທີ່ມີນິໄສມັກຫລອກລີງ ຄືມັກຢອກ ທັງແນວໂລເລ ແລະ ທັງແນວເປັນອັນຕະລາຍ. ລີງໂຕອື່ນໆ ພະຍາຍາມສັ່ງສອນມັນຢູ່ເລື້ອຍວ່າ ຄວນຈຽມເນື້ອຈຽມຕົວໃຫ້ຫລາຍໆ ຖ້າບໍ່ດັ່ງນັ້ນ ມັນຊິເຈັບໂຕ, ແຕ່ວ່າມັນບໍ່ຍອມຟັງຄວາມຜູ້ໃດເລີຍ.

ມື້ໜຶ່ງ ລິງນ້ອຍໂຕນີ້ແລ່ນຫລົບເຂົ້າປ່າ ປີນຂຶ້ນໄປເທິງຕົ້ນໄມ້ສູງໆ ແລ້ວຈ່ອງເຄືອເຂົາ ໂຫຍັນໂຕໄປມາໂດຍບໍ່ລະມັດລະວັງ, ແລ້ວທັນໃດມັນກໍຕົກລົງໄປຖືກປ່າໜາມ. ໜາມອັນໜຶ່ງທັງຍາວ ທັງແຫລມ ສຽບປາຍຫາງມັນຈົນຊອດ.

" ໂອ໊ຍ ໂອ໊ຍ ! " ມັນຄາງ " ໂອຍມາເຈັບແທ້ ! " ແລ້ວຕໍ່ມາມັນກໍຮ້ອງສຽງດັງຄັບທີບ.

ເຫັນຕວ່າ ວ່າລິງຖ່ອຍໂຕນີ້ ບໍ່ແມ່ນລິງໃຈກ້າແຕ່ຢ່າງໃດ.

ຄ້ອມພໍດີເວລານັ້ນ ມີຊ່າງຕັດຜົມຍ່າງກາຍມາ ມືຖືມີດແຖມານຳ. ລິງມາບເຫັນຊ່າງຕັດຜົມກໍຮ້ອງໃສ່ໂລດວ່າ :

" ຊ່ອຍຂ້ອຍແດ່ຊ່າງເອີ້ຍ ! ຊ່ອຍຕັດໜາມອອກຈາກຫາງຂ້ອຍແດ່ ທຸ ທຸ. "

ດັ່ງນີ້ ຊ່າງຕັດຜົມເລີຍເອົາມີດແຖອອກມາ ກຽມຈະຕັດໜາມ, ແຕ່ຢ່າລືມວ່າ ລິງຖ່ອຍໂຕນີ້ແມ່ນລິງຂີ້ໂຍ່ຍ. ເມື່ອມັນເຫັນມີດແຖມາໃກ້ຫາງ ມັນກໍຮ້ອງວາກໆຂຶ້ນ : " ໂອ໊ຍ ! ມັນຊິບາດຂ້ອຍ. " ມັນທັງຮ້ອງທັງເຕັ້ນຂະໂຍງ ມີດແຖກໍເລີຍຕັດປາຍຫາງຂາດປຸ໊ດ !

ເມື່ອລິງເຫັນຫາງຕົນເອງຂາດ ມັນກໍໃຈຮ້າຍຂຶ້ນວື້ໆ. ມັນເວົ້າວ່າ: " ເບິ່ງດູ໊ ! ເຈົ້າເຮັດຫຍັງກັບຫາງຂ້ອຍ ! ເຈົ້າຕ້ອງເອົາຫາງຕໍ່ຄືນໃຫ້ຂ້ອຍໄດ, ຖ້າຕໍ່ບໍ່ໄດ້ ເຈົ້າຕ້ອງເອົາມີດແຖໃຫ້ຂ້ອຍ. "

ກໍແທ້ລະວ່າ ຊ່າງຕັດຜົມບໍ່ອາດຕໍ່ຫາງລິງຄືນໄດ້, ດັ່ງນີ້ ແທນທີ່ຈະເຮັດແນວນັ້ນ ລາວກໍເລີຍເອົາມີດແຖໃຫ້ລິງ. ແລ້ວລິງຖ່ອຍກໍເຂົ້າປ່າໄປ ມືຖືມີດແຖໄປນຳ. ເບິ່ງມັນເປັນຕາຫົວອີ່ຫລີ ເມື່ອມັນຫາງກິ້ນ ແຕ່ມັນກໍພໍໃຈຫລາຍທີ່ໄດ້ມີດແຖ ຈົນລືມຄິດເລື່ອງຫາງຕົນເອງ.

ມາເວລານີ້ ລີງໄປພໍ້ແມ່ເຖົ້າຄົນໜຶ່ງພວມຫ້ອນຟືນເປັນກອງຢູ່. ຟືນບາງດົ້ນນັ້ນຍາວໂພດ, ແມ່ເຖົ້າພະຍາຍາມເຮັດເປັນດົ້ນສັ້ນເພື່ອສະດວກໃນການຂົນເມືອເຮືອນ. ລີງແນມເບິ່ງຢູ່ຄາວໜຶ່ງ, ໃຈຄິດຢາກອ້າງຢູ່ແລ້ວວ່າຕົນເອງມີມີດແຖດີໆ, ແລະບາດນີ້ໂອກາດມາຮອດແລ້ວ. ດັ່ງນີ້ ມັນຈຶ່ງເວົ້າວ່າ: " ເອີນີ້ ແມ່ເຖົ້າ ຂ້ອຍມີມີດແຖຄົມດີພິລຶກໃດ, ໃຫ້ເຈົ້າຢືມຕັດຟືນກໍໄດ້. "

ແມ່ເຖົ້າດີໃຈຢ່າງໃຫຍ່, ລາວເວົ້າວ່າ : " ຂອບໃຈຫລາຍໆເດີ້ລີງ. " ເວົ້າແລ້ວລາວກໍເລີ່ມຕົ້ນເອົາມີດແຖຕັດຟືນ.

ໂຢ່ເນາະ, ມີດແຖບໍ່ແມ່ນຂອງສຳລັບຕັດຟືນ, ດັ່ງນີ້ ບໍ່ທັນພໍຄາວ ມີດແຖກໍຫລຸ້ຍ ທັງບ້ານຫລາຍບ່ອນ ເປັນແຂ້ວກ້າກຊາກ.

ເມື່ອລີງເຫັນເປັນຈັ່ງຊັ້ນ ມັນກໍໃຈຮ້າຍຂຶ້ນວີ້ໆ, ມັນເວົ້າທັ່ງໃສ່ແມ່ເຖົ້າວ່າ : " ຮວ້າຍ ! ເຈົ້າເຮັດຫຍັງຈັ່ງຊັ້ນ, ມີດແຖຂ້ອຍບ້ານໝົດ, ເຈົ້າຕ້ອງເອົາສິ່ງຂ້ອຍຄືນໃຫ້ມັນຄືເກົ່າ, ຖ້າບໍ່ດັ່ງນັ້ນເຈົ້າຕ້ອງເອົາຟືນທັງໝົດໃຫ້ຂ້ອຍ. "

ກໍແທ້ລະວ່າ ແມ່ເຖົ້າບໍ່ອາດແປງໃຫ້ມີດແຖຄືເກົ່າໄດ້. ດັ່ງນີ້ແທນທີ່ຈະເຮັດແນວນັ້ນ ລາວເລີຍເອົາຟືນໃຫ້ລີງໄປ. ແລ້ວລີງຖ່ອຍກໍເຂົ້າປ່າໄປ ເປັຟືນໄປພ້ອມ. ເບິ່ງມັນເປັນຕາຫົວອີຫລີ ເມື່ອມັນຫາງກົ້ນ, ແຕ່ມັນກໍພໍໃຈຫລາຍທີ່ໄດ້ຟືນ ຈົນລືມຄິດເລື່ອງຫາງຕົນເອງ.

ມາເວລານີ້ ລີງໄປພໍ້ແມ່ເຖົ້າອີກຄົນໜຶ່ງທີ່ພວມເຮັດເຂົ້າໜົມປັງຢູ່. ບາດນີ້ລີງມັກເຂົ້າໜົມປັງຫລາຍກວ່າສິ່ງອື່ນ ແລະຢາກກິນເປັນດັ່ນດົ້ນ. ດັ່ງນີ້ ມັນຈຶ່ງເວົ້າວ່າ: " ເອີນີ້ ແມ່ເຖົ້າ ຂ້ອຍມີຟືນຄັກຂະໜາດໃດ ທັງແຫ້ງດີ, ໃຫ້ເຈົ້າຢືມກໍໄດ້ເພື່ອໄປອົບເຂົ້າໜົມປັງ. "



ແມ່ເຖົ້າຄືນນີ້ ກໍດີໃຈຢ່າງໃຫຍ່ ເພາະວ່າຟືນທີ່ລາວໃຊ້ຢູ່ນັ້ນຍັງຂຽວໆ ແລະໄໝ້ບໍ່ດີ.

" ຂອບໃຈຫລາຍໆ ເດີລີງ " ແມ່ເຖົ້າວ່າແລ້ວກໍເອົາຟືນນຳລີງໃສ່ເຕົາໄຟ.

ບາດນີ້ ຟືນໄໝ້ດີ ແລະຮ້ອນໄວ, ໄຟກໍຮຸ່ງແຈ້ງສະຫວ່າງ. ລີງຢືນເບິ່ງຈົນເຂົ້າໜົມປັງສຸກດີທຸກກ້ອນ. ໂຫ້! ຈັ່ງແມ່ນມັນຫອມເປັນຕາກິນແທ້ໆ! ລີງຢືນເບິ່ງທັງເລຍສົບແມັບໆ. ໃນທີ່ສຸດ ແມ່ເຖົ້າກໍເລີ່ມເອົາເຂົ້າໜົມອອກຈາກເຕົາ. ມາຮອດຂັ້ນນີ້ ຟືນໄໝ້ເປັນເຖົ່າຖ່ານໄປໝົດແລ້ວ.

ເມື່ອລີງເຫັນດັ່ງນັ້ນ ມັນກໍໃຈຮ້າຍຂຶ້ນວື່ໆ. " ຮວ້າຍ ! ເຈົ້າເຮັດຫຍັງຈັ່ງຊັ້ນ ຟືນຂ້ອຍບໍ່ເຫລືອຈັກດົ້ ! " ມັນວ່າ

" ເຈົ້າຕ້ອງເອົາສິ່ງຂ້ອຍຄືນ ໃຫ້ມັນຄືເກົ່າ, ຖ້າບໍ່ດັ່ງນັ້ນ ເຈົ້າຕ້ອງເອົາເຂົ້າໜົມປັງທັງໝົດໃຫ້ຂ້ອຍ. "

" ແຕ່ຊິໃຫ້ເອົາຟືນສິ່ງຄືນຈັ່ງໃດ ? " ແມ່ເຖົ້າຖາມ

" ເຈົ້າກໍເຫັນຕວ່າ ໄຟໄໝ້ໝົດແລ້ວ."

" ຊ່ອຍບໍ່ໄດ້ " ລີງວ່າ " ເຈົ້າຕ້ອງເອົາສິ່ງຄືນ, ຖ້າບໍ່ດັ່ງນັ້ນເຈົ້າຕ້ອງເອົາເຂົ້າໜົມປັງໃຫ້ຂ້ອຍ. "

ກໍແທ້ລະວ່າ ແມ່ເຖົ້າບໍ່ອາດປັ້ນແປງເຖົ່າຖ່ານເປັນຟືນໄດ້, ດັ່ງນີ້ເພື່ອເປັນການທົດແທນ ລາວເອົາເຂົ້າໜົມປັງໃຫ້ລີງໄປທັງໝົດ ໂດຍເອົາອອກມາຈາກເຕົາຮ້ອນໆ ແລະຢອງກັນໃວ້ໃນຊາມ. ແລ້ວລີງກໍ່ອຍກໍເຂົ້າປ່າໄປ ມືຖືຊາມເຂົ້າໜົມ ທັງຍ່າງທັງກິນເຂົ້າໜົມອັນແຊບຊ້ອຍໄປນຳ. ເບິ່ງມັນເປັນຕາຫິວອີ່ຫລີ ເມື່ອມັນຫາງກົ້ນ, ແຕ່ເພາະມັນມົວກິນເຂົ້າໜົມ ມັນກໍເລີຍລືມຄິດເລື່ອງຫາງຕົນເອງ.

ມາເວລານີ້ ລີງໄປພົບພໍ່ເຖົ້າຄົນໜຶ່ງທີ່ພວມຖືຄ້ອງໜ່ວຍງາມ ເຮັດດ້ວຍທອງເຫລືອງ. ມັນເວົ້າຢູ່ໃນໃຈວ່າ ບາດນີ້ແຮ່ງຊິພິລຶກ ຄັນມີຄ້ອງແນວນີ້, ເພາະບໍ່ວ່າໜ້າໃດກໍຈະຟັງຄວາມເຮົາ. ເຂົ້າໜົມປັງກໍພໍຍັງມີເຫລືອຢູ່, ດັ່ງນີ້ ມັນຈຶ່ງເວົ້າຂຶ້ນວ່າ : " ເອີນີ້ ພໍ່ເຖົ້າ, ຂ້ອຍມີເຂົ້າໜົມປັງແຊບໆໃດ, ຂ້ອຍຄິດວ່າຊິຂໍແລກກັບຄ້ອງເກົ່າໆຂອງເຈົ້າຊັ້ນດອກ." ເວົ້າແລ້ວມັນກໍເອົາເຂົ້າໜົມປັງໃຫ້ພໍ່ເຖົ້າຊີມເບິ່ງ.

ພໍ່ເຖົ້າກິນເຂົ້າໜົມແຊບຫລາຍ ລາວເລີຍຢາກໄດ້ຕື່ມອີກ. ລາວເວົ້າວ່າ : " ຕົກລົງ ໂຕເຈົ້າເອົາຄ້ອງໄປ, ພໍ່ເຖົ້າເອງຊິເອົາເຂົ້າໜົມ. "

ແລ້ວລີງຖ່ອຍກໍຈັບເອົາຄ້ອງ ແລະປີນຂຶ້ນຕົ້ນໄມ້ ຕົ້ນທີ່ສູງທີ່ສຸດ, ປີນຂຶ້ນໄປຕາມງ່າໄມ້ນ້ອຍຈົນງ່າກ່ອງລົງ. ເບິ່ງມັນເປັນຕາຫົວອີ່ຫລີ ເມື່ອມັນຫາງກົ້ນ, ແຕ່ມັນກໍພູມໃຈໃນຕົວເອງເອົາແທ້ເອົາວ່າ ທີ່ມີຄ້ອງທອງ, ຈົນລືມຄິດເລື່ອງຫາງຕົນເອງ. ມັນເລີ່ມຕີຄ້ອງບາດແຮງໆ ທັງຮ້ອງເພງສຽງສະນັ່ນປ່າ, ມັນຮ້ອງແຮງຂະໜາດຈົນວ່າ ລີງທຸກໂຕໃນປ່າໄດ້ຍິນ. ນີ້ແມ່ນເພງທີ່ມັນຮ້ອງ :

ຂ້ອຍຄືລີງນ້ອຍງາມໜ້າຮັກ
ເກັ່ງທີ່ສຸດໃນແຜ່ນດິນ
ມີຄ້ອງສຽງມ່ວນໃນມື
ຂ້ອຍຄືຫົວໜ້າວົງດົນຕີ
ໂມ່ງ ! ໂມ່ງ ! ໂມ້ງ !...
ຂ້ອຍມີຫາງງາມເປັນກໍ່ດໍ່
ຊຶ່ງຂໍແລກກັບມີດແຖມາໄດ້
ແລ້ວກໍເອົາໄປແລກກັບຟືນ

ມີພືນໃນມືເລີຍຖືໄປແລກເຂົ້າໜົມ
ແລ້ວກໍໂຈມໄປແລກຄ້ອງ
ເປັນຄ້ອງທອງງາມອ່ອງຕ່ອງ
ໂມ່ງ ! ໂມ່ງ ! ໂມ້ງ !...

ຈັ່ງແມ່ນລີງຖ່ອຍໂຕນີ້ຮ້ອງໄດ້ຮ້ອງດີ, ທັງເບິ່ງເປັນຕາຫົວ ອີ່ຫລີເວລາມັນແກວ່ງຫາງກົ້ນຢູ່ບ່ອນສູງໆ ບ່ອນທີ່ລີງໂຕອື່ນຫລຽວເຫັນເຕັມຕາ. ແຕ່ວ່າ ສຽງ "ໂມ້ງ !" ຄັ້ງສຸດທ້າຍນັ້ນ ມັນຕີແຮງຫລາຍຈົນມັນເອງຕົກຈາກກົກໄມ້ ລີງໄປຖືກປ່າໜາມບ່ອນໃໝ່ອີກ. ພວກລີງໂຕອື່ນໆພາກັນຫົວອີກໆແອັກໆ ທັງຊ່ອຍກັນຖອດໜາມອອກໃຫ້ມັນ. ນັບແຕ່ນັ້ນມາ ໝູ່ລີງທັງຫລາຍເລີຍເອີ້ນມັນວ່າ ລີງຫາງກົ້ນ, ແລະມັນກໍບໍ່ລືມເລື່ອງຫາງກົ້ນຂອງຕົນອີກຈັກເທື່ອ.

*ແປໂດຍ : ສຸບັນທາ ກັນລະຍາ*






日本







THE TOYOTA FOUNDATION